# ອິສລາມສາສະໜາແຫ່ງສັນຕິພາບ

## الإسلام دين السلام

**(باللغة الاوسيية)**

تأليف: الدكتور إسماعيل لطفي بن الشيخ عبد الرحمن جافاكيا

ترجمة: محمد نور صالح

ໂດຍ: ທ່ານດຣ. ອິສລາມອິລ ລຸດຕໍຟີ ບິນ ອັບດຸຣຣໍມານ ຈະຟາກີຍາ

ຖອດຄວາມ: ມຸຮຳມັດນູຣ ຊໍເລະຫ໌

1446-2025

IslamHouse.com

ພິມຄັ້ງທຳອິດ : ຮ.ສ. 1427 - ຄ.ສ. 2006

ສະຫງວນລິຂະສິດໂດຍ ເວັບໄຊຕ໌ອິສລາມເຮົາສ໌

ອະນຸຍາດໃຫ້ໃຊ້ປະໂຫຍດຈາກໜັງສື ໂດຍບໍ່ບິດເບືອນ ຫຼື ປ່ຽນແປງເນື້ອຫາເດີມ

ຫາກມີຂໍ້ສົງໄສ ຄຳແນະນຳ ຫຼື ແກ້ໄຂຂໍ້ຜິດພາດໃດໆ ກະລຸນາຕິດຕໍ່ເຮົາທາງ

ເວັບໄຊຕ໌.

www.islamhouse.com

(4763)

ຮ.ສ.1427 - ຄ.ສ. .2006

ສຳນັກງານຄວາມຮ່ວມມືເພື່ອເຜີຍແຜ່ ແລະ ສອນອິສລາມ

ອັຣ-ຣ໊ອບວະຫ໌ ນະຄອນຣິຍາດ ປະເທດຊາອຸດິອາຣາເບຍ

ໂທ .+966-1-445 4900, 491 6065

www.islamhouse.com

الطبعة الأولى : 1427 هـ

جميع الحقوق محفوظة لموقع دار الإسلام. ويحق لمن شاء أخذ ما يريد من هذه المادة بشرط الأمانة في النقل وعدم التغيير في النص المنقول. والله الموفق.

وإذا كان لديك أي سؤال أو اقتراح أو تصحيح يرجى مراسلتنا على العنوان التالي:

www.islamhouse.com

(4763)

1427 هـ

المكتب التعاوني للدعوة وتوعية الجاليات بالربوة

هاتف : 4900 445 ـ 6065 491

عنوان الموقع : www.islamhouse.com

بسم الله الرحمن الرحيم

# ດ້ວຍພຣະນາມຂອງອັລລໍຫ໌

# ຜູ້ຊົງເມດຕາ ຜູ້ຊົງປຣານີຍິ່ງສະເໝີ

# ສັນລະບັນ


**ສັນຕິພາບໃນມິຕິຂອງຊື່ ແລະ ສັນຍະລັກ.............................. 1**

ອິສລາມຄືຊື່ຂອງຄວາມສັນຕິ .......................................... 2

ຄຳທັກທາຍແຫ່ງສັນຕິພາບ ............................................ 9

ລະຫມາດ ບ່ອນແຫ່ງການຊອກຫາຄວາມສະຫງົບສັນຕິ........... 14

ສະຫວັນ ວິມານແຫ່ງຄວາມສັນຕິ .................................. 15

**ສັນຕິພາບໃນມິຕິຂອງຫຼັກຄວາມເຊື່ອ................................. 18**

ອິດສະລາມແມ່ນສັນຕິພາບສາກົນ.................................. 19

**ສັນຕິພາບໃນກົດບັນຫຍັດສາສະໜາ.................................. 28**

ຊະກາດ ຫຼັກປະກັນສັງຄົມເພື່ອການສ້າງສັນຕິພາບ ................ 30

**ສັນຕິພາບໃນມິນິຂອງຄວາມສຳພັນກັບຊາວຕ່າງສາສະນິກ ......... 35**

ສູ່ສັນຕິພາບ ແລະ ການຮ່ວມມືກັນ.................................. 35

ສັນຕິພາບກັບສົງຄາມ ................................................ 42

ຄວາມຍຸຕິທຳຄືຮາກຖານຂອງສັນຕິພາບ............................ 46

ສັນຕິວິທີ ຄືພື້ນຖານຂອງການເຊື່ອມສຳພັນ ........................ 49

ຫຼັກແຫ່ງໄມຕີພາບກັບຊົນຕ່າງສາສະນິກ............................ 58

ຈຸດປະສົງຂອງສົງຄາມໃນອິສລາມ .................................... 66

ການຂ້າຜູ້ອື່ນໂດຍຄວາມຕັ້ງໃຈ........................................ 70

**ອັລກຸຣອານແຫລ່ງບັງເກີດຂອງສັນຕິພາບ** ............................ 74

ບົດລົງໂທດສຳຫຼັບຜູ້ທຳລາຍສັນຕິພາບ .............................. 78

ບົດສົ່ງທ້າຍ.............................................................. 82

# ບົດນໍາ

ແທ້ຈິງ ມວນການສັນລະເສີນທັງໝົດເປັນສິດຂອງອັລລໍຫ໌ ເຮົາກ່າວສັນລະເສີນ ຂໍຄວາມຊ່ວຍເຫລືອ ແລະ ຂໍອະໄພຈາກພຣະອົງ ເຮົາຂໍຄວາມຄຸ້ມຄອງຈາກອັລລໍຫ໌ ໃຫ້ພົ້ນຈາກຄວາມຊົ່ວຮ້າຍຂອງອາລົມໃຝ່ຕ່ໍາ ແລະ ການປະພຶດທີ່ສົມເສຍ ຜູ້ໃດທີ່ອັລລໍຫ໌ໄດ້ຊີ້ນໍາທາງແກ່ເຂົາ ແນ່ນອນວ່າ ບໍ່ມີຜູ້ໃດສາມາດເຮັດໃຫ້ເຂົາຫລົງທາງໄດ້ ແລະ ຜູ້ໃດທີ່ອັລລໍຫ໌ໄດ້ໃຫ້ເຂົາຫລົງທາງ ແນ່ນອນວ່າ ບໍ່ມີຜູ້ໃດສາມາດເຮັດໃຫ້ເຂົາໄດ້ຮັບນໍາທາງເຊັ່ນກັນ ຂໍປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດທີ່ຄວນໄດ້ຮັບການນອບນ້ອມພັກດີ ແລະ ຖະວາຍຕົນ ນອກຈາກອັລລໍຫ໌ເທົ່ານັ້ນ ຜູ້ຊົງເອກະ ແລະ ປາດສະຈາກການຕັ້ງພາຄີ ແລະ ຂໍປະຕິຍານວ່າ ມູຮໍາມັດເປັນບ່າວ ແລະ ສາສະນະທູດຂອງອັລລໍຫ໌ ຂໍໃຫ້ອັລລໍຫ໌ໄດ້ຊົງປະທານພອນ ຄວາມສັນຕິສຸກ ແລະ ຄວາມປະເສີດ ແກ່ທ່ານສາສະທູດມູຮໍາມັດ ບັນດາຍາດຕິພີ່ນ້ອງ ແລະ ສາວົກຂອງທ່ານ ພ້ອມທັງຜູ້ທີ່ດໍາເນີນຮ່ອຍຕາມທ່ານ ແລະ ຍຶດໝັ້ນໃນເສັ້ນທາງຂອງທ່ານ ຈົນຮອດວັນປະໂລກ

ນັບຕັ້ງແຕ່ເຫດການວິນາດສະກໍາ 11 ກັນຍາ 2001 ໂລກຍັງຄົງດໍາເນີນໄປກັບຜົນກະທົບ ແລະ ຂໍ້ກ່າວຫາຕ່າງໆ ທີ່ເປັນຜົນມາຈາກເຫດການນັ້ນ ເຫດການທີ່ບໍ່ມີໃຜສາມາດຮັບໄດ້ ໄດ້ກາຍເປັນເຫດຜົນທີ່ໃຫຍ່ທີ່ສຸດ ສໍາລັບຜູ້ທີ່ເປັນປະຕິປັກກັບອັລລໍຫ໌ ໃນການຈຸດປະທຸໄຟແຫ່ງການເຮັດໃຫ້ເກີດສົງຄາມອັນຍືດເຍື້ອຍາວນານ ແລະ ການປາບປາມກຸ່ມອົງກອນອິດສະລາມຕ່າງໆ ເຊິ່ງລວມທັງສະຖາບັນການສຶກສາອິດສະລາມໃນທຸກລະດັບ.

ບໍ່ແມ່ນແຕ່ເຫລົ່າມຸສລິມທີ່ເຄັ່ງຄັດໃນສາສະໜາຂອງພວກເຂົາ ແລະ ບໍ່ຍອມຈຳນົນຕົນເວັ້ນແຕ່ຕໍ່ພຣະຜູ້ເປັນເຈົ້າແຫ່ງຄວາມເອກະ ແລະ ເຕັມດ້ວຍຄຸນລັກສະນະແຫ່ງຄວາມສັນຕິ ແຕ່ພວກເຂົາຍັງຖືກກ່າວຫາໃສ່ຮ້າຍວ່າເປັນຜູ້ກໍ່ການຮ້າຍ ແລະ ຖືກຂຶ້ນບັນຊີໃຫ້ເປັນກຸ່ມທີ່ຕ້ອງເຝົ້າລະວັງ ແລະ ເປັນຄວາມອັນຕະລາຍຕໍ່ສັງຄົມໂລກ ທີ່ຕ້ອງຖືກກຳຈັດໃຫ້ໝົດສິ້ນຢ່າງຖອນຮາກຖອນໂຄນ. (ຂໍອັລລໍຫ໌ຊ່ວຍປົກປ້ອງ ແລະ ປົກປັກຮັກສາດ້ວຍເຖີດ)

ປັດຈຸບັນ ໄດ້ມີຄຳໜຶ່ງເກີດຂຶ້ນໃນສັງຄົມໂລກ ນັ້ນຄືຄຳວ່າ **"ອິສລາໂມໂຟເບຍ"** ຊຶ່ງມີຄວາມໝາຍວ່າ **ໂລກຢ້ານອິດສະລາມ** ໂດຍອາໄສຕົວກາງຜ່ານສື່ຕ່າງໆ ຂອງພວກຕາເວັນຕົກ ບາງຄັ້ງກໍ່ເຮັດດ້ວຍວິທີການກະຈ່າຍຂ່າວໃຫ້ເປັນເລື່ອງໃຫຍ່ໂຕ ຫຼື ໃນບາງເຫດການກໍ່ມີການບິດເບືອນຄວາມຈິງ ກ່າວຫາໃສ່ຮ້າຍ ແລະ ສ້າງເລື່ອງຂຶ້ນມາເອງ.

ນັບເປັນກົດເກນດັ້ງເດີມຂອງອັລລໍຫ໌ປະການໜຶ່ງ ນັ້ນຄືການສົ່ງບັນດາສາສະທູດລົງມາພ້ອມດ້ວຍຄວາມທ່ຽງແທ້ ແລະ ໃຫ້ຜູ້ລະເມີດ ຮວມທັງບັນດາຜູ້ທີ່ອະຍຸຕິທຳ ສະແດງປະຕິກິລິຍາເປັນປະຕິປັກກັບສາສະໜາ ແລະ ບັນດາສາສະທູດຂອງອັລລໍຮ໌ ແລະ ປົກສາຫາລືລະຫວ່າງກັນດ້ວຍທ່າທີ່ຫຍິ່ງຍະໂສ.

ດັ່ງນັ້ນ ຈຶ່ງເປັນສິ່ງທີ່ຫຼີກລ່ຽງບໍ່ໄດ້ສຳຫຼັບຜູ້ທີ່ເດີນບົນເສັ້ນທາງແຫ່ງຄວາມສະຫວ່າງ ແລະ ການຊີ້ນຳຈາກພຣະຜູ້ເປັນເຈົ້າ ນອກເສຍແຕ່ຕ້ອງປະກາດຄວາມຈິງ ຊີ້ແຈງທາງນຳ ແລະ ສ້າງສັນຕິ ພ້ອມທັງໂຕ້ແຍ້ງຄວາມເທັດ ຂະຈັດຄວາມບິດເບືອນ ກຳຈັດຂໍ້ກ່າວຫາ ແລະ ຍັບຍັ້ງການລະເມີດທີ່ບໍ່ຍຸດຕິທຳໃຫ້ສິ້ນໄປ.

ອັລລໍຮ໌ໄດ້ໃຫ້ຄວາມມັ່ນໃຈແກ່ຜູ້ທີ່ໃກ້ຊິດພຣະອົງວ່າ ແທ້ຈິງແລ້ວ ອຸບາຍຕ່າງໆ ຂອງມານຮ້າຍນັ້ນອ່ອນແອຍິ່ງ ແລະ ແຜນການຕ່າງໆ ຂອງຜູ້ອະຫັງການ ເຖິງແມ່ນຈະຍິ່ງໃຫຍ່ ແລະ ຍາວນານພຽງໃດ ກໍ່ຈະບໍ່ສົ່ງຜົນໃຫ້ກັບໃຜອື່ນ ນອກຈາກມັນຈະກັບໄປກໍ່ຜົນເສຍແກ່ຕົວເຂົາເອງໃນທີ່ສຸດ.

ອີກໜຶ່ງຂໍ້ກຳໜົດທີ່ປະກົດໃນອັລກຸຣອານ ຄື

﴿وَيَمْكُرُوْنَ وَيَمْكُرُ اللهُ وَاللهُ خَيْرُالْمَاكِرِيْنَ﴾ (الأنفال : 30)

ຄວາມວ່າ **"ພວກເຂົາໄດ້ວາງແຜນຮ້າຍ ອັລລໍຫ໌ເອງກໍ່ຊົງວາງແຜນ ແລະອັລລໍຫ໌ນັ້ນຊົງເປັນຜູ້ດີເລີດທີ່ສຸດໃນໝູ່ຜູ້ວາງແຜນ"** (8:30)

ເປັນສິ່ງທີ່ມີຜົນກະທົບຢ່າງ ລໍ້າເລີກໃນແຫ່ງຊີວິດການປະທະກັນລະຫວ່າງຄວາມແທ້ຈິງ ແລະ ຄວາມເທັດ ເຊິ່ງກຸ່ມພວກຂອງມານຮ້າຍໃນໝູ່ຜູ້ປະຕິເສດທີ່ຢູ່ເບື້ອງຫຼັງການກໍ່ການຮ້າຍໃນໂລກນີ້ ໄດ້ເຮັດຕົນໂອ້ອວດ ພວກເຂົາໄດ້ຮ່ວມມືກັນ ແລະ ຈັດການວາງແຜນເພື່ອຂັດຂວາງເສັ້ນທາງແຫ່ງອັລລໍຮ໌ ແຕ່ເບື້ອງຫຼັງພວກເຂົານັ້ນມີອັລລໍຮ໌ຜູ້ທີ່ຊົງຮອບຮູ້ຖືງອຸບາຍເຫຼົ່ານັ້ນ ແລະ ພຣະອົງໄດ້ກຽມແຜນການເພື່ອທຳລາຍເລອຸບາຍຂອງພວກເຂົາ ໂດຍທີ່ພວກເຂົາບໍ່ຮູ້ຕົວ.

ແທ້ຈິງ ໜ້າທີ່ຂອງບັນດາສາສະນະທູດ ແລະ ຜູ້ເຜີຍແຜ່ທັ້ງຫຼາຍ ແມ່ນການເປີດເຜີຍສັດຈະທຳໃຫ້ເປັນທີ່ປະຈັກ ແລະ ພວກເຂົາກໍ່ໄດ້ເຮັດໜ້າທີ່ນີ້ຢ່າງສົມບູນແລ້ວໃນອະດີດ ເຫລືອພຽງແຕ່ເຮົາທີ່ຈະຕ້ອງເຮັດໜ້າທີ່ອັນຊົງກຽດນີ້ໃນສະໄໝທີ່ສີ່ຕ່າງໆ ໃນໂລກຖືກຄວບຄຸມໂດຍກຸ່ມພວກທີ່ບໍ່ສະບາຍໃຈຕໍ່ຄວາມຍິ່ງໃຫຍ່ ແລະ ການເປີດ

ກວ້າງຂອງອິດສະລາມ ເຂົາໄດ້ໃຊ້ວິທີການທຸກຮູບແບບເພື່ອບຽງເບນ ພາບລັກ ແລະ ຄວາມເປັນສັນຕິຂອງອິດສະລາມ ແລະ ຍັງໄດ້ເຮັດໃຫ້ ວິຖີຊີວິດຂອງຊາວມຸສລິມຫັນເຮອອກຈາກຮາກຖານອັນດັ້ງເດີມ ນັ້ນ ຄື **ອັລກຸຣອານ** ແລະ **ຊຸນນະຮ໌** (ວິຖີຊີວິດ ແລະ ຈຣິຍະວັດຂອງທ່ານສາສະດູດ **ມຸຮັມມັດ** ຂໍຄວາມຈຳເລີນ ແລະ ຄວາມສັນຕິຈົ່ງມີແກ່ທ່ານ).

ດ້ວຍເຫດນີ້ ຜູ້ຂຽນຈຶ່ງມີຄວາມຍິນດີທີ່ຈະນຳສະເໜີບົດຄວາມນີ້ໃນຫົວຂໍ້ **"ອິສລາມ ສາສະໜາແຫ່ງສັນຕິພາບ"** ເພື່ອຂະຈັດພາບລັກອັນເລວຮ້າຍທີ່ບົດບັງອິສລາມຢູ່ ໂດຍຝີມືການປັ້ນແຕ່ງ ແລະ ສ້າງເລື່ອງຂຶ້ນຂອງພວກຕະເວັນຕົກຂອງບາງກຸ່ມທີ່ບໍ່ຫວັງດີຕໍ່ຊາວໂລກ ຜ່ານຄຳກ່າວຫາຢ່າງຄຽດແຄ້ນຜ່ານສື່ສານສາລະສົນເທດ ແລະ ຜົນງານວິຊາການ ທີ່ແຜ່ກະຈາຍໄປທົ່ວໂລກ.

ພ້ອມກັນນີ້ ຜູ້ຂຽນຈະນຳສະເຫນີພາບລັກທີ່ແທ້ຈິງອັນງົດງາມຂອງອິສລາມ ດັ່ງທີ່**ອັລລໍຮ໌** ໄດ້ປະທານລົງມາເປັນວິວອນແຫ່ງພຣະອົງ ແລະ ດັ່ງທີ່ **ທ່ານສາສະນະທູດ** (ຂໍຄວາມຈຳເລີນ ແລະ ຄວາມສັນຕິຈົ່ງມີແກ່ທ່ານ) ໄດ້ປະຕິບັດໄວ້ເປັນແບບຢ່າງ, ເພື່ອໃຫ້ຊາວ **ມຸສລິມ** ແລະ ຜູ້ນັບຖືສາສະໜາອື່ນໄດ້ຮັບຊາບ ແລະ ເຮັດຄວາມເຂົ້າໃຈກ່ຽວກັບອຸດົມການ ແລະ ການພິທັກປົກປ້ອງຂອງອິສລາມຕໍ່ສັນຕິພາບຂອງມະນຸດໃນມຸມມອງຂອງອິສລາມ ຮວມທັງ **ການຮັບປະກັນໃນຄວາມປອດໄພ ແລະ ສິດຂອງພວກເຂົາ** ໂດຍບໍ່ວ່າພວກເຂົານັບຖືສາສະໜາໃດ ສຸດທ້າຍຄືການຊີ້ແຈງເຖິງ **ຂໍ້ຫ້າມທີ່ອິສລາມເນັ້ນຫນັກ** ບໍ່ໃຫ້ມີການໃຊ້ຄວາມຄັ່ງສຸດໂຕ່ງ ບໍ່ໃຫ້ກໍ່ຄວາມຮຸນແຮງ ແລະ ການລະເມີດລຸກລ້ຳໃນທຸກຮູບແບບ

ບົດຄວາມນີ້ມີຈຸດປະສົງທີ່ຈະສື່ໃຫ້ຜູ້ອ່ານເຂົ້າໃຈວ່າ **ອິສລາມ ແລະ ສັນຕິພາບ** ເປັນຄູ່ແຝດທີ່ແຍກອອກຈາກກັນບໍ່ໄດ້ ແລະ ບໍ່ໄດ້ ແລະ ບໍ່ໄດ້ເປັນສິ່ງໃດນອກຈາກສອງດ້ານຂອງລຽນອັນດຽວ ເລີ່ມດ້ວຍການເນັ້ນຍ້ຳ**ຊື່ເອີ້ນຂອງສາສະໜາ** ແລະ **ສັນຍະລັກຂອງອິສລາມ** ຈາກນັ້ນຈະເຫັນໄດ້ຢ່າງປະຈັກຂຶ້ນໃນມິຕິຂອງ **ຫລັກຄວາມເຊື່ອ** ແລະ **ກິດບັນຍັດຂອງສາສະໜາ** ສຸດທ້າຍຄືການຕອກຍ້ຳໃຫ້ເຫັນຢ່າງຊັດເຈນໂດດເດັ່ນຫຼາຍຂຶ້ນອີກໃນ **ມິຕິການສ້າງຄວາມສຳພັນກັບຜູ້ອື່ນ**, ບໍ່ວ່າຈະເປັນ **ມຸສລິມ ຫລື ບໍ່ແມ່ນມຸສລິມກໍ່ຕາມ.**

ໃນຕອນທ້າຍ ມີການຮຽກຮ້ອງໃຫ້ທຸກຄົນປະຕິບັດຕາມ **ຄວາມພໍໃຈຂອງພຣະເຈົ້າຜູ້ຊົງສ້າງ** ແລະ **ຜູ້ເປັນເຈົ້າແຫ່ງສັນຕິ**, ເພື່ອຮັບການຊີ້ນຳຂອງ **ອັນ-ກຸຣອານ** ສູ່ເສັ້ນທາງແຫ່ງສັນຕິພາບ ເປັນສັນຕິພາບ ແຫ່ງ**ຄວາມເມດຕາໃນສອງໂລກ** ເພື່ອຮັບຜົນຕອບແທນເປັນສະຫວັນວິມານອັນສັນຕິ ໃນວັນທີ່ມະນຸດໄດ້ເຂົ້າເຝົ້າພຣະອົງດ້ວຍສັນຕິ ແລະ **ຄຳທັກທາຍຂອງຄົນໃນສະຫວັນ**ກໍຄືການກ່າວ **"ສະລາມ"** ຄຳເວົ້າແຫ່ງຄວາມສັນຕິ

ທັງໝົດທີ່ໄດ້ກ່າວມານັ້ນ ຜູ້ຂຽນບໍ່ໄດ້ກ່າວໂດຍໃຊ້ຄວາມລຳອຽງ ຫລື ກ່າວອ້າງຂຶ້ນໂດຍບໍ່ມີຫລັກຖານທີ່ເຊື່ອຖືໄດ້ ທະວ່າໄດ້ຢືນຢັນ ແລະ ອ້າງດ້ວຍຫຼັກຕົ້ນຕໍມາຈາກຄຳສັ່ງສອນຂອງອິສລາມ ແລະ **ຄວາມເປັນຈິງທີ່ພິສູດໄດ້** ຈາກອະດີດຈົນເຖິງປັດຈຸບັນ ດັ່ງນັ້ນ,ຜູ້ຂຽນຂໍເຊີນຊວນໃຫ້ທຸກທ່ານໄດ້ໂປດພິຈາລະນາ ສິ່ງທີ່ຈະອະທິບາຍຕໍ່ໄປນີ້

# ສັນຕິພາບ

## ໃນມິຕິຂອງຊື່ ແລະ ສັນຍະລັກ

ນັບເປັນສິ່ງທີ່ປາດສະຈາກຂໍ້ສົງໃສໃດໆ ວ່າອິດສະລາມຄືສາສະໜາ ທີ່ດຳລົງໄວ້ເຊິ່ງຄວາມເມດຕາປານີ, ເປັນຄຳສອນແຫ່ງສັນຕິພາບ ແລະເສັ້ນທາງອັນຊື່ກົງ ບໍ່ມີໃຜທີ່ຈະໂຕ້ແຍ້ງສັດຈະທຳດັ່ງກ່າວ ຍົກເວັ້ນຜູ້ທີ່ບໍ່ຮູ້ ແລະ ຜູ້ທີ່ບໍ່ຮູ້ຢ່າງແທ້ຈິງໃນຄຳສອນຂອງອິດສະລາມ ຜູ້ມີອະຄະຕິ ຫຼືຈອງຫອງທີ່ບໍ່ຍອມຮັບຄວາມຈິງ ແລະ ບໍ່ຍອມຮັບຕໍ່ຫຼັກຖານ. ໃນຖານະທີ່ເປັນຊາວມຸດສະລິມຄົນໜຶ່ງ, ຂ້າພະເຈົ້າບໍ່ເຄີຍພົບຄຳສອນຫຼືສາສະຫນາໃດໆ ໃນໂລກນີ້ທີ່ຍຶດຫມັ້ນໃນເລື່ອງສັນຕິພາບທັງພາກທິດສະດີ ແລະ ການປະຕິບັດ ທີ່ສົມບູນ ແລະ ປະເສີດຫຼາຍໄປກວ່າສິ່ງທີ່ປາກົດຢູ່ໃນຄຳສອນຂອງອິດສະລາມ ສັນຕິພາບທີ່ແທ້ຈິງຈະບໍ່ເກີດຍົກເວັ້ນດ້ວຍຄັນລອງແຫ່ງອິດສະລາມເທົ່ານັ້ນ ຈຶ່ງຖືໂອກາດນີ້ຂໍເຊີນບັນດາທ່ານຜູ້ອ່ານທີ່ມີກຽດມາຮ່ຳຮຽນເຮັດຄວາມເຂົ້າໃຈ ພ້ອມທີ່ຈະຮັບເອົາອິດສະລາມເປັນວິທີແຫ່ງການດຳລົງຊີວິດອັນແທ້ຈິງ.

## ອິສລາມຄືຊື່ຂອງຄວາມສັນຕິ

ສິ່ງຫນຶ່ງທີ່ສາມາດຢືນຢັນວ່າໄດ້ ອິດສະລາມເປັນສາສະໜາແຫ່ງສັນຕິພາບ ຄື ການທີ່ອັລລໍຫ໌ຂະນານເອີ້ນສາສະໜານີ້ວ່າ "ອິສະລາມ" ເຊິ່ງມີຣາກສັບມາຈາກຄຳວ່າ "ອັສ-ສິລມ໌" ເຊິ່ງມີຄວາມໝາຍວ່າ "ສັນຕິພາບ" ດັ່ງທີ່ພຣະອົງໄດ້ກ່າວວ່າ:

﴿إِنَّ الدِّيْنَ عِنْدَ اللهِ الإِسْلاَمُ﴾ ( آل عمران : 19)

ຄວາມໝາຍວ່າ ແທ້ຈິງສາດສະຫນາຂອງອັລລໍຫ໌ ແມ່ນ ອິສລາມ (3:19). ພຣະອົງອັລລໍຍັງໄດ້ກ່າວອີກວ່າ:

﴿وَمَنْ يَبْتَغِ غَيْرَ الإِسْلاَمِ دِيْناً فَلَنْ يُقْبَلَ مِنْ هُ وَهُوَ فِي الآخِرَةِ مِنَ الآخِرَةِ مِنَ الخْاَسِرِيْنَ﴾ (آل عمران : 85)

ຄວາມໝາຍວ່າ **ແລະຜູ້ໃດທີ່ສະແຫວງຫາສາດສະຫນາອື່ນນອກເຫນືອຈາກອິດສະລາມ, ແນ່ນອນ ວຽກງານຂອງລາວຈະບໍ່ຖືກຍອມຮັບ ແລະໃນໂລກໜ້າລາວຈະຢູ່ໃນບັນດາຜູ້ຂາດທຶນ** (3:85)

ຜູ້ໃດທີ່ໄຕ່ຕອງໂອງການດັ່ງກ່າວຈະພົບວ່າ ສັນຕິພາບໃນສາສະໜາອິດສະລາມ ຄືສັນຕິພາບທີ່ຈະບໍ່ພົບກັບຄວາມຂາດທຶນ ແລະຄວາມໂສກເສົ້າໃນພາຍຫລັງບໍ່ວ່າຈະຢູ່ໃນໂລກນີ້ ຫຼື ໂລກໜ້າ.

ບໍ່ພຽງແຕ່ເທົ່ານັ້ນ ອັລລໍຫ໌ຍັງໄດ້ຂະຫນານນາມຜູ້ທີ່ຍຶດຫມັ້ນໃນສາສະໜານີ້ວ່າ **"ມຸສລິມີນ"** ຕັ້ງແຕ່ຍຸກສະໄໝສາສະນະທູດຄົນກ່ອນໆ ຈົນເຖິງສາສະນະທູດຄົນສຸດທ້າຍຄື ມູຮຳມັດ ຜູ້ທີ່ເກີດໃນປີ

ຣ.ສ. 570 (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ດັ່ງທີ່ປະກົດຢູ່ໃນອັລກຸຣອານວ່າ:

﴿مِلَّةَ أَبِيْكُمْ إِبْرَاهِيْمَ هُوَ سَمَّاكُمُ الْمُسْلِمِيْنَ مِنْ قَبْلُ وَفِي هَذَا وُلِيَّش داً عَلَيْكُمْ وَتَكُوْنُوْا شُهَدَاءَ عَلَى النَّاسِ﴾ (الحج : 78)

ຄວາມໝາຍວ່າ ນີ້ແມ່ນສາສະໜາຂອງອັບຣາຮາມບິດາແຫ່ງພວກເຈົ້າ, ພຣະອົງຊົງຂະນານຊື່ພວກເຈົ້າວ່າ "ມຸສລິມີນ" ທັ້ງໃນພຣະຄຳພີກ່ອນໜ້ານີ້ ແລະ ໃນພຣະຄຳພີ(ອັລກຸຣອານ) ນີ້ເພື່ອຣໍຊູລ (ສາສະນະທູດ) ຈະເປັນສັກຂີພະຍານແກ່ພວກເຈົ້າ ແລະ ພວກເຈົ້າຈະເປັນສັກຂີພະຍານຕໍ່ມວນມະນຸດ (22 : 78)

ການໄດ້ຮັບການຂະນານນາມເຊັ່ນເປັນສິ່ງທີ່ທ່ານສາດສະດາມູຮຳມັດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໄດ້ຕະຫນັກ ແລະ ໃຫ້ຄວາມສຳຄັນເປັນຢ່າງຍິ່ງ ປາກົດໃຫ້ເຫັນໃນຄຳປະກາດຂອງທ່ານວ່າ **"ຂ້ອຍເປັນມຸສລິມ"**[1] ແລະ ໃນຄຳເວົ້າຂອງທ່ານອີກບົດຫນຶ່ງວ່າ **"ຜູ້ໃດທີ່ເອີ້ນຄົນອື່ນແບບຈາຮີລີຍະຫ໌ (ດ້ວຍຄຳເວົ້າທີ່ດູຖູກຫຍຽດຫຍາມຄົນອື່ນ ບໍ່ວ່າຈະເປັນວົງຕະກູນ, ສີຜິວ, ຊັ້ນວັນນະເຊື້ອຊາດ, ແລະອື່ນໆ, ເຊິ່ງຂັດກັບຫຼັກສາສະໜາອິດສະລາມ) ແນ່ນອນລາວຈະຖືກລົງໂທດໃນໄຟນະລົກ"** ມີຄົນຖາມທ່ານສາດສະດາວ່າ, "ໂອ້ ທ່ານຜູ້ເປັນ ສາສະນະທູດຂອງອັລລໍຫ໌ ເຖິງແມ່ນວ່າລາວຖືສິນອົດ ແລະ ລະຫມາດກໍ່ຕາມແນວນັ້ນຫວາ? ທ່ານຕອບວ່າ **"ແມ່ນ" ເຖິງແມ່ນລາວຈະຖືສິນອົດ ແລະ ລະຫມາດແລ້ວກໍ່ຕາມສະນັ້ນ ພວກທ່ານຈົ່ງເອີ້ນ**

**ດ້ວຍຊື່ທີ່ອັລລໍຫ໌ ໄດ້ຂະນານໃຫ້ພວກເຂົາວ່າ: ມຸສລິມ (ຜູ້ທີ່ນັບຖືອິສລາມ ແລະ ມອບໝາຍຕົນຕໍ່ອັລລໍຫ໌) ມຸມິນີນ (ຜູ້ສັດທາຕໍ່ອັລລໍຫ໌) ໂອ້ຜູ້ເປັນບ່າວຂອງອັລລໍຫ໌"[2]**

ດ້ວຍເຫດນີ້, ມຸສລິມຈະມີຄວາມຮູ້ສຶກວ່າມີກຽດສັກສີແລະຄວາມພາກພູມໃຈ. ຖ້າເພິ່ນຖືກເອີ້ນດ້ວຍນາມອັນມີກຽດສະຫງ່າລາສີ ເພາະເປັນຊື່ທີ່ຖືກປະທານໂດຍອົງອະພິບານແຫ່ງສາກົນຈັກກະວານ.

ທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ຍັງໄດ້ກ່າວໄວ້ອີກວ່າ **"ຄວາມດີຕ່າງໆ ຈະປະກົດໃຫ້ເຫັນເປັນຕົວຕົນໃນວັນສິ້ນໂລກ ລະຫມາດຈະປາກົດຕົວ ແລະ ກ່າວວ່າ ໂອ້ ອັລລໍຫ໌ ຂ້ອຍຄືລະຫມາດ, ອັລລໍຫ໌ຕອບວ່າ: ເຈົ້າໄດ້ດຳລົງຢູ່ໃນຄວາມດີ ແລະ ການບໍລິຈາກຈະປາກົດຕົວ ແລະ ກ່າວວ່າ ໂອ້ ອັລລໍຫ໌ ຂ້ອຍຄືການບໍລິຈາກທານ, ອັລລໍຫ໌ຕອບວ່າ: ເຈົ້າໄດ້ດຳລົງຢູ່ໃນຄວາມດີ, ຫຼັງຈາກນັ້ນການຖືສິນອົດປາກົດພ້ອມກ່າວ ໂອ້ອັລລໍຫ໌ ຂ້ອຍຄືການຖືສິນອົດ, ອັລລໍຫ໌ຕອບວ່າ: ເຈົ້າໄດ້ດຳລົງຢູ່ໃນຄວາມດີ,ຫຼັງຈາກນັ້ນ ຄວາມດີທຸກປະເພດກໍ່ຈະປາກົດຕົວ ແລະ ອັລລໍຫ໌ໄດ້ຕອບຮັບວ່າ: ເຈົ້າໄດ້ດຳລົງຢູ່ໃນຄວາມດີ ແລະ ອິດສະລາມຈະປາກົດຕົວ ພ້ອມກ່າວວ່າ: ໂອ້ອັລລໍຫ໌ ພຣະອົງຄື ອັສ-ສະລາມ ຜູ້ເຕັມໄປດ້ວຍສັນຕິ ແລະ ຂ້ອຍຄືອິດສະລາມ ອັລລໍຫ໌ຈຶ່ງຕອບວ່າ:**

---

[1] ມຸສລິມ (ໝາຍເລກ 1641)

[2] ອະຫມັດ (4:130). ອັດຕັຮມີຊີ (ໝາຍເລກ 2863). ອິບນຸ ຄຸໄຊມະຫ໌ (ໝາຍເລກ 1895). ອັລ-ຫາກິມ (1:421) ໂດຍໄດ້ກ່າວວ່າເປັນຫະດີຊຊໍຮີຫ໌ ແລະ ອີມາມຊະຮະບີກໍ່ເຫັນນຳ

﴿وَمَنْ يَبْتَغِ غَيْرَ الإِسْلاَمِ دِيْناً فَلَنْ يُقْبَلَ مِنْ هُ وَهُوَ فِي الآخِرَةِ مِنَ الآخِرَةِ مِنَ الخَاسِرِيْنَ﴾ (آل عمران : 85)

ຄວາມໝາຍວ່າ **ແລະຜູ້ໃດທີ່ສະແຫວງຫາສາດສະໜາອື່ນນອກເໜືອຈາກອິດສະລາມ, ແນ່ນອນ ວຽກງານຂອງລາວຈະບໍ່ຖືກຍອມຮັບ ແລະໃນໂລກໜ້າລາວຈະຢູ່ໃນບັນດາຜູ້ຂາດທຶນ (3:85)** [3]

ອິດສະລາມຄືສາສະໜາ ທີ່ອັລລໍຫ໌ຊົງໂປດປານ ແລະ ປະທານໃຫ້ເປັນວິຖີແຫ່ງການດຳລົງຊີວິດ ສຳລັບບ່າວຜູ້ໃຝ່ຄຸນນະທຳທັ້ງຫຼາຍຂອງພຣະອົງ. ອັລລໍຫ໌ຊົງພໍພຣະໄທບັນດາຜູ້ທີ່ຍຶດໝັ້ນໃນອິສລາມທັ້ງໃນໂລກນີ້ ແລະ ໃນໂລກໜ້າ ພຣະອົງໄດ້ກ່າວໃນ ອັລກຸຣອານວ່າ:

﴿اليَوْمَ أَكْمَلْتُ لَكُمْ دِيْنَكُمْ وَأَتْمَمْتُ عَلَيْكُمْ نِعْمَتِيْ وَرَضِيْتُ لَكُمُ الإِسْلاَمَ دِيْناً﴾ (المائدة : 3)

ຄວາມວ່າ **ມື້ນີ້ (ຫມາຍເຖິງ ໃນມື້ແຫ່ງການຊຸມນຸມຢູ່ທີ່ທຸ່ງອະຣໍຟະຫ໌ໃນລະຫວ່າງພິທີຮັຈ ປີສຸດທ້າຍຂອງຊີວິດຂອງທ່ານ ສາດສະດາ ມູຮໍາມັດ) ຂ້າໄດ້ເຮັດໃຫ້ສາດສະຫນາຂອງເຈົ້າສົມບູນແລ້ວ ແລະ ຂ້າໄດ້ມອບການປະທານຂອງຂ້າແກ່ພວກເຈົ້າຢ່າງຄົບຖ້ວນ ແລະ ຂ້າພໍໃຈໃຫ້ອິສລາມເປັນສາສະໜາຂອງພວກທ່ານ** (3:85)

ດັ່ງນັ້ນ ຈຶ່ງເຫັນໄດ້ຊັດແຈ້ງວ່າ ທ່ານສາສະນະທູດມູຮໍາມັດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ບໍ່ໄດ້ຈາກໂລກນີ້ໄປເວັ້ນ ເສຍແຕ່ໄດ້ນຳກົດເກນບົດບັນຫຍັດແຫ່ງອິສລາມ ມາເຜີຍແຜ່ຢ່າງຄົບຖ້ວນສົມບູນທີ່ສຸດແລ້ວແກ່ມວນມະນຸດຊາດ ຄວາມຄົບຖ້ວນ

ແລະ ຄວາມສົມບູນແບບຂອງກົດຫມາຍອິດສະລາມ ເປັນສິ່ງທີ່ພຽງພໍແລ້ວທີ່ຈະສ້າງສັນຕິພາບທັ້ງໃນໂລກນີ້ ແລະ ໂລກໜ້າ.

ອິສລາມຄືການນອບນ້ອມຕົນແກ່ອັລລໍຫ໌ ພຣະຜູ້ເປັນເຈົ້າຂອງສາກົນຈັກກະວານ ຕາມຕົວຢ່າງທີ່ປະກົດຢູ່ໃນຄຳສັ່ງຂອງອັລລໍຫ໌ແກ່ທ່ານສາສະນະທູດອິບຣໍຫີມ (ອັບຣາຮາມ) ວ່າ:

﴿إِذْ قَالَ لَهُ رَبُّهُ أَسْلِمْ قَالَ أَسْلَمْتُ لِرَبِّ العَالَمِيْنَ﴾ (البقرة : 131)

ຄວາມວ່າ **(ຈົ່ງລຳເລີກເຖີດ ໂອ້ ມູຮຳມັດ) ໃນຂະນະທີ່ພຣະຜູ້ເປັນເຈົ້າຂອງອິບຣໍຫີມໄດ້ກ່າວກັບເຂົາວ່າ ຈົ່ງມອບຕົນເຖີດ ເຂົາກ່າວວ່າຂ້າໄດ້ມອບຄວາມພັກດີຕໍ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານແລ້ວ** (2: 131)

ນີ້ແມ່ນສາດສະໜາຂອງອິບຣໍຫີມ ຜູ້ເຊິ່ງເປັນພໍ່ແຫ່ງສາສະນາທູດທັ້ງສາມຄື: ມູຊາ (ໂມເຊສ ຂອງຊາວຢິວ), ອີຊາ (ພຣະເຢຊູຂອງຊາວຄຣິດສະຕຽນ) ແລະ ມູຮຳມັດ (ຂໍຄວາມສັນຕິຈົ່ງມີແດ່ທ່ານທັ້ງສາມ) ສາດສະໜາອິສລາມອັນບໍລິສຸດ ແລະ ຊັດເຈນ ເປັນສາດສະໜາທີ່ອິບຣໍຫີມ ໄດ້ສັ່ງເສຍໃຫ້ແກ່ບັນດາລູກໆຫລານໆຂອງທ່ານໃຫ້ຍຶດປະຕິບັດ ແລະ ຈະເລີນຮອຍຕາມ ແລະ ຜູ້ທີ່ປະເສີດສຸດໃນບັນດາລູກຫລານຂອງທ່ານ ແມ່ນທ່ານສາສະນາທູດມູຮຳມັດ ລູກຊາຍຂອງ ອັບດູລລໍຫ໌ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ຜູ້ທີ່ເປັນສາສະນາທູດຄົນສຸດທ້າຍ. ທີ່ໄດ່ເຮັດໜ້າທີ່ເຊີນຊວນ ແລະ ເຜີຍແຜ່ອິສລາມ ແກ່ມວນມະນຸດ ອິດສະລາມແມ່ນຜົນພວງຂອງການດູອາ (ຄຳອ້ອນວອນ) ທີ່ອິບຣໍຫີມໄດ້ວອນຂໍຕໍ່ອັລລໍຫ໌ ດັ່ງທີ່ປະກົດໃນອັລກູຣອານວ່າ

﴿رَبَّنَا وَاجْعَلْنَا مُسْلِمَيْنِ لَكَ وَمِنْ ذُرِيَّتِنَا أُمَّةً مُّسْلِمَةً لَّكَ وَأَرِنَا مَنَاسِكَنَا وَتُبْ عَلَيْنَا إِنَّكَ أَنْتَ التَّوَّابُ الرَّحِيْمُ، رَبَّنَا وَابْعَثْ فِيْهِمْ رَسُوْلاً مِّنْهُمْ يَتْلُوْ عَلَيْهِمْ آيَاتِكَ وَيُعَلِّمُهُمُ الكِتَابَ وَالحِكْمَةَ وَيُزَكِّيْهِمْ إِنَّكَ أَنْتَ الْعَزِيْزُ الْحَكِيْمُ﴾ (البقرة : 128– 129)

ຄວາມວ່າ **ໂອ້ພຣະຜູ້ເປັນເຈົ້າຂອງພວກເຮົາ ຂໍພຣະອົງເຮັດໃຫ້ເຮົາທັງສອງ (ອິບຣໍຫີມ ແລະ ລູກຊາຍຂອງທ່ານ ນັ່ນຄື ອິສມາອີນ) ເປັນຜູ້ນອບນ້ອມຕໍ່ພຣະອົງ ແລະ ຂໍໂປດໃຫ້ມີຂຶ້ນຈາກລູກຫລານຂອງພວກເຮົາ ເຊິ່ງປະຊາຊາດທີ່ນອບນ້ອມຍອມຮັບຕໍ່ພຣະອົງ ແລະ ໂປດສະແດງແກ່ເຮົາເຊິ່ງພິທີການເຮັດຮັຈຂອງພວກເຮົາ ແລະ ໂປດກະລຸນາໃຫ້ອະໄພໂທດແກ່ພວກເຮົາ ແທ້ຈິງແລ້ວ, ພຣະອົງເປັນຜູ້ໃຫ້ອະໄພ ຊົງເອັນດູເມດຕາ ຂໍພຣະອົງໃຫ້ບັງເກີດໃນໝູ່ພວກເຂົາ (ຄືລູກຫລານຂອງເຮົາທັ້ງສອງ) ເຊິ່ງສາສະນະທູດຈາກພວກເຂົາເອງໃຫ້ເຂົາອ່ານດຳລັດຂອງພຣະອົງແກ່ພວກເຂົາ ໃຫ້ເຂົາສອນພວກເຂົາເຊິ່ງມະຫາຄຳພີ ແລະ ວິທະຍາຄວາມຮູ້ ແລະ ໃຫ້ເຂົາຂັດເກົາພວກເຂົາ ແທ້ຈິງ ພຣະອົງເປັນຜູ້ຊົງເດຊານຸພາບທີ່ຍິ່ງໃຫຍ່ ແລະ ເປັນຜູ້ຊົງຍິ່ງດ້ວຍຄວາມປີຊາສາມາດ** (2:128-129)

ອັລລໍຫ໌ຍັງໄດ້ກ່າວວ່າ:

﴿بَلَى مَنْ أَسْلَمَ وَجْهَهُ للهِ وَهُوَ مُحْسِنٌ فَلَهُ أَجْرُهُ عِنْدَ رَبِّهِ وَلاَ خَوْفٌ عَلَيْهِمْ وَلاَ هُمْ يَحْزَنُوْنَ﴾ (البقرة : 112)

ຄວາມວ່າ **ບໍ່ແມ່ນຕາມສິ່ງທີ່ຊາວຢິວ ແລະ ຊາວຄຣິດສະຕຽນກ່າວອ້າງແຕ່ຢ່າງໃດ ຜູ້ໃດທີ່ມອບໃບໜ້າຂອງຕົນ (ຫມາຍເຖິງຊີວິດ ແລະ ຮ່າງກາຍ) ໃຫ້ແກ່ອັລລໍຫ໌ ແລະ ໃນເວລາດຽວກັນລາວເປັນຜູ້ເຮັດທີ່ດີ. ລາວຈະໄດ້ຮັບລາງວັນຂອງລາວກັບພຣະຜູ້ເປັນເຈົ້າຂອງລາວ ແລະ ຈະບໍ່ມີຄວາມຢ້ານກົວໃດໆ ຕໍ່ພວກເຂົາ ແລະ ພວກເຂົາທັ້ງຫຼາຍກໍ່ຈະໂສກເສົ້າເສຍໃຈ** (2:112)

ສະນັ້ນ ການຍອມຈຳນົນມອບໝາຍຊີວິດຂອງຕົນຕໍ່ອຳນາດແຫ່ງພຣະເຈົ້າອົງດຽວ. ໂດຍປະຕິບັດຕາມຄຳແນະນຳຂອງສາສະນະທູດມຸຮໍາມັດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ແມ່ນສາດສະຫນາອິດສະລາມທີ່ທຣູ່ງແທ້ທີ່ຈະເຮັດໃຫ້ບັງເກີດຄວາມສັນຕິສຸກອັນທີ່ແທ້ຈິງ. ທີ່ບໍ່ມີຄວາມຢ້ານກົວ ຫຼື ຄວາມໂສກເສົ້າເສຍໃຈ, ທັງໃນໂລກນີ້ ແລະ ໃນໂລກໜ້າ.

ແທ້ຈິງ ຄົງອາດບໍ່ມີໃຜຢູ່ເຖິງຫນ້າແຜ່ນດິນຂອງໂລກນີ້ ທີ່ຈະອັບຈົນໄປກວ່າຜູ້ທີ່ບໍ່ເຄີຍໄດ້ສຳຜັດຄວາມສະຫງົບທາງຈິດໃຈທີ່ໄດ້ມາຈາກການເຄົາລົບພັກດີອັລລໍຫ໌ ແລະ ຍອມມອບຕົວຕໍ່ພຣະອົງ

ດ້ວຍເຫດນີ້ ປວງບ່າວຂອງອັລລໍຫ໌ທັ້ງຫຼາຍ ຈົ່ງປະຕິບັດຕາມຄຳສັ່ງຂອງອັລລໍຫ໌ທີ່ໄດ້ປະທານດຳລັດວ່າ:

﴿فَلْيَعْبُدُوْا رَبَّ هَذَا الْبَيْتِ الَّذِيْ أَطْعَمَهُمْ مِنْ جُوْعٍ وَآمَنَهُمْ مِنْ خَوْفٍ﴾ (قريش : 3-4)

ຄວາມວ່າ **ສະນັ້ນ ຈົ່ງໃຫ້ພວກເຂົາເຄົາລົບພັກດີພຣະຜູ້ເປັນເຈົ້າຂອງເຮືອນຫຼັງນີ້ (ກະອ໌ບະຫ໌) ຜູ້ຊົງໃຫ້ອາຫານແກ່ພວກເຂົາຈົນຣອດ**

**ພົ້ນຈາກຄວາມອຶດຫິວ ແລະ ຊົງໃຫ້ຄວາມປອດໄພແກ່ພວກເຂົາໃຫ້ພົ້ນຈາກຄວາມຢ້ານກົວ.** (106:3-4)

ຊຶ່ງເປັນສັນຕິພາບ ແລະ ສັນຕິສຸກທີ່ປະເສີດເຫລືອເກີນ !!

**ຄຳທັກທາຍແຫ່ງສັນຕິພາບ**

ສິ່ງຫນຶ່ງທີ່ຢືນຢັນເຖິງຄວາມມຸ່ງຫມັ້ນຂອງອິດສະລາມຕໍ່ການສ້າງສາສັນຕິພາບ ແມ່ນ ການກຳນົດໃຫ້ **"ສະລາມ"** ເປັນຄຳທີ່ໃຊ້ໃນການທັກທາຍລະຫວ່າງສັດທາຊົນທັ້ງໃນໂລກນີ້ ແລະ ໃນໂລກໜ້າ, ຄຳນັ້ນແມ່ນ **"ອັສສະລາມມຸ ອະໄລກຸມ ວະເຣາະມະຕຸລລໍຫ໌"** ຊຶ່ງມີຄວາມຫມາຍວ່າ ຄວາມສັນຕິສຸກ ແລະ ຄວາມໂປດປານແຫ່ງອັລລໍຫ໌ຈົ່ງປະສົບຂຶ້ນກັບທ່ານ.

ອິດສະລາມຍັງສັ່ງໃຫ້ຊາວມຸດສະລິມກ່າວຄຳທັກທາຍອັນປະເສີດນີ້ທຸກຄັ້ງທີ່ພົບເຈີກັນ ຫຼື ຍາມເຂົ້າເຮືອນ.

ອັລລໍຫ໌ໄດ້ກ່າວວ່າ:

﴿فَإِذَا دَخَلْتُمْ بُيُوْتاً فَسَلِّمُوا عَلَى أَنْفُسِكُمْ تَحِيَّةً مِنْ عِنْدِ اللهِ مُبَارَكَةً طَيِّبَةً﴾ (النور : 61)

ຄວາມໝາຍວ່າ **ເມື່ອຍາມໃດທີ່ເຈົ້າເຂົ້າໄປໃນເຮືອນ, ຈົ່ງກ່າວສະລາມໃຫ້ກັບ (ພີ່ນ້ອງຂອງ) ພວກເຈົ້າ ເປັນຄຳທັກທາຍຈາກ (ການຊີ້ນຳຂອງ ) ອັລລໍຫ໌ ອັນເປັນພອນປະເສີດ ແລະ ດີເລີດ. (24:61)**

ທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໄດ້ກ່າວໄວ້ໃນວັດຈະນະຂອງທ່ານບົດໜຶ່ງມີຄວາມວ່າ: **"ພວກທ່ານຈະບໍ່ໄດ້ເຂົ້າສວນສະຫວັນຈົນກວ່າພວກທ່ານຈະເປັນຜູ້ສັດທາ. ພວກທ່ານຈະບໍ່ເປັນຜູ້ສັດທາຈົນກວ່າພວກທ່ານຈະມີຄວາມຮັກເອື້ອເຟື້ອເພື່ອແຜ່ເຊິ່ງກັນແລະກັນ ພຶງຮູ້ເຖີດວ່າ ຂ້ອຍຈະບອກເຖິງການກະທຳຢ່າງໜຶ່ງທີ່ພວກທ່ານປະຕິບັດເປັນປະຈຳແລ້ວຈະເກີດຄວາມຮັກເອື້ອອາທອນຕໍ່ກັນ ແລະ ກັນ ຈົ່ງໂປຍສະລາມໃນຫມູ່ບັນດາພວກທ່ານ."**[4]

ທ່ານຍັງໄດ້ກ່າວອີກວ່າ **"ຈົ່ງໂປຍສະລາມ ແລ້ວພວກເຈົ້າຈະພົບກັບຄວາມສະຫງົບສັນຕິ."**[5]

---

[3] ອະຫມັດ (2:362)

[4] ມຸສລິມ (ໝາຍເລກ 54), ອັລ-ບຸກຄໍຣີ. *ອັລ-ອະດັບ ອັລ-ມຸຟຣັອດ* (ໝາຍເລກ 980)

[5] ອະຫມັດ (4:86), ອັລ-ບຸກຄໍຣີ. *ອັລ-ອະດັບ ອັລ-ມຸຟຣັອດ* (ໝາຍເລກ 1266), ອິບນຸຫິບບານ (ໝາຍເລກ 1934), ອັລ-ບານີ *ຣ່ວມຫະດີຊ ຊໍຫະຫ໌* (ໝາຍເລກ 1493) ເປັນຫະດີຊຣາຊັນ

ແລະ ທ່ານຍັງໄດ້ກ່າວອີກວ່າ **"ຄົນທີ່ຂີ້ຖີ່ທີ່ສຸດ ແມ່ນ ຄົນທີ່ຂີ້ຖີ່ໃນການໃຫ້ສະລາມ."**[6]

ໃນວັດຈະນະຂອງທ່ານອີກບົດໜຶ່ງມີຄວາມວ່າ: **"ຜູ້ທີ່ຄູ່ຄວນທີ່ສຸດສຳຫຼັບ (ການໃກ້ຊິດກັບອັລລໍຫ໌) ແມ່ນຜູ້ທີ່ເລີ່ມຕົ້ນໃຫ້ສະລາມກ່ອນ."**[7]

ອັລ-ຮາຊັນ ອັລ-ບັສຣີ້ນັກວິຊາການຊາວມຸດສະລິມທີ່ມີຊື່ສຽງໃນສະຕະວັດທີສອງໄດ້ກ່າວວ່າ: **"ການໃຫ້ສະລາມຖືວ່າເປັນການກະທຳທີ່ສະໝັກໃຈ (ບໍ່ແມ່ນການບັງຄັບ) ແຕ່ການຮັບເອົາສະລາມນັ້ນ ຖືວ່າເປັນສາສະນະກິດທີ່ບັງຄັບໃນສາສະໜາ."**[8]

ໃນການທັກທາຍກັນ ອິດສະລາມບໍ່ພຽງແຕ່ກຳຊັບໃຫ້ກ່າວສະລາມເທົ່ານັ້ນ ແຕ່ຍັງກຳໜົດໃຫ້ມີການຈັບມື ເພື່ອເຮັດໃຫ້ສະລາມມີຄວາມຫມາຍຫຼາຍຍິ່ງຂຶ້ນ ຕາມການເວົ້າຂອງ ອັລ-ບັຣຣໍ ອິບນຸ ອາຊິບ ວ່າ: **"ສ່ວນຫນຶ່ງຂອງການທັກທາຍທີ່ສົມບູນ (ການໃຫ້ສະລາມ) ແມ່ນການຈັບມືຂອງມິດສະຫາຍຂອງທ່ານ"**[9]

ຍິ່ງໄປກວ່ານັ້ນ ອິດສະລາມໄດ້ສົ່ງເສີມການໂອບກອດລະຫວ່າງສອງຄົນ ຖ້າພວກເຂົາພົບເຈີຫຼັງຈາກແຍກຈາກກັນມາດົນນານ ທັງນີ້ກໍເພື່ອສະແດງເຖິງຄວາມຮັກແພງລະຫວ່າງກັນ ເພາະຄວາມຮັກຄືແກ່ນສຳຄັນແຫ່ງຄຳສອນໃນອິດສະລາມ ແລະ ເປັນແກ່ນແຫ່ງສັນຕິພາບ.

ເຖິງແມ່ນກັບບັນດາທີ່ບໍ່ມີສິນທຳທີ່ພະຍາຍາມທີ່ຈະແຜ່ກະຈາຍຄວາມຊົ່ວຮ້າຍ ແລະ ຫາຍະນະ ດັ່ງທີ່ອັລລໍຫ໌ໄດ້ເວົ້າວ່າ:

﴿وَإِذَا خَاطَبَهُمُ الْجَاهِلُوْنَ قَالُوا سَلاَماً﴾ (الفرقان : 63)

ຄວາມວ່າ **ແລະເມື່ອໃດທີ່ພວກຄົນໂງ່ເວົ້າບໍ່ດີກ່ຽວກັບພວກເຂົາ (ໝາຍເຖິງບ່າວຜູ້ໃກ້ຊິດຂອງພຣະອົງ) ພວກເຂົາຈະເວົ້າຕອບດ້ວຍ ສະລາມ (ຄຳເວົ້າທີ່ດີທີ່ເຕັມໄປດ້ວຍຄວາມສັນຕິ)** .(63 :25)

ອັລລໍຫ໌ໄດ້ສອນທ່ານສາດສະດາມູຮຳມັດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໃນຂະນະທີ່ທ່ານສະແດງຄວາມບໍ່ພໍໃຈຕໍ່ການກະທຳຂອງພວກທີ່ບໍ່ເຊື່ອສັດທາວ່າ

﴿فَاصْفَحْ عَنْهُمْ وَقُلْ سَلاَمٌ فَسَوْفَ يَعْلَمُوْنَ﴾ (الزخرف : 89)

ຄວາມວ່າ **ດັ່ງນັ້ນ ຈົ່ງໃຫ້ອະໄພແກ່ພວກເຂົາ ແລະ ຈົ່ງກ່າວ ສະລາມ (ຖ້ອຍຄຳທີ່ມີແຕ່ຄວາມສັນຕິ) ຕໍ່ໄປພວກເຂົາຈະຮູ້ (ເຖິງຜົນກຳຂອງການກຳຂອງພວກເຂົາ)** (43:89)

---

[6] ອັດ-ຕໍ່ບະຣໍ່ນີ້ *ອັລ-ມູ໊ຈຳ ອັສ-ຊໍກີຣ* (ໝາຍເລກ 335) ອັລ-ບານີ *ຊໍຮີຫ໌ ອັລ-ຈາມູຣະ* (ໝາຍເລກ 997) ເປັນຫະດີຊຊໍຮີຫ໌

[7] ອະບູດາວູດ (ໝາຍເລກ 5175), ອັດ-ຕັຣມີຊີ (ໝາຍເລກ 2694), ອັລ-ບານີ *ຊໍຮີຫ໌ ອັລ-ຈາມູຣະ* (ໝາຍເລກ 5997) ເປັນຫະດີຊຮາຊັນ

[8] ອັລ-ບຸກໍຣີ. *ອັລ-ອະດັບ ອັລ-ມຸຟຣ໊ອດ* (ໝາຍເລກ 1040) ດ້ວຍສາຍລາຍງານທີ່ຊໍຮີຫ໌

[9] ອັລ-ບຸກໍຣີ. *ອັລ-ອະດັບ ອັລ-ມຸຟຣ໊ອດ* (ໝາຍເລກ 968),ດ້ວຍສາຍລາຍງານທີ່ຊໍຮີຫ໌ຮອດສໍຮາບະຫ໌

ທ່ານສາດສະດາໄດ້ນຳຄຳສອນຂອງອັລລໍຫ໌ມາໃຊ້ໃນການປະຕິບັດຈິງຂອງທ່ານ ດັ່ງຕົວຢ່າງທີ່ປາກົດຢູ່ໃນບົດລາຍງານໜຶ່ງວ່າ: ມີຊາຍຊາວຢິວກຸ່ມໜຶ່ງໄດ້ຂໍອະນຸຍາດເຂົ້າຫາທ່ານ ພວກເຂົາໄດ້ກ່າວວ່າ "ອັສສະມຸ ອະໄລກຸມ" ຊຶ່ງຫມາຍວ່າຄວາມຕາຍມາເຖິງກັບທ່ານ. ແທນທີ່ຈະເວົ້າວ່າ "ອັສສະລາມມຸ ອະໄລກຸມ" ເຊິ່ງເປັນການກ່າວສະລາມທີ່ອິດສະລາມກຳໜົດໃຫ້ໃຊ້ເປັນຄຳທັກທາຍລະຫວ່າງກັນແລະກັນ, ທ່ານຍິງອາອິຊະຫ໌ຜູ້ພັນລະຍາຂອງທ່ານສາດສະດາທີ່ຢູ່ໃກ້ໆ ໄດ້ຍິນ ດັ່ງນັ້ນຈຶ່ງຕອບໄປວ່າ, "ບໍ່ແມ່ນດອກ ແຕ່ແມ່ນວ່າພວກເຈົ້າຕ່າງຫາກທີ່ຈະໄດ້ຮັບຄວາມຕາຍ ແລະ ການຊາບແຊ່ງ" ທ່ານສາດສະດາໄດ້ຍິນເຊັ່ນນັ້ນ ຈຶ່ງຫ້າມອາອິຊະຫ໌ ໂດຍເວົ້າວ່າ **"ແທ້ຈິງ ອັລລໍຫ໌ຊົງມັກຄວາມອ່ອນໂຍນໃນການເຮັດທຸກສິ່ງທຸກຢ່າງ"**

ທ່ານນາງອາອິຊະຫ໌ຖາມທ່ານວ່າ "ທ່ານບໍ່ໄດ້ຍິນສິ່ງທີ່ຄົນເຫຼົ່ານັ້ນເວົ້າບໍ? " ທ່ານສາດສະດາຕອບນາງວ່າ **"ຂ້ອຍກໍ່ຕອບໄປແລ້ວເດ້ວ່າ ວະອະໄລກຸມ (ຫມາຍຄວາມວ່າພວກເຈົ້າກໍ່ຄືກັນ)"**[10]

ອັລລໍຫ໌ໄດ້ບອກເຖິງຈຸດຢືນຂອງມຸສລິມຕໍ່ຜູ້ທີ່ຂາດສິນທຳຈັນຍາວ່າ:

﴿وَإِذَا سَمِعُوا اللَّغْوَ أَعْرَضُوْا عَنْهُ وَقَالُوْا لَنَا أَعْمَالُنَا وَلَكُمْ أَعْمَالُكُمْ سَلاَمٌ عَلَيْكُمْ لاَ نَبْتَغِي الْجَاهِلِيْنَ﴾ (القصص :55)

ຄວາມວ່າ **ແລະເມື່ອພວກເຂົາໄດ້ຍິນເລື່ອງໄຮ້ສາລະ ພວກເຂົາກໍ່ຜິນຫລັງຫນີຈາກມັນ ແລະ ເວົ້າວ່າ: ການງານຂອງພວກເຮົາກໍ່ຈະໄດ້ແກ່**

**ພວກເຮົາ ແລະ ການງານຂອງພວກທ່ານກໍ່ ຈະໄດ້ແກ່ພວກທ່ານ ສັນຕິພາບແດ່ພວກທ່ານ ເຮົາຈະບໍ່ຂອນຂວາຍ (ເປັນໝູ່ ແລະ ຄົບຫາກັບ) ບັນດາຜູ້ໄຮ້ປັນຍາ** (28:55).

**ລະຫມາດ ບ່ອນແຫ່ງການຊອກຫາຄວາມສະຫງົບສັນຕິ**

ອິສລາມຍັງໄດ້ກຳໜົດໃຫ້ ການກ່າວ **ສະລາມ** ເປັນຫນຶ່ງໃນຮູກົ່ນ (ກົດປະຕິບັດທີ່ຕ້ອງເຮັດ) ປະການໜຶ່ງໃນລະຫມາດ ແລະ ການການລະຫມາດຈະເປັນໂມຄະ ຫາກບໍ່ມີການກ່າວສະລາມ, ການລະຫມາດເປັນການປະຕິບັດສາສະນະກິດທາງສາສະຫນາທີ່ເລີ່ມຕົ້ນດ້ວຍຕັກບີຣ (ການກ່າວ ອັລລໍຮູອັກບັຣ) ແລະ ສິ້ນສຸດລົງດ້ວຍການສະລາມ

ໃນຂັ້ນຕອນສຸດທ້າຍຂອງພາລະກິດການລະຫມາດ ຜູ້ທີ່ລະຫມາດຈະໃຫ້ສະລາມພີ່ນ້ອງຂອງເຂົາ ແລະ ບັນດາເທວະທູດ (ມະລາອິກະຫ໌) ທີ່ຢູ່ຮຽງຮາຍຄຽງຂ້າງເຂົາທັ້ງສອງດ້ານຊ້າຍແລະຂວາ ຫຼັງຈາກທີ່ພວກເຂົາເຈົ້າຕ້ອງຈາກກັນໃນລະຍະສັ້ນໆ ຊ່ວງທີ່ລາວໄດ້ອຸທິດຕົວເພື່ອຄວາມໃກ້ຊິດກັບພຣະຜູ້ເປັນເຈົ້າຂະນະທີ່ເຂົາຢູ່ໃນລະຫມາດ.

ແລະເພື່ອເປັນສິ່ງເສີມໃຫ້ມີການປະຕິບັດສະລາມຢ່າງແຜ່ຫຼາຍ ອິສລາມຈຶ່ງກຳໜົດໃຫ້ ສະລາມ ເປັນສ່ວນຫນຶ່ງຂອງການຊິກຣຸລລໍຫ໌ (ການລຳເລິກເຖິງອັລລໍຫ໌) ໂດຍສາສະນາທູດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ແລະ ປະຊາຊາດຂອງທ່ານກ່າວຢູ່ເປັນປະຈຳ ຫຼັງຈາກລະຫມາດ ຫ້າເວລາ ດ້ວຍຄຳເວົ້າວ່າ

اللَّهُمَّ أَنْتَ السَّلاَمُ، وَمِنْكَ السَّلاَمُ، تَبَارَكْتَ يَا ذَا الْجَلاَلِ وَالإِكْرَامِ

ຫມາຍຄວາມວ່າ: **ໂອ້ອັລລໍຫ໌ ພຣະອົງຄືຜູ້ປຽ່ມດ້ວຍສັນຕິພາບ ແລະ ຈາກພຣະອົງເທົ່ານັ້ນຈຶ່ງບັງເກີດສັນຕິພາບ ຊົງເຕັມໄປດ້ວຍຄຸນອັນປະເສີດເຖີດ ໂອ້ ຜູ້ຊົງໄວ້ເຊິ່ງຄວາມກຽງໄກ ແລະ ຄວາມເມດຕາ.**[11]

## ສະຫວັນ ວິມານແຫ່ງຄວາມສັນຕິ

ຈາກການນຳສະເຫນີມາຂ້າງເທິງ ເປັນທີ່ປະຈັກຊັດເຈນວ່າ ບໍ່ວ່າຊື່ ແລະ ສັນຍາລັກຂອງສາສະໜາອິສລາມ ຮູບແບບຂອງການທັກທາຍ, ຫຼັກປະຕິຫນຶ່ງທີ່ຕ້ອງເຮັດໃນການລະຫມາດ, ກາຣຊິກິຣ (ການກ່າວຖ້ອຍຄຳລຳເລິກເຖິງອັລລໍຫ໌) ຫຼັງຈາກການລະຫມາດ ແລະ ການດຸອາ (ຂໍພອນ) ລ້ວນແລ້ວແຕ່ສິ່ງເສີມ ແລະ ເອື້ອຕໍ່ການສະຖາປະນາ ແລະ ເສີມຂະຫຍາຍສັນຕິພາບໃຫ້ບັງເກີດທົ່ວໂລກໃບນີ້ ມຸສລິມຜູ້ມອບຕົນຕໍ່ພຣະຜູ້ເປັນເຈົ້າ ຈຶ່ງເປັນຜູ້ທີ່ສົມຄວນໄດ້ຮັບການຍົກຍ້ອງດ້ວຍອຸທິຍານໃນວັນອາຄິເຣາະຫ໌ (ໂລກໜ້າ) ບ່ອນທີ່ການທັກທາຍຂອງຊາວສະຫວັນແມ່ນການເວົ້າວ່າ **ສະລາມ**

ອັລລໍຫ໌ໄດ້ກ່າວວ່າ:

﴿تَحِيَّتُهُمْ يَوْمَ يَلْقَوْنَهُ سَلامٌ وَأَعَدَّ لَهُمْ أَجْراً كَرِيماً﴾ (الأحزاب : 44)

---

[10] ອັລ-ບຸກໍຄໍຣີ. (ໝາຍເລກ 5570.5786), ມຸສລິມ (ໝາຍເລກ 4027)

[11] ມຸສລິມ (ໝາຍເລກ 591)

ຄວາມວ່າ **ຄຳກ່າວທັກທາຍຂອງພວກເຂົາໃນມື້ທີ່ເຂົາໄດ້ພົບກັບພຣະອົງແມ່ນ ການກ່າວສະລາມ ແລະ ພຣະອົງຊົງໄດ້ກະກຽມລາງວັນອັນມີກຽດໄວ້ໃຫ້ສຳລັບພວກເຂົາແລ້ວ.** (33:44)

ອັລລໍຫ໌ຫຍັງໄດ້ກ່າວວ່າ:

﴿وَقَالَ لَهُمْ خَزَنَتُهَا سَلامٌ عَلَيْكُمْ طِبْتُمْ فَادْخُلُوهَا خَالِدِينَ﴾ (الزمر : 73)

ຄວາມວ່າ **ແລະຜູ້ຮັກສາປະຕູສະຫວັນ ຈະກ່າວກັບພວກເຂົາວ່າ, ຄວາມສັນຕິຈົ່ງມີແດ່ພວກທ່ານ ພວກທ່ານເປັນຜູ້ໄດ້ຮັບພອນ ສະນັ້ນ ຈົ່ງເຂົ້າໄປໃນສະຫວັນ ເປັນຜູ້ພຳນັກຢູ່ຕະຫຼອດໃນນັ້ນເຖີດ** (39:73)

﴿سَلامٌ قَوْلاً مِنْ رَبٍّ رَحِيمٍ﴾ (يس : 58)

ຄວາມວ່າ **ພວກເຂົາຈະໄດ້ຮັບ ການກ່າວສະລາມອັນປ່ຽມເຕັມສັນຕິ ເປັນດຳລັດໜຶ່ງຈາກພຣະຜູ້ເປັນເຈົ້າຜູ້ຊົງເມດຕາຍິ່ງ** (36:58)

﴿لا يَسْمَعُونَ فِيهَا لَغْواً وَلاَ تَأْثِيماً إِلاَّ قِيلاً سَلاماً سَلاماً﴾ (الواقعة : 25–26)

ຄວາມວ່າ **(ໃນສວນສະຫວັນນັ້ນ) ພວກເຂົາຈະບໍ່ໄດ້ຍິນຄຳເວົ້າທີ່ບໍ່ມີປະໂຫຍດ ແລະ ເປັນບາບ ຍົກເວັ້ນຄຳເວົ້າທີ່ວ່າ: ສະລາມ! ສະລາມ! (ສັນຕິ ! ສັນຕິ!)** (56:25-26)

ແມ້ກະທັ່ງສະຫວັນເອງກໍ່ຫຍັງມີຊື່ເອີ້ນວ່າ **"ວິມານແຫ່ງຄວາມສັນຕິ"** ອັລກຸຣອານ ໄດ້ລະບຸໄວ້ວ່າ:

﴿لَهُمْ دَارُ السَّلامِ عِنْدَ رَبِّهِمْ وَهُوَ وَلِيُّهُمْ بِمَا كَانُوا يَعْمَلُونَ﴾ (الأنعام : 127)

ຄວາມວ່າ **ສໍາລັບພວກເຂົານັ້ນ ຄື ພະລາຊະວັງແຫ່ງຄວາມສະຫງົບປອດໄພ (ດາຣຸສຊາລາມ) ນະ ພຣະຜູ້ເປັນເຈົ້າຂອງພວກເຂົາ ແລະ ພຣະອົງເປັນຜູ້ຄຸ້ມຄອງພວກເຂົາດ້ວຍສິ່ງທີ່ພວກເຂົາໄດ້ເຮັດ** (6:127).

ດ້ວຍຫົວໃຈທີ່ຮັກຄວາມສະຫງົບ ສັນຕິພາບ ແລະ ປາດຖະໜາ ຄວາມສະຫງົບສຸກສັນຕິດັ່ງທີ່ໄດ້ຖືກສັນຍາໄວ້ວ່າມີຢູ່ຢ່າງສົມບູນໃນສວນສະຫວັນ ເຮົາພົບວ່າຊາວມຸສລິມໃນບາງປະເທດໄດ້ຕັ້ງຊື່ເມືອງຂອງພວກເຂົາວ່າ "ດາຣູສຊາລາມ" ຫຼື "ດາຣູລອາມານ " ຕົວຢ່າງເຊັ່ນ ຟາຕໍານີ ດາຣຸສຊສລາມ, ບຣູໄນ ດາຣຸສຊສລາມ, ເຄດາຫ໌ ດາຣຸລອາມານ (ລັດຂອງປະເທດມາເລເຊຍ ມັນຫມາຍຄວາມວ່າເມືອງສະຫງົບສັນຕິສຸກ ແລະ ປອດໄພ) ແລະ ເມືອງຫຼວງຂອງປະເທດແທນຊາເນຍເຊິ່ງມີເອີ້ນວ່າ ດາຣູສຊາລາມ ເຊັ່ນກັນ.

**ນີ້ແມ່ນ ສັນຕິພາບທີ່ມີຢູ່ໃນອິສລາມມັນຊ່າງມີຢູ່ຫຼາຍເຫຼືອເກີນ ເປັນສັນຕິພາບທີ່ແສນສວຍງາມ ແລະ ສົມບູນແບບທີ່ສຸດ. ສັນຕິພາບທັງໃນໂລກນີ້ ແລະ ໂລກໜ້າ ສັນຕິພາບໃນຊື່ ແລະ ຄຸນລັກສະນະ ສັນຕິພາບໃນດ້ານສັນຍາລັກ ແລະ ການທັກທາຍ ສັນຕິພາບໃນການອະທິຖານຂໍພອນ ແລະ ການກ່າວລະພັນກັບອົງຜູ້ເປັນເຈົ້າແຫ່ງສັນຕິພາບກໍ່ຄືອັລລໍຫ໌ ສັນຕິພາບຂອງບັນດເທວະດາ ແລະ ມະນຸດທັ້ງມວນ.**

# ສັນຕິພາບ

## ໃນມິຕິຂອງຫຼັກຄວາມເຊື່ອ
## ແລະ ຫຼັກປະຕິບັດທາງສາສະໜະບັນຍັດ

ສັນຊາດຊະຍານດັ່ງເດີມທີ່ສຳຄັນປະການໜຶ່ງຂອງມະນຸດ ເຊິ່ງອັລລໍຫ໌ໄດ້ຊົງກຳໜົດໄວ້ ຄື ການທີ່ຫົວໃຈປາຖະໜາສະແຫວ່ງຫາສັນຕິພາບມະນຸດທຸກຄົນລ້ວນຕ້ອງການທີ່ຈະດຳລົງຊີວິດຢູ່ໃນໂລກນີ້ຢ່າງສັນຕິແລະ ມີຄວາມສຸກ, ດັ່ງນັ້ນ ອິສລາມຈຶ່ງບໍ່ໄດ້ກຳນົດສັນຕິພາບພຽງແຕ່ໃນມິຕິທາງຊື່ ແລະ ສັນຍາລັກເທົ່ານັ້ນ ຫາກແຕ່ຍັງໄດ້ເອົາຮາກຖານໃນຫຼັກການຂອງຄວາມເຊື່ອ ແລະ ການປະຕິບັດທາງສາດສະໜາບົດບັນຫຍັດນຳອີກ ອິສລາມໄດ້ສະຖາປະນາສັນຕິພາບເປັນສຸດຍອດຂອງຫຼັກການສັດທາ ແລະ ຈຸດສູງສຸດຂອງການໃຫ້ຄວາມເຄົາລົບ ແລະ ສັນລະເສີນພຣະຜູ້ເປັນເຈົ້າ ກ່າວຄື ອິສລາມໄດ້ບັນຫຍັດຄຳວ່າ **“ສະລາມ”** ເປັນຫນຶ່ງໃນຊື່ພຣະນາມຂອງອັລລໍຫ໌ ພຣະອົງຜູ້ສ້າງຈັກກະວານ ດັ່ງທີ່ໄດ້ກ່າວໄວ້ໃນ ອັລກຸຣອານ

﴿هُوَ اللَّهُ الَّذِي لا إِلَهَ إِلاَّ هُوَ الْمَلِكُ الْقُدُّوسُ السَّلامُ الْمُؤْمِنُ الْمُهَيْمِنُ الْعَزِيزُ الْجَبَّارُ الْمُتَكَبِّرُ سُبْحَانَ اللَّهِ عَمَّا يُشْرِكُونَ﴾ (الحشر: 23)

ຄວາມວ່າ **ພຣະອົງຄືອັລລໍຫ໌ ເຊິ່ງບໍ່ມີພຣະເຈົ້າອື່ນໃດ (ທີ່ຄູ່ຄວນຕ້ອງມອບການພັກດີໃຫ້) ນອກຈາກພຣະອົງ ຜູ້ຊົງລິດເດດສູງສຸດ ຜູ້ຊົງບໍລິສຸດ ຜູ້ຊົງເຕັມໄປດ້ວຍຄວາມສັນຕິ ຜູ້ຊົງຄຸ້ມຄອງ ຜູ້ຊົງພິທັກປົກປ້ອງ ຜູ້ຊົງອໍານາດຍິ່ງ ຜູ້ຊົງເດຊານຸພາບ ຜູ້ຊົງຄວາມຍິ່ງໃຫຍ່ ມະຫາບໍລິສຸດຂອງອົງອັລລໍຫ໌ຈາກສິ່ງທີ່ພວກເຂົາຕັ້ງພາຄີຕໍ່ພຣະອົງ** (5 9: 2 3 ).

ອັລລໍຫ໌ ໄດ້ຂະນານນາມພຣະອົງດ້ວຍຊື່ແຫ່ງຄວາມສັນຕິພາບ ໂດຍມີເປົ້າຫມາຍແມ່ນເພື່ອໃຫ້ບັນດາສັດທາຊົນປາຖະຫນາຫາ ມອບຄວາມຮັກແດ່ສັນຕິພາບ ພ້ອມກັບກໍາໜົດໃຫ້ສັນຕິພາບເປັນເປົ້າຫມາຍສູງສຸດຂອງການດໍາເນີນຊີວິດ ສະນັ້ນ ຜູ້ໃດທີ່ຮັກສັນຕິພາບຜູ້ນັ້ນຍ່ອມຕ້ອງຮັກອັລລໍຫ໌ ແລະ ເປັນທີ່ຮັກແພງຂອງພຣະອົງ ແລະ ຜູ້ໃດທີ່ຕັ້ງຕົນເອງເປັນສັດຕູຂອງສັນຕິພາບ ແທ້ຈິງແລ້ວ, ເຂົາກາຍເປັນສັດຕູຂອງອັລລໍຫ໌ຢ່າງແນ່ແທ້.

## ອິດສະລາມແມ່ນສັນຕິພາບສາກົນ

ສັນຕິພາບໃນອິສລາມບໍ່ແມ່ນຮູບແບບທີ່ອີງໃສ່ຜົນປະໂຫຍດສ່ວນບຸກຄົນ ຊົນຊາດ ຫຼື ປະເທດຊາດໃດຫນຶ່ງສະເພາະ, ຫາກແຕ່ວ່າເປັນສາສະນະບັນຫຍັດແຫ່ງສາກົນ ເປັນລະບົບທີ່ສົມບູນແບບ ເປັນລັດຖະທໍາມະນູນອໍາມະຕະທີ່ຄວບຄູ່ ແລະ ສອດຄ່ອງກັບຜູ້ຄົນໃນໂລກ.

ເຫຼົ່າບັນດາສາສະນະທູດຂອງອັລລໍຫ໌ ໄດ້ຮ່ວມກັນກໍ່ຮ່າງສ້າງປະພາຄານແຫ່ງສັນຕິພາບ ແລະ ຄວາມສະຫງົບສຸກໃນໂລກນີ້ທຸກຍຸກທຸກສະໄໝ ໃນທີ່ສຸດສັນຕິພາບກໍ່ໄດ້ບັງເກີດຂຶ້ນຢ່າງສົມບູນເບັດເສັດ

ໂດຍສານແຫ່ງມຸຮຳມັດ ຜູ້ເປັນສາສະນະທູດຄົນສຸດທ້າຍ ດັ່ງທີ່ທ່ານໄດ້ເວົ້າວ່າ: **"ອຸປະມາເລື່ອງການເປັນສາສະນະທູດຂອງຂ້ອຍ ແລະ ສາສະນະທູດທ່ານອື່ນໆ ໃນຍຸກກ່ອນຫນ້າຂ້ອຍ ຄືດັ່ງກັບຊາຍຄົນໜຶ່ງທີ່ສ້າງເຮືອນທີ່ສວຍງາມແລະສົມບູນແບບ ມີດິນຈີ່ກ້ອນຫນຶ່ງທີ່ຂາດຢູ່ໃນແຈນຶ່ງຂອງເຮືອນນັ້ນ ຜູ້ຄົນຍ່າງອ້ອມເຮືອນຫຼັງນັ້ນ ແລະ ປະຫລາດໃຈກັບຄວາມງາມຂອງມັນ ພ້ອມກັບເວົ້າວ່າ 'ຖ້າມີດິນຈີ່ອີກກ້ອນຢູ່ແຈນີ້ (ຢູ່ແຈທີ່ຍັງຂາດຢູ່) ແນ່ນອນ, ເຮືອນນັ້ນຈະສວຍງາມບໍ່ມີຈຸດບົກພ່ອງ) 'ຂ້ອຍນີ້ແຫລະເປັນດິນຈີ່ກ້ອນນັ້ນ ແລະ ຂ້ອຍຄືຜູ້ປິດທ້າຍບັນດາສາສະນະທູດ."**[12]

ດ້ວຍເຫດນີ້ ສານແຫ່ງຟາກຟ້າຈຶ່ງໄດຈົບສົມບູນແລ້ວ ການເປັນສາດສະນະທູດ ຂອງທ່ານນະບີມຸຮຳມັດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໄດ້ເຮັດໃຫ້ສາສະໜາອິດສະລາມເປັນສາສະໜາທີ່ຄົບຖ້ວນສົມບູນ ແລະ ເປັນຄຳສອນທີ່ສ້າງສັນຕິພາບອັນຄວບຄຸມ ແລະ ຢັ່ງຍືນສຳລັບມະນຸດຊາດ ເພື່ອການສ້າງສັນຕິໃຫ້ແກ່ມະນຸດທັງປວງທັ້ງໃນໂລກນີ້ ແລະ ໂລກຫນ້າ.

ອັລກຸຣອານໄດ້ກ່າວເຖິງຄຳອະທິຖານຂອງທ່ານສາສະນະທູດອິບຣໍຫີມ ຊຶ່ງຊີ້ໃຫ້ເຫັນເຖິງຄວາມເນັ້ນຫນັກຂອງລາວກ່ຽວກັບເລື່ອງສັນຕິພາບວ່າ

---

[12] ອັລ-ບຸກໍຣີ. (ໝາຍເລກ 3535), ມຸສລິມ (ໝາຍເລກ 2286)

﴿وَإِذْ قَالَ إِبْرَاهِيمُ رَبِّ اجْعَلْ هَذَا بَلَداً آمِناً وَارْزُقْ أَهْلَهُ مِنَ الثَّمَرَاتِ مَنْ آمَنَ مِنْهُمْ بِاللَّهِ وَالْيَوْمِ الْآخِرِ﴾ (البقرة : 126)

ຄວາມວ່າ **ແລະ ຈົ່ງລຳເລີກເຖິງຂະນະທີ່ອັບຣາຮາມອະທິຖານວ່າ ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້ອຍ ໄດ້ໂປດເຮັດໃຫ້ສະຖານທີ່ນີ້ (ດິນແດນມັກກະຫ໌) ເປັນເມືອງທີ່ປອດໄພ ແລະ ໂປດປະທານສະບຽງອາຫານໃຫ້ແກ່ຊາວເມືອງດ້ວຍຫມາກໄມ້ຕ່າງໆ ໃຫ້ກັບຜູ້ທີ່ສັດທາຕໍ່ອັລລໍຫ໌ແລະວັນໂລກຫນ້າໃນຫມູ່ພວກເຂົາ (2: 126)**

ຫາກພິຈາລະນາບົດວິງວອນຂໍຂ້າງເທິງ ຈະພົບວ່າປະການທຳອິດທີ່ສາສະນະທູດອິບຣໍຫີມ ໃນຖານະຜູ້ບຸກເບີກ ແລະ ກໍ່ຕັ້ງນະຄອນມັກກະຫ໌, ໄດ້ເນັ້ນຫນັກ ແລະ ໃຫ້ຄວາມສຳຄັນ ຄືສັນຕິສະຫງົບສຸກໃນແຜ່ນດິນມັກກະຫ໌ ຈາກຮາກຖານຄວາມສະຫງົບສຸກດັ່ງກ່າວໄດ້ກໍ່ຜົນສະທ້ອນຕາມມານັ້ນຄື ຄວາມປະເສີດ ແລະ ເພີ່ມຂຶ້ນຂອງປັດໄຈຍັງຊີບ ແລະ ພືດຜົນ ລວມທັງການຂະຫຍາຍຕົວທາງດ້ານເສດຖະກິດແລະ ຊັບພະຍາກອນ

ເລື່ອງຂອງອັບຣາຮາມ ແລະ ອິສມາແອລ ນັ້ນພຽງພໍແລ້ວທີ່ຈະຊີ້ໃຫ້ເຫັນວ່າອິດສະລາມເປັນສາດສະຫນາແຫ່ງຄວາມສັນຕິ ແລະຖ້າຫາກວ່າເຮົາໄດ້ໄຕ່ຕອງຄວາມເປັນຈິງທີ່ເກີດຂຶ້ນກັບນະຄອນມັກກະຫ໌ ອັນເປັນດິນແດນທີ່ອັບຣາຮາມ ແລະ ອິດສະມາອິລ ໄດ້ຮ່ວມກັນສ້າງຂຶ້ນມາ ແລະຍັງໄດ້ກາຍເປັນນະຄອນຫຼວງຂອງອິດສະລາມຈົນເຖິງ

ປະຈຸບັນ. ນະຄອນມັກກະຫ໌ໄດ້ຮັບຂະນານາມວ່າເປັນດິນແດນແຫ່ງຄວາມສະຫງົບ ດັ່ງທີ່ປາກົດຢູ່ໃນດຳລັດຂອງອັລລໍຫ໌ວ່າ:

﴿وَهَذَا الْبَلَدِ الْأَمِينِ﴾ (التين : 3)

ຄວາມວ່າ **ແລະ ຂໍສາບານດ້ວຍແຜ່ນດິນອັນສະຫງົບສຸກແຫ່ງນີ້** (95:3)

ໃຜກໍຕາມທີ່ອາໃສຢູ່ໃນແຜ່ນດິນນີ້ ລາວຈະໄດ້ຮັບການປົກປ້ອງແລະປອດໄພ ນີ້ແມ່ນສັນຍາລັກຂອງອິສລາມ ແລະ ຂໍ້ເທັດຈິງທີ່ປະກົດຂຶ້ນໃນວິທີຊີວິດຂອງປະຊາຊາດມຸສລິມ ອັລລໍຫ໌ ໄດ້ກ່າວວ່າ:

﴿أَوَلَمْ يَرَوْا أَنَّا جَعَلْنَا حَرَماً آمِناً وَيُتَخَطَّفُ النَّاسُ مِنْ حَوْلِهِمْ أَفَبِالْبَاطِلِ يُؤْمِنُونَ وَبِنِعْمَةِ اللَّهِ يَكْفُرُونَ﴾ (العنكبوت : 67)

ແປວ່າ: **ພວກເຂົາບໍ່ເຫັນດອກວ່າ ວ່າແທ້ຈິງແລ້ວ ເຮົາໄດ້ເຮັດໃຫ້ (ມັກກະຫ໌) ເປັນດິນແດນສັກສິດທີ່ສະຫງົບສຸກ ໃນຂະນະທີ່ຜູ້ຄົນອ້ອມຂ້າງພວກເຂົາຖືກຣຸກຮານຢູ່ສະເໝີ ຫຼື ພວກເຂົາສັດທາຕໍ່ຄວາມເທັດ ແລະໄດ້ປະຕິເສດຄຸນຂອງອັລລໍຫ໌** (29:67)

ເຊັ່ນດຽວກັນກັບຄຳປະກາດຂອງສາດສະດາຢູຊຸຟ (ໂຈເຊັບ) ກັບຄອບຄົວຂອງລາວທີ່ປາກົດຢູ່ໃນອັລກຸຣອານວ່າ :

﴿وَقَالَ ادْخُلُوا مِصْرَ إِنْ شَاءَ اللَّهُ آمِنِينَ﴾ (يوسف : 99)

ແປວ່າ: **ແລະເຂົາ (ນະບີຢູຊຸຟ) ໄດ້ເວົ້າວ່າ ພວກທ່ານຈົ່ງເຂົ້າໄປໃນປະເທດເອຢິບຢ່າງປອດໄພເຖີດ ຫາກເປັນຄວາມປະສົງຂອງອັລລໍຫ໌** (2:99)

ສັນຕິພາບໃນອິດສະລາມຍັງກວມເອົາດ້ວຍຄວາມເມດຕາ ແລະຄວາມປະເສີດ ອັລລໍຫ໌ໄດ້ມີດຳລັດແກ່ສາສະນະທູດມູຮຳມັດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ວ່າ

﴿وَمَا أَرْسَلْنَاكَ إِلاَّ رَحْمَةً لِلْعَالَمِينَ﴾ (الأنبياء : 107)

ແປວ່າ: **ແລະ ເຮົາບໍ່ໄດ້ສົ່ງໃຫ້ທ່ານມາເພື່ອຈຸດປະສົງອື່ນໃດ ນອກຈາກເພື່ອຈະໃຫ້ມີຄວາມເມດຕາຕໍ່ໂລກທັງປວງ** (21:107)

ອັລລໍຫ໌ໄດ້ສົ່ງສາສະນະທູດຂອງພຣະອົງ ໂດຍມີຈຸດປະສົງເພື່ອເຜີຍແຜ່ຄວາມເມດຕາຕໍ່ສາກົນໂລກ ພຣະອົງບໍ່ໄດ້ກ່າວວ່າ "ເປັນຄວາມເມດຕາສຳລັບຊາວມຸດສະລິມເທົ່ານັ້ນ" ທີ່ເປັນແນວນີ້ເພື່ອໃຫ້ສາສະນະທູດໄດ້ນຳມະນຸດທັງມວນໄປສູ່ທາງນຳ ແລະ ບໍ່ມີໃຜທີ່ຈະໄດ້ຮັບທາງນຳນີ້ຍົກເວັ້ນເສຍແຕ່ວ່າລາວພ້ອມທີ່ຈະໄດ້ຮັບມັນນັ້ນຄືບັນດາຜູ້ເຄົາລົບພັກດີ ເຖິງແມ່ນວ່າຄວາມເມດຕາຂອງພຣະຜູ້ເປັນເຈົ້າຈະກວ້າງຂວາງ ແລະ ຄອບຄຸມມະນຸດທັງປວງກໍ່ຕາມ

ສານແຫ່ງອິສລາມທີ່ນຳມາໂດຍສາສະນະທູດຈຶ່ງເປັນຄວາມເມດຕາສຳລັບມະນຸດຊາດທັງມວນ ແລະ ຈະຢູ່ຈົນເຖິງວັນສິ້ນໂລກ ຄວາມເມດຕາຄືແກ່ນແທ້ຂອງຄວາມຮັກ ແລະ ມັນກໍ່ກວມລວມທັ້ງສາກົນໂລກ.

ທ່ານສາສະນະທູດໄດ້ກ່າວໄວ້ມີຄວາມໝາຍວ່າ: **"ຈົ່ງມີຄວາມເມດຕາຕໍ່ຜູ້ທີ່ຢູ່ເທິງໜ້າແຜ່ນດິນ ແລ້ວພຣະອົງຜູ້ສະຖິດຢູ່ໃນສະຫວັນຊັ້ນຟ້າຈະເມດຕາເຈົ້າ."**[13]

**"ອັລລໍຫ໌ຈະບໍ່ມີຄວາມເມດຕາຕໍ່ຜູ້ທີ່ບໍ່ມີຄວາມເມດຕາຕໍ່ມວນມະນຸດ."**[14]

ອິສລາມ ຈຶ່ງເປັນສາສະໜາແຫ່ງຄວາມເມດຕາ ທີ່ເປັນຂອງຂວັນຈາກສະຫວັນຊັ້ນຟ້າຄຳສອນທີ່ແຜ່ຄວາມເມດຕາແກ່ຊາວໂລກ ແລະ ຄວາມຜາສຸກອັນນິລັນດອນ ຕາບໃດທີ່ມະນຸດຍຶດໝັ້ນໃນບົດບັນຫຍັດຂອງອັລລໍຫ໌ ແລະການຊີ້ນຳຂອງສາດສະດາມູຮຳມັດ ຜູ້ເຊິ່ງປະກາດວ່າຜູ້ສັດທາເປັນພີ່ນ້ອງທີ່ຕ້ອງໃຫ້ຄວາມຮັກຊຶ່ງກັນແລະກັນ ເກື້ອກູນ ແລະ ໃຫ້ຄວາມຊ່ວຍເຫຼືອໃນສິ່ງທີ່ດີ ແຂ່ງຂັນກັນໃນການເຮັດການກຸສົນ ໃຝ່ຮຽນຮູ້ໃນສາດວິຊາ ແລະ ວິທະຍາການ ອຸທິດທຸກສິ່ງທຸກຢ່າງເພື່ອສ້າງຄວາມສະຫງົບສຸກສັນຕິໃຫ້ແກ່ພີ່ນ້ອງຂອງລາວແລະມະນຸດຊາດທັງມວນ ໂດຍຍຶດໝັ້ນໃນຄຳສອນຂອງອັລລໍຫ໌ທີ່ໄດ້ລະບຸໄວ້ວ່າ:

﴿إِنَّمَا الْمُؤْمِنُونَ إِخْوَةٌ فَأَصْلِحُوا بَيْنَ أَخَوَيْكُمْ وَاتَّقُوا اللَّهَ لَعَلَّكُمْ تُرْحَمُونَ﴾

(الحجرات : 10)

ຄວາມວ່າ **ແທ້ຈິງ ເຫຼົ່າບັນດາຜູ້ເຊື່ອສັດທາຄືພີ່ນ້ອງກັນ ສະນັ້ນ ພວກເຈົ້າຈົ່ງໄກ່ເກ່ຍປະນີປະນອມກັນລະຫວ່າງພີ່ນ້ອງຂອງພວກເຈົ້າ ແລະ ຈົ່ງຢຳເກງຕໍ່ອັລລໍຫ໌ເຖີດ ເພື່ອວ່າພວກເຈົ້າຈະໄດ້ຮັບຄວາມເມດຕາ** (49:10).

---

[13] ອັດ-ຕໍບະຣໍນີ້ ອັລ -ມູຈຳ ອັລ -ກະບີຣ (ໝາຍເລກ 10277) ອະບູ -ຍະຍາ ອັລ -ມຸສນັດ (2:234) ອັລ - ຮາກິມ ອັລ - ມຸສຕັດຣ໋ອກ ໝາຍເລກ (17706)

[14] ອັລ-ບຸກຄໍຣີ. (ໝາຍເລກ 7376)

ຍິ່ງໄປກວ່ານັ້ນ ຕ້ອງຍຶດໝັ້ນໃນຄຳສອນຂອງສາສະນະທູດ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ທີ່ໄດ້ສັ່ງໄວ້ຄວາມວ່າ **"ພວກທ່ານຈົ່ງເປັນບ່າວຂອງອັລລໍຫ໌ ພາຍໃຕ້ຄວາມຮູ້ສຶກຂອງທີ່ເປັນພີ່ນ້ອງກັນ."**[15]

ຊາວມຸດສະລິມທຸກຄົນປະຕິບັດຕາມຄຳສອນຂອງທ່ານທີ່ກ່າວວ່າ: **"ຊາວມຸດສະລິມ ຄືຜູ້ທີ່ດຳລົງໄວ້ເຊິ່ງຄວາມປອດໄພແກ່ບັນດາມຸດສະລິມດ້ວຍກັນທັງດ້ວຍລີ້ນ (ຄຳເວົ້າ) ແລະດ້ວຍມື (ການກະທຳ) ຂອງລາວ."**[16]

ທ່ານໄດ້ກ່າວໃນຊ່ວງພິທີຫັຈອຳລາ (ຫັຈວິດາ) ວ່າ " **ຈົ່ງຮູ້ເຖີດວ່າ ຂ້ອຍຈະບອກພວກທ່ານເຖິງຄຸນສົມບັດຂອງມຸມິນ (ຜູ້ສັດທາ) ມຸມິນແມ່ນຜູ້ທີ່ນຳມາເຊິ່ງຄວາມສັນຕິມາສູ່ມະນຸດຊາດທັ້ງສັບສິນ ແລະຊີວິດຂອງເຂົາ ມຸສລິມຄືຜູ້ທີ່ນຳມາເຊິ່ງຄວາມປອດໄພແກ່ມະນຸດຈາກອັນຕະລາຍຂອງລີ້ນ (ຄຳເວົ້າ) ແລະມື (ການກະທຳ) ຂອງເຂົາ, ມຸຈາຮິດ (ນັກຕໍ່ສູ້) ຄືຜູ້ທີ່ອຸທິດຕົນທຸ່ມເທ ແລະ ເອົາຊະນະຕົນເອງເພື່ອເຄົາລົບເຊື່ອຟັງອັລລໍຫ໌, ມຸຮາຈິຣ (ຜູ້ອົບພະຍົບ) ຄືຜູ້ທີ່ປະຖິ້ມຄວາມຜິດພາດເຮັດຜິດ ແລະ ການກະທຳທີ່ເປັນບາບທັງປວງ”**[17]

ທ່ານໄດ້ກ່າວເພື່ອຢືນຢັນເຖິງຄວາມສຳພັນອັນເປັນອ້າຍນ້ອງດຽວກັນກັບສາສະນະທູດຄົນກ່ອນໆ ວ່າ **“ບັນດານະບີຕ່າງກໍ່ເປັນພີ່ນ້ອງຕ່າງແມ່ (ຕ່າງບິດບັນທະຍັດ) ກັນ ແຕ່ມີຫຼັກການທາງສາສະໜາອັນດຽວກັນ.”**[18]

ທ່ານກ່າວປະນາມທຸກການກະທຳທີ່ນຳໄປສູ່ການປະທະກັນ ຫນ້າຕໍ່ສູ້ກັນ ຫຼືກໍ່ໃຫ້ເກີດການຂົ່ມຂູ່ໂດຍກ່າວວ່າ: **"ຜູ້ໃດຖືອາວຸດເພື່ອປະທຸຮ້າຍເຮົາ ເຂົາຄົນນັ້ນບໍ່ແມ່ນສ່ວນຫນຶ່ງຂອງພວກເຮົາ."**[19]

ທ່ານຍັງໄດ້ກ່າວວ່າ: **"ພວກທ່ານຢ່າໄດ້ຊີ້ຫນ້າເພື່ອນພີ່ນ້ອງຂອງພວກເຈົ້າດ້ວຍອາວຸດ ເພາະເຂົາບໍ່ຮູ້ວ່າບາງທີໄຊຕອນ (ມານຮ້າຍ) ຈະຊ່ວຍກະຕຸກໃຫ້ມືຂອງເຂົາ (ໃຫ້ກໍ່ເຫດຄາດຕະກຳ) ເຊິ່ງເປັນເຫດທີ່ເຮັດໃຫ້ເຂົາຕົກຢູ່ໃນເຫວຂອງນະລົກ."**[20]

ທ່ານສາສະນະທູດຍັງໄດ້ເຕືອນຍ້ຳໃຫ້ປະຊາຊາດຂອງທ່ານໃຫ້ຫນັກແນ້ນໃນເລື່ອງສັນຕິພາບ ແລະ ປົກປ້ອງຈາກຄວາມວຸ່ນວາຍ. ສິ່ງທີ່ບໍ່ດີ ແລະ ຄວາມບໍ່ເປັນທຳ ພຣະອົງຊົງກ່າວວ່າ, **"ໂອ້ມະນຸດເອີຍ, ພວກທ່ານຢ່າໄດ້ປາດຖະນາທີ່ຈະປະເຊີນໜ້າກັບເຫຼົ່າສັດຕູ ພວກທ່ານຈົ່ງຂໍຈາກອັລລໍຫ໌ໃຫ້ຫນີພົ້ນ (ຈາກສັດຕູ) ແຕ່ຖ້າຫາກວ່າພວກທ່ານບໍ່ສາມາດຫຼີກລ່ຽງໄດ້ທີ່ຕ້ອງພົບກັບພວກເຂົາ ກໍ່ຈົ່ງອົດທົນ ແລະ ໜັກແໜ້ນໃນຈຸດຢືນຂອງພວກທ່ານເຖີດ."**[21]

ແລະ ໜຶ່ງໃນຄຳອະທິຖານຂອງສາດສະດາໃນເວລາທີ່ເພິ່ນໄດ້ເຫັນດວງເດືອນເດືອນໃນຕົ້ນເດືອນແມ່ນ:

اللَّهُمَّ أَهْلِلْهُ عَلَيْنَا بِالأَمْنِ وَالإِيْمَانِ وَالسَّلاَمَةِ والإِسْلاَمِ رَبِّيْ ورَبُّكَ اللهُ

ມີຄວາມວ່າ **"ໂອ້ອົງຜູ້ອະພິບານຂອງພວກເຮົາ! ຂໍພຣະອົງຊົງເຮັດໃຫ້ມັນ (ເດືອນໃຫມ່) ມາເຍືອນພວກເຮົາພ້ອມດ້ວຍສັນຕິ ແລະ ອີມານ**

**(ຄວາມສັດທາ) ແລະ ດ້ວຍຄວາມປອດໄພ ແລະ ອິສລາມ ພຣະເຈົ້າຂອງຂ້ອຍແລະຂອງເຈົ້າແມ່ນອັລລໍຫ໌”[22]**

[15] ອັລ-ບຸກໍຣີ. (ໝາຍເລກ 6066), ມຸສລິມ (ໝາຍເລກ 6477.6482.6486)

[16] ອັລ-ບຸກໍຣີ. (ໝາຍເລກ 10), ມຸສລິມ (ໝາຍເລກ 40)

[17] ອະຫມັດ ອັລ-ມຸສນັດ (6:21-22), ອັລບະກໍວີ ຊັຣຫຸສ ສຸນນະຫ໌ (1-29) ອັລ-ອັລບານີ ລວມຫະດີຊ ຊໍຮີຫ໌ (ໝາຍເລກ 549)

[18] ອັລ-ບຸກໍຣີ. (ໝາຍເລກ 4:142), ມຸສລິມ (ໝາຍເລກ 6085)

[19] ອັລ-ບຸກໍຣີ. (ໝາຍເລກ 7070), ມຸສລິມ (ໝາຍເລກ 2625)

[20] ອັລ-ບຸກໍຣີ. (ໝາຍເລກ 7072), ມຸສລິມ (ໝາຍເລກ 2617)

[21] ມຸສລິມ (ໝາຍເລກ 4517)

[22] ອະຫມັດ (1:126) ອັດ-ຕັຣມີຊີ 2:256) ອັລ-ຫາກິມ (4:285) ອັດ-ດາຣິມີຍ໌ (2:4) ອັລ -ອັລບານີຍ໌ ລວມຫະດີຊຊໍຮີຫ໌ (ໝາຍເລກ 1816) ເປັນຮະດີຊຫະສັນ

## ສັນຕິພາບໃນກົດບັນຫຍັດສາສະໜາ

ສ່ວນຫນຶ່ງຂອງຈຸດປະສົງສຳຄັນຂອງສາສະໜາບັນຫຍັດໃນອິສລາມ ແມ່ນເພື່ອປົກປ້ອງຮັກສາປັດໄຈຫ້າອົງປະກອບນັ້ນຄື:

ສາດສະຫນາ, ກຽດສັກສີ, ສະຕິປັນຍາ, ສັບສິນ ແລະ ຊີວິດ, ດັ່ງນັ້ນອິສລາມຈຶ່ງໄດ້ຕັ້ງກົດລະບຽບ ແລະ ບັນທັດຖານ ອັນນຳໄປສູ່ການປົກປັກຮັກສາປັດໄຈທັງ 5 ປະການດັ່ງກ່າວ ເພື່ອການສ້າງສັນຕິພາບທີ່ແທ້ຈິງ ກົດທີ່ເວົ້າມາກໍ່ແມ່ນ:

«دَرْءُ الْمَفَاسِدِ أَوْلَى مِنْ جَلْبِ الْمَصَالِحِ»

ຫມາຍເຖິງ **ການປ້ອງກັນ ແລະ ກຳຈັດໄພພິບັດຫຼືຄວາມຫາຍະນະ ເປັນສິ່ງສຳຄັນແລະຕ້ອງມາກ່ອນການສະແວງຫາຜົນປະໂຫຍດ**[23]

ກົດອີກຂໍ້ໜຶ່ງທີ່ປະກົດໃນວັດຈະນະຂອງທ່ານສາສະນະທູດເຊິ່ງໄດ້ກ່າວວ່າ: «لاَ ضَرَرَ وَلاَ ضِرَارَ»

ຫມາຍຄວາມວ່າ **"ຢ່າປ່ອຍໃຫ້ການກະທຳໃດໆເປັນອັນຕະລາຍຕໍ່ຕົວເອງ ແລະ ການກະທຳທີ່ເປັນອັນຕະລາຍຕໍ່ຜູ້ອື່ນ"**[24]

---

[23] ອັລ-ອິຊ ອິບນຸ ອັບດຸສລາມ *ເກາະວາອິດຸລ ອະຫ໌ກາມ* (1:9) ອັສ-ສຸຍູຕີຍ໌ ອັລ-ອັຊບາຫ໌ ວັນ-ນະຊໍອິຣ (ໜ້າ 78,105) ອິບນຸ ນະຄີມ ອັລ-ອັຊບາຫ໌ ວັນ-ນະຊໍອິຣ (ໜ້າ 90)

[24] ມາລິກ. ອັລ-ມຸວັດເຕາະອ໌ (ໝາຍເລກ 31) ມູຣຊັລ, ອະຫມັດ (1:313,5:326-327). ອິບນຸ ມາຈະຫ໌ (ໝາຍເລກ 2340,2341) ອັດ-ດາຣກໍອຸດນີຍ໌ (ໝາຍເລກ 522) ອັລ-ຫາກິມ (2:57-58) ອັລ-ໄບຮາກີ *ອັສ-ສຸນັນ ອັລ-ກຸບຣໍ* (6:69-70) ມັຣຟູອ໌ ອັລ-ບານີຍ໌. ລວມຫະດີຊຊໍຮີຫ໌ (ໝາຍເລກ 149) ເປັນຮະດີຊ ຊໍຮີຫ໌.

ການຫຼີກລ່ຽງໄພອັນຕະລາຍ ແລະ ບໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊີວິດຂອງສ່ວນບຸກຄົນ, ສັງຄົມລວມ, ແລະ ລະດັບປະຊາຄົມສາກົນລະຫວ່າງປະເທດຈຶ່ງນັບເປັນສັນຕິພາບທີ່ແທ້ຈິງ.

ອາດຈະບໍ່ມີຄຳສອນຢູ່ໃນສາສະໜາໃດ ຫຼື ລະບົບສັງຄົມໃດໃນໂລກນີ້ທີ່ກຳໜົດໃຫ້ມີຄວາມສັນຕິພາບໃນພາກປະຕິບັດ ແລະ ຍັງກຳຫນົດໃຫ້ສັນຕິພາບເປັນຫນຶ່ງໃນສັນຍາລັກ ແລະ ຫຼັກການທາງສາສະຫນາ ຄືກັນກັບທີ່ອິດສະລາມໄດ້ກຳໜົດໄວ້ແກ່ຜູ້ທີ່ເຮັດພິທີຮັຈໃນມັກກະຫ໌ ທັ້ງນີ້ຜູ້ໃດກໍ່ຕາມທີ່ຕ້ອງການມີຄວາມປະສົງປະກອບພິທີຮັຈ ແລະ ນຽດ (ຕັ້ງໃຈ) ເຮັດຮັຈແລ້ວ ນັບຕັ້ງແຕ່ວິນາທີນັ້ນເປັນການຫ້າມສຳຫຼັບລາວທີ່ຈະຕັດເລັບ, ໂກນຜົມ, ເດັດໃບໄມ້, ຕັດຕົ້ນໄມ້, ຂ້າສັດ, ລ່າສັດ, ຫຼື ເຮັດອັນໃດທີ່ສ້າງຄວາມເດືອດຮ້ອນໃຫ້ຄົນອື່ນ ບໍ່ວ່າຈະເປັນການກະທຳ ຫຼື ຄຳເວົ້າຂອງລາວ ບໍ່ອະນຸຍາດໃຫ້ມີການໂຕ້ຕອບໃດໆ ເຖິງແມ່ນວ່າໃນຂະນະທີ່ກຳລັງປະເຊີນກັບຄາດຕະກອນທີ່ຂ້າພໍ່ຜູ້ບັງເກີດຂອງລາວກໍ່ຕາມ ອັລກຸຣອານໄດ້ລະບຸໄວ້ວ່າ:

﴿ فَمَنْ فَرَضَ فِيهِنَّ الْحَجَّ فَلا رَفَثَ وَلا فُسُوقَ وَلا جِدَالَ فِي الْحَجِّ ﴾

(البقرة : 197)

ຄວາມວ່າ **ສະນັ້ນ ໃຜກໍຕາມທີ່ເລີ່ມປະຕິບັດຮັຈ ໃນເດືອນ(ທີ່ກຳໜົດ) ເຫຼົ່ານັ້ນແລ້ວ ລາວຕ້ອງບໍ່ມີການ flirtation (ຫຼືສະນອງຄວາມຢາກ) ບໍ່ມີການລ່ວງລະເມີດ ບໍ່ມີການຂັດແຍ້ງໃດໆໃນເວລາເຮັດຮັຈ** (2:197)

ຍ້ອນວ່າລາວໄດ້ກະທຳການ**ອິຫ໌ຣອມ** (ການຕັ້ງເຈດຕະນາໃນໃຈເມື່ອເລີ່ມເຮັດພິທີຮັຈ) ເຮັດໃຫ້ລາວໄດ້ກາຍເປັນຜູ້ນຳເອົາຄວາມສະຫງົບສັນຕິພາບ ບໍ່ແມ່ນພຽງແຕ່ສຳລັບຕົວຂອງລາວເອງເທົ່ານັ້ນ. ຫາກຍັງລວມເຖິງບັນດາສິ່ງທີ່ຢູ່ອ້ອມຂ້າງຕົວເຂົາ. ບໍ່ວ່າຈະເປັນຄົນ, ສັດ ຫຼື ຕົ້ນໄມ້ກໍ່ຕາມ.

ເຊັ່ນດຽວກັນກັບການຖືສິນອົດງົດອາຫານ ຜູ້ທີ່ຖືສິນອົດລາວຈຳເປັນຕ້ອງອົດກັ້ນລະງັບຄວາມຮູ້ສຶກຂອງລາວ. ພ້ອມທີ່ຈະສະຫງົບສະງ່ຽມຈຽມຄຳເວົ້າ (ບໍ່ຕອບໂຕ້) ດັ່ງທີ່ທ່ານສາດສະ(ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໄດ້ກ່າວວ່າ: **"ການຖືສິນອົດເປັນດັ່ງຄືກັບກຳແພງ (ທີ່ຄ່ອຍປ້ອງສະກັດກັນບໍ່ໃຫ້ເຂົ້າ ນະລົກ). ຫາກຜູ້ໃດທີ່ຖືສິນອົດ ລາວຜູ້ນັ້ນຢ່າເຮັດສິ່ງທີ່ໄຮ້ປະໂຫຍດ, ຫລືໃຈຮ້າຍໂກດເຄືອງ. ຫາກມີຄົນໃດດ່າທໍຫຼືທຳຮ້າຍເຂົາ, ກໍ່ຈົ່ງຕອບໄປວ່າ, 'ຂ້ອຍກຳລັງຖືສິນອົດ."**[25]

## ຊະກາດ ຫຼັກປະກັນສັງຄົມເພື່ອການສ້າງສັນຕິພາບ

ການຈ່າຍ ຊະກາດ ນັບເປັນໜຶ່ງໃນຂໍ້ກຳນົດບົດບັນຫຍັດຂອງອິດສະລາມທີ່ໃຫ້ຄວາມສຳຄັນເນັ້ນໜັກກັບສັນຕິພາບ ນັ້ນກໍ່ຄືການປອດປ່ອຍຕ່ອງໂສ້ຂອງຄວາມທຸກຍາກ ແລະ ໂລກໄພໄຂ້ເຈັບ.

ຊະກາດ ຄືໜຶ່ງໃນຫ້າຫຼັກການຂອງອິດສະລາມ ທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໄດ້ກ່າວໄວ້ວ່າ: **"ນອກເໜືອຈາກຊະກາດແລ້ວ ຍັງມີຫຼາຍຊ່ອງທາງທີ່ຊາວມຸດສະລິມຕ້ອງບໍລິຈາກສັບສິນບັດຂອງເຂົາ."**[26]

ດ້ວຍເຫດນີ້ ອິສລາມບໍ່ໃຫ້ການຍອມຮັບ ຖ້າຫາກບຸກຄົນໃດໜຶ່ງໃນສັງຄົມປະສົບກັບຄວາມອຶດຢາກຫິວໂຫຍ ເຖິງແມ່ນວ່າຄົນໆນັ້ນບໍ່ແມ່ນມຸດສະລິມກໍ່ຕາມ ອິສລາມຖືວ່າເປັນຫນ້າທີ່ຂອງທຸກຄົນທີ່ຈະຕ້ອງໃຫ້ຫຼັກຮັບປະກັນເລື່ອງປາກທ້ອງແກ່ສະມາຊິກທຸກຄົນໃນສັງຄົມ. ດັ່ງທີ່ທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ໄດ້ກ່າວວ່າ: **"ບໍ່ແມ່ນຜູ້ທີ່ເຊື່ອຕໍ່ຂ້ອຍ ຖ້າຜູ້ໃດນອນໃນຕອນກາງຄືນໃນສະພາບເຕັມອີ່ມ ໃນຂະນະທີ່ເພື່ອນບ້ານໃກ້ຄຽງຂອງລາວກຳລັງອຶດຫິວ, ທັ້ງໆທີ່ລາວຮູ້ເຫັນ."**[27]

ຄຳວ່າເພື່ອນບ້ານ ລວມທັງຄົນທີ່ມຸດສະລິມ ແລະ ຄົນທີ່ບໍ່ແມ່ນຊາວມຸດສະລິມ.

ມີລາຍງານທ່ານມຸຈາຮິດ ນັກວິຊາການຊາວມຸດສະລິມໃນສະຕະວັດທີສອງກ່າວວ່າ: ເທື່ອໜຶ່ງທ່ານໄດ້ນັ່ງຢູ່ກັບ ທ່ານອັບດຸລລໍຫ໌ ອິບນຸ ອັມຣ ຣໍດີຢັລລໍຮຸອັນຮຸມາ ໜຶ່ງໃນສາວົກຂອງທ່ານສາດສະດາ ໃນຂະນະທີ່ຄົນຮັບໃຊ້ຂອງທ່ານກຳລັງຕັດຊິ້ນແບ້, ທ່ານອັບດຸລລໍຫ໌ໄດ້ເວົ້າກັບຜູ້ຮັບໃຊ້ຂອງທ່ານ: "ຕອນໃດສິແລ້ວ? ເມື່ອຊຳແຫລະຊີ້ນແລ້ວໆ ເຈົ້າຈົ່ງນຳເອົາໄປໃຫ້ແກ່ເພື່ອນບ້ານຊາວຢິວຂອງເຮົາ" ທັນໃດນັ້ນມີຄົນຖາມຂຶ້ນມາວ່າ "ເອົາໄປໃຫ້ຊາວຢິວແນວນັ້ນບໍ?" ທ່ານອັບດຸລລໍຫ໌ ຕອບວ່າ "ຂ້າພະເຈົ້າເຄີຍໄດ້ຍິນທ່ານສາສະນະທູດເຄີຍສັ່ງເສຍບ່ອຍໆວ່າ ໃຫ້ພວກເຮົາເຮັດດີຕໍ່ເພື່ອນບ້ານຂອງພວກເຮົາ ຈົນພວກ

ເຮົາຄິດວ່າ ທ່ານອາດຈະອະນຸຍາດໃຫ້ເພື່ອນບ້ານຂອງທ່ານສາມາດຮັບມໍລະດົກຈາກພວກເຮົາໄດ້." [28]

ເປັນທີ່ຮູ້ກັນດີວ່າ ໜຶ່ງໃນບັນດາຜູ້ມີສິດທີ່ຈະໄດ້ຮັບຊະກາດນັ້ນ ແມ່ນ ຊາວກາຟີຣ (ຜູ້ທີ່ບໍ່ແມ່ນຊາວມຸດສະລິມ) ທີ່ປະສົງທີ່ຈະຮັບອິດສະລາມ ນັກວິຊາການອິດສະລາມຕ່າງກໍ່ຍອມຮັບວ່າ ອະນຸຍາດໃຫ້ຮັບຂອງຂວັນຈາກຜູ້ທີ່ປະຕິເສດສັດທາ ບໍ່ວ່າຈະເປັນຝັກພວກໃດ ເຖິງແມ່ນວ່າກະທັ່ງພວກທີ່ເຮັດສົງຄາມຕໍ່ສູ້ກັບຊາວມຸດສະລິມກໍ່ຕາມ.[29]

ສັນຕິພາບໃນອິດສະລາມບໍ່ຈຳກັດພຽງສະເພາະແຕ່ເພື່ອນບ້ານທີ່ເປັນມະນຸດເທົ່ານັ້ນ ຫາກແຕ່ມັນຍັງກວມເອົາທັ້ງສັດ ຫຼືແມ້ກະທັ້ງຫມາ ທີ່ອິດສະລາມຖືວ່າເປັນສັດທີ່ບໍ່ສະອາດ (ນະຍິສ)

ແມ່ຍິງນາງໜຶ່ງຕ້ອງເຂົ້ານະຣົກ ດ້ວຍເຫດຜົນທີ່ນາງກັກຂັງ ແລະ ທໍລະມານແມວຈົນຕາຍ ດັ່ງຄວາມຫມາຍຂອງຫະດິຊວ່າ: **"ແມ່ຍິງນາງໜຶ່ງຕ້ອງເຂົ້ານະຣົກ ດ້ວຍສາເຫດທີ່ນາງກັກຂັງ ແລະ ທໍລະມານແມວໂຕໜຶ່ງ ໂດຍທີ່ນາງບໍ່ໃຫ້ຫາອາຫານ ແລະ ບໍ່ປ້ອຍໃຫ້ມັນຫາອາຫານເອງ ຈົນແມວໂຕນັ້ນຕາຍຍ້ອນຄວາມອຶດຫິວ."**[30]

ໃນຂະນະດຽວກັນ, ປະຕູສະຫວັນຕ້ອນຮັບຊາຍຄົນໜຶ່ງ ແລະ ການໃຫ້ອະໄພຂອງອັລລໍຫ໌ໄດ້ແຜ່ເຖິງຊາຍຜູ້ນັ້ນ ເນື່ອງຈາກລາວມີຄວາມເມດຕາໃຫ້ນ້ຳແກ່ໝາທີ່ເລຍດິນຝຸ່ນເພື່ອແກ້ຄວາມກະຫາຍນ້ຳ ດັ່ງທີ່ປາກົດຢູ່ໃນຫະດິຊທີ່ລາຍງານໂດຍ ອະບູ ຫຸຣອຍເຣາະຫ໌ ຣໍດິຍັລລໍຮຸອັນຮຸ ຄວາມວ່າ: **"ໃນຂະນະທີ່ຊາຍຄົນໜຶ່ງຍ່າງຢູ່ບົນຖະຫນົນ ລາວຮູ້ສຶກກະຫາຍນ້ຳຢ່າງເປັນທີ່ສຸດ ແລະໄດ້ພົບເຫັນນ້ຳສ້າງແຫ່ງໜຶ່ງ ລາວ**

**ຈຶ່ງປີນລົງໄປດື່ມນ້ຳຈາກນ້ຳສ້າງນັ້ນ ແລ້ວກັບອອກມາ. ທັນໃດນັ້ນລາວໄດ້ພົບກັບໝາໂຕໜຶ່ງທີ່ກະຫາຍນ້ຳຫຼາຍ ຈົນຕ້ອງເລຍດິນເພື່ອບັນເທົາຄວາມກະຫາຍ ຜູ້ຊາຍຄິດກັບຕົນເອງວ່າ, ໝາໂຕນີ້ກະຫາຍນ້ຳຄືກັບຂ້ອຍກະຫາຍນ້ຳກ່ອນຫນ້ານີ້, ລາວຈຶ່ງລົງໄປໃນນ້ຳສ້າງອີກ ແລະ ໃຊ້ເກີບຂອງລາວເພື່ອຕັກນ້ຳ ແລະໃຊ້ປາກຄາບເກີບທີ່ເຕັມໄປດ້ວຍນ້ຳເອົາຂຶ້ນມາ ແລະ ຖອກໃສ່ປາກໝາໂຕນັ້ນ. ອັລລໍຫ໌ຊົງຕອບແທນລາງວັນໃຫ້ລາວສຳລັບການກະທຳຂອງລາວ. ພຣະອົງໄດ້ໃຫ້ອະໄພໂທດແກ່ລາວແລ້ວ.”**

ບັນດາສາວົກຂອງທ່ານໄດ້ຖາມວ່າ: “ພວກເຮົາໄດ້ການຕອບແທນເນື່ອງຈາກ ເຮັດດີຕໍ່ສັດແນວນັ້ນບໍ?” ທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ສັນຕິສຸກຈົ່ງມີແກ່ທ່ານ) ຕອບວ່າ: **“ການເຮັດດີຕໍ່ທຸກສິ່ງທີ່ຫົວໃຈຍັງມີຊີວິດ ຈະໄດ້ຮັບຜົນຕອບແທນ** [31]

[25] ອັລ-ບຸກຄໍຣີ (ໝາຍເລກ 1984-1904)

[26] ອັດ-ຕັຣມິຊີ (ໝາຍເລກ 659) ອັດ-ດາຣີມີຍ໌ (1:385) ອັລ -ອັລບານີຍ໌ ຕັຄຣີຈ *ອະຫາດິຊ ມຸຊກິລະຕຸລ ຟັກຣ* (ໝາຍເລກ 103) ເປັນຫະດິຊ ດໍອິຟ

[27] ອັລ-ບັຊຊາຣ *ກັຊຟູລ ອັສຕາຣ* (ໝາຍເລກ 119) ອັດ-ເດາະບາຣໍນີ *ອັລ-ມູອຈັມ ອັລ-ກະບີຣ (1:66)* ອັລ -ອັລບານີຍ໌ ລວມຫະດິຊຊໍຮີຫ໌ (ໝາຍເລກ 149) ເປັນຣະດິຊ ຊໍຮີຫ໌.

[28] ອັລ-ບຸກຄໍຣີ ອ້າງຈາກ ອັລ-ອັລບານີຍ໌ ຊໍຮີຫ໌ ອັລ-ອະດັບ ອັລ-ມຸຟຣ໊ອດ (ໝາຍເລກ847)

[29] ອິບນຸ ກຸມາມະຫ໌ ອັລ-ມຸກິນີ (1984-1904) [30] ອັລ-ບຸກຄໍຣີ (ໝາຍເລກ 3482) ມຸສລິມ (ໝາຍເລກ 6915)

[31] ອັລ-ບຸກຄໍຣີ (ໝາຍເລກ 2363) ມຸສລິມ (ໝາຍເລກ 2244)

ນີ້ແມ່ນຕົວຢ່າງຂອງສັນຕິພາບທີ່ສົມບູນແບບໃນອິສລາມ ສັນຕິພາບທີ່ຝັງເລິກຢູ່ໃນຈິດໃຈ ແລະ ຖືກເຜີຍອອກມາໂດຍຜ່ານການກະທຳອັນປ່ຽມດ້ວຍຄວາມເມດຕາ ກະລຸນາ ຄວາມເອື້ອເຟື້ອເພື່ອແຜ່ ແລະ ຄວາມອ່ອນໂຍນ ສັນຕິພາບທີ່ແຜ່ລາມໄປທົ່ວທຸກມຸມໂລກດ້ວຍຄວາມໝາຍທີ່ແຝງຢູ່ທັງໝົດຂອງມັນ ບັນດາຜູ້ທີ່ດຳລົງໄວ້ເຊິ່ງຄວາມສັນຕິພາບ ຈະໄດ້ຮັບການຍ້ອງຍໍ ແລະ ຜົນຕອບແທນໃນສະຫວັນອັນສູງສົ່ງ ສັນຕິພາບທີ່ນຳມາເຊິ່ງຄວາມສະຫງົບສຸກມາຍັງມວນມະນຸດ ແລະ ປະເທດຊາດບ້ານເມືອງ ແລະເປັນເຫດໃຫ້ອັລລໍຫ໌ຍົກຍ້ອງສັນລະເສີນ ແລະ ໃຫ້ລາງວັນຕອບແທນຜູ້ທີ່ຮັກສັນຕິພາບໃນວັນແຫ່ງການພິພາກສາ.

# ສັນຕິພາບ

# ໃນມິຕິຂອງຄວາມສຳພັນກັບຊາວຕ່າງສາສະໜາ

## ສູ່ສັນຕິພາບ ແລະ ການຮ່ວມມືກັນ

ຫນຶ່ງໃນຫຼັກການທີ່ສຳຄັນຂອງອິດສະລາມທີ່ໄດ້ສ້າງຕັ້ງຂຶ້ນສຳລັບການດຳເນີນຊີວິດຂອງມະນຸດ ຄື ຄວາມສະຫງົບຄວາມສານຕິ ແລະ ຄວາມມັ່ນຄົງປອດໄພ ຄວາມສຳພັນຂອງອິດສະລາມກັບສາສະຫນາອື່ນໆ, ບໍ່ວ່າຈະຢູ່ໃນລະດັບບຸກຄົນ ຫຼື ລະດັບປະເທດຊາດ ຄືຄວາມສຳພັນໃນຮູບແບບຂອງການຮູ້ຈັກເຊິ່ງກັນແລະກັນ ສະໜັບສະໜູນເກື້ອກູນກັນ ການເຜີຍແຜ່ ແລະ ເຮັດຄວາມດີ ບໍ່ແມ່ນຄວາມສຳພັນໃນຮູບແບບການຂັດແຍ້ງ, ການກໍ່ການຮ້າຍ, ຫຼື ການໂຄ່ນລົ້ມ.

ຫາກເຮົາໄດ້ພິຈາລະນາຄຳສອນຕ່າງໆ ຂອງອິດສະລາມ, ຍ່ອມຕ້ອງເຫັນໄດ້ຊັດເຈນວ່າພື້ນຖານຂອງຄຳສອນຂອງອິດສະລາມ ຄື ການເຊີນຊວນມວນມະນຸດຊາດສູ່ການສ້າງຄວາມຜາສຸກ ແລະ ສັນຕິພາບຄວາມສະຫງົບສຸກຢ່າງແທ້ຈິງ ແລະ ຄອບຄຸມທຸກສິ່ງໃນໂລກນີ້ແລະໂລກໜ້າ ໃນໂລກນີ້ແມ່ນຄວາມສັນຕິ ແລະ ຄວາມໝັ້ນຄົງໃນຊີວິດ ແລະ ໃນໂລກໜ້າແມ່ນຄວາມຜາສຸກໃນສວນສະຫວັນ, ເຊິ່ງເປັນທີ່ພຳນັກທີ່ເຕັມໄປດ້ວຍຄວາມສັນຕິທີ່ຍືນຍົງ.

ອັລລໍຫ໌ໄດ້ກ່າວວ່າ:

﴿وَلْتَكُنْ مِنْكُمْ أُمَّةٌ يَدْعُونَ إِلَى الْخَيْرِ وَيَأْمُرُونَ بِالْمَعْرُوفِ وَيَنْهَوْنَ عَنِ الْمُنْكَرِ وَأُولَئِكَ هُمُ الْمُفْلِحُونَ﴾ (آل عمران: 104)

ຄວາມໝາຍວ່າ **ແລະຈົ່ງໃຫ້ມີໃນບັນດາພວກເຈົ້າ ເຊິ່ງເປັນປະຊາຊາດໜຶ່ງທີ່ເຊື້ອເຊີນສູ່ຄວາມປະເສີດ ສັ່ງເສຍໃນເລື່ອງການກະທຳຄວາມດີ ແລະ ຫ້າມປາມຈາກຄວາມຊົ່ວຮ້າຍ ແລະ ພວກເຂົາເຫຼົ່ານັ້ນຄືຜູ້ທີ່ປະສົບຜົນສຳເລັດ** (3: 104).

ຄຸນງາມຄວາມປະເສີດທີ່ກ່າວເຖິງໃນໂອງການຂ້າງເທິງນີ້ ຄື ອິດສະລາມ, ເຊິ່ງເປັນລະບອບແຫ່ງການດຳເນີນຊີວິດສຳຫຼັບມະນຸດຊາດ.

ອັລກຸຣອານໄດ້ເຊື້ອເຊີນມວນມະນຸດທັ້ງຫຼາຍສູ່ການຍອມຮັບອິດສະລາມ ຊຶ່ງເປັນຫົນທາງສູ່ຄວາມສຳເລັດ ແລະ ເປັນຫົນທາງສູ່ການສ້າງສັນຕິພາບຮ່ວມກັນທັ້ງໃນໂລກນີ້ ແລະ ໂລກໜ້າ ແຕ່ດ້ວຍພຣະປະສົງຂອງພຣະຜູ້ເປັນເຈົ້າ ເຮົາພົບວ່າມີມະນຸດບາງສ່ວນໄດ້

ປະຕິເສດຄຳເຊີນຊວນນີ້ ແລະ ບໍ່ຍອມຮັບຫຼັກການຮ່ວມມືເພື່ອໃຫ້ເກີດສັນຕິພາບແຫ່ງອິດສະລາມທີ່ຄອບຄຸມທັ້ງສອງໂລກ

ຢ່າງໃດກໍຕາມ, ເຖິງແມ່ນວ່າບໍ່ແມ່ນທຸກຄົນທີ່ຈະຍອມຮັບອິດສະລາມ, ແຕ່ອິດສະລາມກໍ່ຍັງເຊື້ອເຊີນມວນມະນຸດທັ້ງໝົດສູ່ການເຮັດຄວາມຮູ້ຈັກ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນເລື່ອງຄຸນງາມຄວາມດີແລະຄຸນງາມຄວາມດີສິ່ງທີ່ເປັນປະໂຫຍດແກ່ສັງຄົມ ແລະ ຄຸນນະທຳທີ່ດີ ເພື່ອໃຫ້ເກີດສັນຕິພາບໃນບໍລິບົດຍ່ອຍສະເພາະສຳຫຼັບໂລກນີ້ເຊັ່ນດຽວກັນ

ອັລກຸຣອານໄດ້ກຳໜົດຂອບເຂດຂອງຄວາມສຳພັນລະຫວ່າງມະນຸດວ່າ

﴿يَا أَيُّهَا النَّاسُ إِنَّا خَلَقْنَاكُمْ مِنْ ذَكَرٍ وَأُنْثَى وَجَعَلْنَاكُمْ شُعُوباً وَقَبَائِلَ لِتَعَارَفُوا إِنَّ أَكْرَمَكُمْ عِنْدَ اللَّهِ أَتْقَاكُمْ إِنَّ اللَّهَ عَلِيمٌ خَبِيرٌ﴾

(الحجرات : 13)

ຄວາມໝາຍ: **ໂອ້ ມະນຸດທັງປວງ! ແທ້ຈິງ ເຮົາໄດ້ສ້າງພວກເຈົ້າຈາກເພດຊາຍ ແລະ ເພດຍິງ (ໝາຍເຖິງສ້າງມາຈາກອາດຳ ແລະ ຮາວາ (ເອວາ) ຜູ້ມະນຸດຊາຍຍິງຄູ່ທຳອິດ) ແລະ ໃຫ້ພວກເຈົ້າເປັນກຸ່ມພວກ ແລະ ຫມູ່ເຫລົ່າ ເພື່ອພວກເຈົ້າຈະໄດ້ສ້າງຄວາມຮູ້ຈັກເຊິ່ງກັນແລະກັນ ແທ້ຈິງແລ້ວ, ຜູ້ທີ່ມີກຽດທີ່ສຸດໃນບັນດາພວກເຈົ້າ ນະທີ່ອັລລໍຫ໌ແມ່ນຜູ້ທີ່ຢ້ານກົວຢຳເກງຫລາຍທີ່ສຸດ ແທ້ຈິງອັລລໍຫ໌ນັ້ນຊົງຮອບຮູ້ຢ່າງລະອຽດຖີ່ຖ້ວນຍິ່ງ .**(13 :49)

ການເຮັດຄວາມຮູ້ຈັກເຊິ່ງກັນແລະກັນ ໃນປະເດັນຄວາມສຳພັນລະຫວ່າງມະນຸດ ບໍ່ວ່າຈະມີຄວາມແຕກຕ່າງທາງຊົນເຜົ່າ, ສັນຊາດ, ສີຜິວ, ແລະ ພາສາ ມີໄນຍະເລິກຊຶ້ງກວ່າພຽງແຕ່ການຮູ້ຈັກຊື່ພຽງຜິວເຜີນ ທະວ່າເປັນການເຮັດຄວາມຮູ້ຈັກທີ່ຈະນຳໄປສູ່ການແລກປ່ຽນຄຸນປະໂຫຍດແຫ່ງຄຸນງາມຄວາມດີອັນສູງສົ່ງ ແລະ ການຊ່ວຍເຫຼືອສະໜັບສະໜູນລະຫວ່າງກັນແລະກັນ.

ແລະເພື່ອສ້າງຄວາມໝາຍຂອງການເຮັດຄວາມຮູ້ຈັກທີ່ມີຈຸດປະສົງອັນຍິ່ງໃຫຍ່ນີ້ ຍ່ອມຕ້ອງການທຳມະຊາດແຫ່ງຄວາມສຳພັນທີ່ສັນຕິ ແລະ ເອື້ອອຳນວຍ ໂດຍວິທີການແຂ່ງຂັນມີຄວາມຕັ້ງໃຈທີ່ຈະປະຕິບັດເພື່ອຄວາມຢຳເກງ ແລະ ການສະແຫວງຫາກຽດອັນສູງສົ່ງ ຍົກລະດັບເສີມຂະຫຍາຍສາຍພົວພັນລະຫວ່າງຕົວບຸກຄົນ ກຸ່ມຊົນ ແລະເຊື້ອຊາດຂຶ້ນສູ່ລະດັບແລກປ່ຽນອັນເປັນເປົ້າປະສົງ ນັ້ນກໍ່ຄື **"ການເຮັດຄວາມຮູ້ຈັດເຊິ່ງກັນແລະກັນ"** ແລະ **"ແລກປ່ຽນຄວາມຮູ້ ແລະ ປະສົບການ"** ດ້ວຍຄວາມໝາຍ ໃນຍະທັ້ງໝົດແລະ ຂອບເຂດອັນກ້ວາງຂວາງຂອງມັນ

ດັ່ງນັ້ນ ຖ້າຫາກຍິ່ງບັນລຸເປົ້າປະສົງຂອງການແລກປ່ຽນຄວາມຮູ້ຈັກ ແລະ ການແລກປ່ຽນຄວາມຮູ້ ແລະ ປະສົບຄວາມສາມາດລະຫວ່າງຫມູ່ມະນຸດທຸກລະດັບໄດ້ຫຼາຍພຽງໃດ ກໍ່ແຮງສິຈະສາມາດອຸດຊ່ອງຫວ່າງແຫ່ງການຕໍ່ສູ້ ແລະ ຄວາມຂັດແຍ້ງທີ່ເປັນເຫດຂອງການຂົ່ມເຫັງ ແລະ ການລະເມີດຮຸກຮານ ອັນຈະກໍ່ໃຫ້ເກີດການປະເຊີນຫນ້າ ແລະ ນຳມາເຊິ່ງໄພຄວາມຫາຍະນະມາສູ່ສັງຄົມມະນຸດໄດ້ຫຼາຍທໍ່ນັ້ນ ດ້ວຍເຫດນີ້ການເຮັດຄວາມຮູ້ຈັກກັນລະຫວ່າງມວນ

ມະນຸດເພື່ອຈຸດປະສົງເຊັ່ນນີ້ ຈຶ່ງເປັນເຫດໃຫ້ເກີດຄວາມສັນຕິພາບສະຫງົບສຸກອັນໃຫຍ່ຫຼວງມາສູ່ສັງຄົມມະນຸດ.

ອັລລໍຫ໌ໄດ້ດຳລັດໃນອັລກຸຣອານວ່າ

﴿ وَتَعَاوَنُوا عَلَى الْبِرِّ وَالتَّقْوَى وَلا تَعَاوَنُوا عَلَى الإِثْمِ وَالْعُدْوَانِ وَاتَّقُوا اللَّهَ إِنَّ اللَّهَ شَدِيدُ الْعِقَابِ﴾ (المائدة : 2)

ຄວາມວ່າ **ແລະຈົ່ງຊ່ວຍເຫຼືອເຊິ່ງກັນແລະກັນໃນຄວາມດີ ແລະ ການຢຳເກງ, ແລະ ຢ່າໄດ້ຮ່ວມມືຊ່ວຍເຫຼືອໃນການເຮັດບາບ ແລະ ການລ່ວງລະເມີດ. ແລະຈົ່ງຢຳເກງຢ້ານຕໍ່ອັລລໍຫ໌ ແທ້ຈິງອັລລໍຫ໌ ເປັນຜູ້ໜັກໜ່ວງໃນການລົງໂທດ** (2 :5)

ທຳມະຊາດຂອງການຮູ້ຈັກກັນຈະນຳໄປສູ່ການເກື້ອກູນເຊິ່ງກັນແລະກັນລະຫວ່າງຝ່າຍຕ່າງ ໆ ທີ່ຫລາກຫຼາຍ ອິດສະລາມໄດ້ວາງເງື່ອນໄຂການຊ່ວຍເຫຼືອເກື້ອກູນເປັນເປົ້າປະສົງບົນຫຼັກຂອງການເຮັດດີ ແລະ ການຢຳເກງຢ້ານກົວຕໍ່ພຣະຜູ້ເປັນເຈົ້າ ຫຼັກການສອງຢ່າງນີ້ເປັນຈຸດລວມຂອງຄວາມດີງາມ ແລະ ຄວາມສັນຕິພາບສຳຫຼັບມວນມະນຸດທັງໂລກນີ້ ແລະ ໂລກໜ້າ ໃນຂະນະທີ່ການຊ່ວຍເຫຼືອກັນໃນການເຮັດບາບສິ່ງບໍ່ດີ ແລະ ການລະເມີດທີ່ເກີດຂຶ້ນຫຼາຍ ໆ ເທື່ອ ລະຫວ່າງຜູ້ຄົນໃນໂລກນັ້ນ ເປັນສິ່ງຕ້ອງຫ້າມໃນອິດສະລາມ ເນື່ອງຈາກວ່າທັງສອງປະການຂ້າງຕົ້ນເປັນສາເຫດແຫ່ງຄວາມຊົ່ວຮ້າຍ ແລະ ຫາຍະນະທັງຫລາຍທີ່ນຳໄປສູ່ສົງຄາມ, ການແບ່ງແຍກ, ແລະ ຈຸດໄຟແຫ່ງຄວາມ

ຂັດແຍ້ງທີ່ຈະທຳລາຍສັນຕິພາບ ແລະ ຄວາມສະຫງົບສຸກຂອງມະນຸດຊາດໃນທີ່ສຸດ.

ຈາກທີ່ກ່າວມາຂ້າງເທິງ ເປັນທີ່ຈະແຈ້ງແລ້ວວ່າພື້ນຖານເດີມຂອງຄວາມສຳພັນລະຫວ່າງປະຊາຊາດມຸດສະລິມກັບປະຊາຊາດອື່ນ ໆ ນັ້ນ ຄືສັນຕິພາບ ສ່ວນສົງຄາມແລະການຕໍ່ສູ້ປະທະກັນນັ້ນເປັນສິ່ງທີ່ເກີດຂຶ້ນພາຍຫລັງ ຍ້ອນເຫດ ແລະ ປັດໄຈທີ່ມີຜູ້ອື່ນຮຸກຮານ ແລະ ລະເມີດຕໍ່ພວກເຂົາເຈົ້າ ແລະ ສາສະໜາຂອງພວກເຂົາ.

ສັນຕິພາບເປັນສິ່ງທີ່ຖືກກຳໜົດໃຫ້ມີກັບທຸກຄົນ ບໍ່ແມ່ນຍ້ອນເປັນພຽງແຕ່ຜົນຂອງການຍອມຮັບສັດທາເທົ່ານັ້ນ ຫາກແຕ່ມັນເປັນພື້ນຖານເດີມທີ່ມີຫຼັກຖານວ່າຕ້ອງລະເມີດຫຼືຮຸກຮານ ໃນຂະນະທີ່ສົງຄາມຖືກບັນຫຍັດຂຶ້ນມາເພື່ອປົກປ້ອງສິດແລະເສລີພາບໃນການເຊີນຊວນຮຽກຮ້ອງຂອງອິດສະລາມ ແລະ ຂະຈັດໄພຄຸກຄາມຂົ່ມຂູ່ຕໍ່ຜູ້ທີ່ເຊື່ອນັບຖືອິສລາມ ເປັນການຮັບປະກັນເສັ້ນທາງແຫ່ງການເຊີນຊວນສູ່ອິດສະລາມທີ່ຍົກທຸງແຫ່ງຄວາມເມດຕາ ແລະ ສັນຕິພາບ ອີກທັ້ງຍັງເພື່ອປົກປ້ອງສິດເສລີພາບຂອງມວນມະນຸດໃນການນັບຖື ອິສລາມເປັນສາດສະຫນາ ແລະ ວິຖີການດຳເນີນຊີວິດດ້ວຍຄວາມສະໝັກໃຈ ບໍ່ແມ່ນໂດຍການບີບບັງຄັບຂູ່ເຂັນ ອັລລໍຫ໌ໄດ້ກ່າວວ່າ

﴿لا إِكْرَاهَ فِي الدِّينِ قَدْ تَبَيَّنَ الرُّشْدُ مِنَ الْغَيِّ فَمَنْ يَكْفُرْ بِالطَّاغُوتِ وَيُؤْمِنْ بِاللَّهِ فَقَدِ اسْتَمْسَكَ بِالْعُرْوَةِ الْوُثْقَى لا انْفِصَامَ لَهَا وَاللَّهُ سَمِيعٌ عَلِيمٌ﴾

(البقرة: 256)

ຄວາມຫມາຍວ່າ **ບໍ່ມີການບັງຄັບໃນ (ການນັບຖື) ສາດສະໜາ (ອິດສະລາມ) ແທ້ຈິງທາງນຳນັ້ນໄດ້ປະຈັກຊັດຈາກຄວາມຄິດຄ້ຽວແລ້ວ ດັ່ງນັ້ນຫາກຜູ້ໃດໄດ້ປະຕິເສດຄວາມຈອມປອມ ແລະ ສັດທາຕໍ່ອັລລໍຫ໌ແລ້ວ ສະແດງໃຫ້ເຫັນວ່າລາວໄດ້ຍຶດເອົາເຊືອກອັນແນ່ນຫນາແລ້ວ ແລະ ມັນຈະບໍ່ມີວັນຫຼຸດຈາກໄປ ແລະ ອັລລໍຫ໌ຊົງເປັນຜູ້ໄດ້ຍິນ ແລະ ຮູ້ດີຍິ່ງ (2:256).**

ເປັນສິ່ງທີ່ປະຈັກຊັດເຈນໃນປະຫວັດສາດອິດສະລາມວ່າ ຜູ້ຄົນທີ່ອາໄສຢູ່ໃນລັດອິດສະລາມ ມີສິດເສລີພາບຢ່າງຄົບຖ້ວນທີ່ຈະເລືອກນັບຖືສາສະໜາໃດກໍ່ໄດ້ ບໍ່ປະກົດໃນປະຫວັດສາດອິດສະລາມອັນຍາວນານວ່າມີການບັງຄັບຂູ່ເຂັນໃຫ້ຊາວຍິວ ຊາວຄຣິດສະຕຽນ, ຫຼືຄົນອື່ນ ໆ ໃຫ້ປ່ຽນມານັບຖືເປັນອິດສະລາມ ຂໍ້ເທັດຈິງນີ້ເປັນທີ່ຍອມຮັບກັນ ແມ້ແຕ່ໃນກຸ່ມສາສະນິກອື່ນ ອະທິເຊັ່ນ ທໍມັສ ອາໂນລດ໌ ນັກບຸລະພາຄະດີຊາວອັງກິດຜູ້ໜຶ່ງທີ່ໄດ້ກ່າວວ່າ "ເຮົາບໍ່ເຄີຍໄດ້ຍິນວ່າມີຄວາມພະຍາຍາມໃດໆ ທີ່ເປັນແຜນການເພື່ອບັງຄັບໃຫ້ຜູ້ທີ່ບໍ່ແມ່ນມຸສລິມໃຫ້ຍອມຮັບອິສລາມ ຫຼື ວ່າມີການບີບບັງຄັບຂົ່ມຂູ່ໂດຍມີຈຸດໝາຍເພື່ອທຳລາຍສາສະໜານັ້ນ ໆ ."[32]

[32] ທໍມັສ ອາໂນລດ *ອັດ-ດະວະຫ໌ ອິລັລ ອິສລາມ )The Preaching of Islam)* *(ຫນ້າ 99)*

## ສັນຕິພາບກັບສົງຄາມ

ເປັນສິ່ງທີ່ທຸກຄົນລ້ວນຍອມຮັບວ່າ ນັບຕັ້ງແຕ່ອະດີດຈົນເຖິງປະຈຸບັນ ສົງຄາມບໍ່ເຄີຍຫາຍໄປຈາກໂລກ ອິດສະລາມເປັນສາສະໜາທີ່ເກີດຂຶ້ນທ່າມກາງໂລກທີ່ເຕັມໄປດ້ວຍຄວາມຂັດແຍ້ງ ແລະ ສົງຄາມລະຫວ່າງມະນຸດຊາດ ຈຶ່ງຕ້ອງຄຳນຶງເຖິງຄວາມເປັນຈິງທີ່ບໍ່ສາມາດຫຼີກລ່ຽງໄດ້ ຕາບໃດທີ່ໂລກຕ້ອງປະປົນດ້ວຍກຸ່ມອັນຫຼາກຫຼາຍຂອງມະນຸດດ້ວຍອາລົມ ຄວາມຮູ້ສຶກ ແລະ ຄວາມຕ້ອງການທີ່ບໍ່ມີຂອບເຂດ ແລະ ຕາບໃດທີ່ຄວາມຮູ້ສຶກເຊັ່ນນີ້ ຍັງມີໃນຈິດໃຈຂອງມະນຸດ ບໍ່ວ່າຈະຢູ່ໃນລະດັບຕົວບຸກຄົນ ຫຼື ສັງຄົມໃດກໍ່ຕາມ ແນ່ນອນທີ່ສຸດວ່າຈະຕ້ອງມີຄວາມຂັດແຍ້ງທີ່ອາດນຳໄປສູ່ສົງຄາມໄດ້ໃນບາງກໍລະນີ.

ດ້ວຍເຫດນີ້ ສົງຄາມຈຶ່ງເປັນສິ່ງທີ່ຫຼີກລ່ຽງບໍ່ໄດ້ ແລະ ມີເປັນວິທີການທີ່ໜ້າຊົມເຊີຍ ຖ້າຫາກມີວັດຖຸປະສົງເພື່ອຕໍ່ຕ້ານຜູ້ຣຸກຮານຍັບຍັ້ງຄວາມບໍ່ຍຸຕິທຳ ປົກປ້ອງຄວາມຈິງ ແລະ ເອື້ອມມືເພື່ອຊ່ວຍຜູ້ທີ່ຖືກກົດຂີ່ ສົງຄາມໃນລັກສະນະເຊັ່ນນີ້ຈຶ່ງເປັນການຈຸດປະກາຍຄວາມດີແກ່ມວນມະນຸດ ພ້ອມກັນນັ້ນຫາກເກີດສົງຄາມຂຶ້ນໂດຍມີເປົ້າໝາຍເພື່ອສ້າງຄວາມພິນາດຕໍ່ໂລກ ກົດຂີ່ຂົ່ມແຫງຄົນທີ່ອ່ອນແອ ປົ້ນແລະຍຶດເອົາຊັບພະຍາກອນແລະຄວາມຮັ່ງມີຂອງຊົນຊາດອື່ນ ສົງຄາມໃນລັກສະນະນີ້ເປັນສົງຄາມທີ່ຕ້ອງໄດ້ຮັບການປະນາມສາບແຊ່ງ ເນື່ອງຈາກວ່າບໍ່ພຽງແຕ່ເປັນສັນຍາລັກຂອງຄວາມຊົ່ວຮ້າຍຂອງສັງຄົມເທົ່ານັ້ນ ຫາກແຕ່ມັນເປັນສື່ແຫ່ງຄວາມຫາຍະນະຂອງຊາວໂລກທັງຫມົດ. ຂໍໃຫ້ ອັລລໍຫ໌ຄຸ້ມຄອງດ້ວຍເຖີດ

ດ້ວຍເຫດນີ້ ອິດສະລາມຈຶ່ງຍອມຮັບຫຼັກການພື້ນຖານທີ່ວ່າ ດ້ວຍສົງຄາມ ໂດຍຖືວ່າເປັນທີ່ອະນຸມັດຫາກເປັນການປົກປ້ອງພິທັກສັດຈະທຳ ແລະ ຄວາມສະຫງົບສັນຕິພາບ ແລະສະກັດກັ້ນຄວາມບໍ່ຍຸຕິທຳ, ການຂົ່ມຂູ່, ແລະ ການລະເມີດຣຸກຮານ.

ອັລລໍຫ໌ໄດ້ກ່າວວ່າ:

﴿وَلَوْلا دَفْعُ اللَّهِ النَّاسَ بَعْضَهُمْ بِبَعْضٍ لَفَسَدَتِ الْأَرْضُ وَلَكِنَّ اللَّهَ ذُو فَضْلٍ عَلَى الْعَالَمِينَ﴾ (البقرة : 251)

ຄວາມຫມາຍວ່າ **ແລະຫາກວ່າອັລລໍຫ໌ບໍ່ຊົງປ້ອງກັນມະນຸດເຊິ່ງບາງສ່ວນຂອງພວກເຂົາດ້ວຍກັບບາງສ່ວນແລ້ວແນ່ນອນ ແຜ່ນດິນກໍ່ຍ່ອມເສື່ອມເສຍພັງພິນາດໄປແລ້ວ ແຕ່ທະວ່າອັລລໍຫ໌ ຊົງເປັນຜູ້ມີຄຸນອັນລົ້ນເຫຼືອເໜືອໂລກທັ້ງມວນ** (2:251)

ອັລລໍຫ໌ໄດ້ຕຣັດອີກວ່າ:

﴿وَلَوْلا دَفْعُ اللَّهِ النَّاسَ بَعْضَهُمْ بِبَعْضٍ لَهُدِّمَتْ صَوَامِعُ وَبِيَعٌ وَصَلَوَاتٌ وَمَسَاجِدُ يُذْكَرُ فِيهَا اسْمُ اللَّهِ كَثِيراً وَلَيَنْصُرَنَّ اللَّهُ مَنْ يَنْصُرُهُ إِنَّ اللَّهَ لَقَوِيٌّ عَزِيزٌ ، الَّذِينَ إِنْ مَكَّنَّاهُمْ فِي الْأَرْضِ أَقَامُوا الصَّلاةَ وَآتَوُا الزَّكَاةَ وَأَمَرُوا بِالْمَعْرُوفِ وَنَهَوْا عَنِ الْمُنْكَرِ وَلِلَّهِ عَاقِبَةُ الْأُمُورِ﴾ (الحج : 40-41)

ຄວາມຫມາຍວ່າ **ແລະຫາກອັລລໍຣ໌ບໍ່ຊົງປ້ອງກັນມະນຸດ ໂດຍໃຫ້ບາງສ່ວນຂອງພວກເຂົາປ້ອງກັນອີກບາງສ່ວນແລ້ວ ບັນດາຫໍສວດ ແລະໂບດ (ຂອງຄຣິດສະຕຽນ) ແລະສະຖານທີ່ສວດ (ຂອງຢິວ) ແລະມັສຍິດທັງຫຼາຍ ທີ່ພຣະນາມຂອງອັລລໍຣ໌ຖືກກ່າວເຖິງຢ່າງຫຼວງຫຼາຍ ຈະຕ້ອງຖືກທຳລາຍຢ່າງແນ່ນອນ ແລະ ແນ່ນອນອັລລໍຣ໌ຈະຊົງຊ່ວຍເຫຼືອຜູ້ທີ່ຊ່ວຍເຫຼືອພຣະອົງ ແທ້ຈິງອັລລໍຣ໌ເປັນຜູ້ທີ່ມີພະລັງ ແລະມີອຳນາດຢ່າງແທ້ຈິງ ບັນດາຜູ້ທີ່ເມື່ອພວກເຂົາໄດ້ຮັບຄວາມມັ່ນຄົງໃນແຜ່ນດິນແລ້ວ ພວກເຂົາຈະດຳລົງການລະຫມາດ ແລະການຈ່າຍຊະກາດ ພວກເຂົາຈະສັ່ງເສຍໃນຄວາມດີ ແລະ ຫັກຫ້າມຈາກຄວາມຊົ່ວ ແລະ ກັບອັລລໍຣ໌ແມ່ນບັ້ນປາຍແຫ່ງກິດຈະການທັງຫຼາຍ** (22:40-41)

ຄວາມໝາຍຂອງໂອງການນີ້ຄື ຖ້າຫາກບໍ່ເປັນເພາະການທີ່ອັລລໍຣ໌ໄດ້ບັນຍັດໃຫ້ບັນດາສາສະນະທູດ ແລະ ຜູ້ມີຄວາມເຊື່ອສັດທາເຮັດການຕໍ່ສູ້ ແລະ ຍິຮາດແລ້ວ ແນ່ນອນບັນດາຜູ້ຕັ້ງພາຄີຍ່ອມຕ້ອງເຂົ້າມາມີອຳນາດເຫນືອຜູ້ທີ່ນັບຖືສາສະໜາທັງຫຼາຍ ສັນຍະລັກຕ່າງໆ ຂອງສາສະໜາຈະຖືກທຳລາຍ ແຕ່ອັລລໍຣ໌ໄດ້ຊົງສະກັດກັ້ນຄວາມຊົ່ວຮ້າຍຂອງພວກເຂົາ ດ້ວຍການໃຊ້ໃຫ້ເຮັດການຕໍ່ສູ້ ແລະຍິຮາດກັບພວກເຂົາເຫຼົ່ານັ້ນ ເພາະຖ້າຫາກບໍ່ມີການຕໍ່ສູ້ ແລະຍິຮາດແລ້ວ ຄວາມບໍ່ຍຸຕິທຳກໍ່ຍ່ອມຕ້ອງມີໄຊເໜືອສັດຈະທັມໃນທຸກໝູ່ປະຊາຊາດເປັນແນ່ແທ້ [33]

ດ້ວຍເຫດນີ້ ຕາມທັດສະນະຂອງອິດສະລາມ ສົງຄາມແມ່ນສິ່ງຈຳເປັນ ແລະບໍ່ອາດຫລີກລ່ຽງໄດ້ຫາກຕັ້ງຢູ່ບົນຫຼັກຂອງການຮັກສາ

---

[33] ອັລ-ກຸຣຕູບີຍ໌ ອັລ-ຈາມຽະ ລີ ອະຫ໌ກາມີລ ກຸຣອານ *(12:70)*

ສັນຕິພາບ ແລະ ຄວາມສະຫງົບສຸກ ດັ່ງນັ້ນ ບົດບັນຍັດວ່າດ້ວຍຍິຮາດ ຈຶ່ງບໍ່ແມ່ນຄຳສອນທີ່ໃຊ້ເປັນເຄື່ອງມືໃນການຮຸກຮານ ຫລື ກົດຂີ່ຂົ່ມແຫງຜູ້ທີ່ອ່ອນແອ ຫລື ເປັນຂໍ້ກ່າວອ້າງເພື່ອຜົນປະໂຫຍດສ່ວນຕົວ ຫລື ປະເທດໃດປະເທດໜຶ່ງເປັນການສ ະເພາະໂດຍເດັດຂາດ, ໃນຈຳນວນຫຼັກຖານທີ່ຊັດເຈນທີ່ສຸດໃນເລື່ອງນີ້ ແມ່ນຄວາມເຫັນຂອງບັນດານັກວິຊາການອິດສະລາມຢ່າງເປັນເອກະ ພາບວ່າ ບໍ່ອະນຸຍາດໃຫ້ຂ້າຄົນອື່ນທີ່ບໍ່ແມ່ນນັກຮົບ ໂດຍສະເພາະແມ່ນ ເດັກນ້ອຍຜູ້ຍິງ ຄົນເຖົ້າ ນັກບວດ ຜູ້ປ່ວຍ ແລະຜູ້ທີ່ມີລັກສະນະໃນຄວາມໝາຍນີ້

ຖ້າຫາກວ່າອິດສະລາມຍຶດປະເດັນສາສະໜາເປັນຫຼັກການພື້ນຖານຂອງການເຮັດສົງຄາມ ແລະ ຂ້າກັນແລ້ວ ແນ່ນອນຍ່ອມຕ້ອງຈະບໍ່ປ່ອຍບຸກຄົນເຫຼົ່ານີ້ດ້ວຍ ເພາະພວກເຂົາບໍ່ແມ່ນມຸສະລິມ ແລະບໍ່ຍອມຮັບໃນຄວາມເຊື່ອຂອງອິດສະລາມ

ແລະບໍ່ອາດທີ່ຈະກ່າວ ຫລື ຍອມຮັບໄດ້ວ່າ ເຫດຜົນທີ່ຕ້ອງປະຕິບັດກັບບຸກຄົນເຫຼົ່ານີ້ໂດຍສັນຕິວິທີ ແມ່ນເພາະພວກເຂົາເປັນບຸກຄົນທີ່ອ່ອນແອ ເນື່ອງຈາກໃນຄວາມເປັນຈິງຕາມປະຫວັດສາດ ມີແມ່ຍິງຫຼາຍຄົນທີ່ໄດ້ເຂົ້າຮ່ວມສູ້ຮົບໃນສົງຄາມ ແລະ ຕໍ່ສູ້ກັບສັດຕູຢ່າງກ້າຫານ ກວ່າຜູ້ຊາຍຫຼາຍເທົ່າ

ປະຫວັດສາດອິດສະລາມໄດ້ບັນທຶກແລ້ວວ່າ ສົງຄາມຕ່າງໆທີ່ທ່ານນະບີໄດ້ຕໍ່ສູ້ກັບຜູ້ປະຕິເສດສັດທານັ້ນ ລ້ວນແຕ່ຢູ່ໃນຂອບເຂດ ແລະ ບໍ່ໄດ້ອອກໄປຈາກກອບຂອງເຫດຜົນທີ່ອະນຸຍາດໃຫ້ກະທຳໄດ້ ສົງຄາມເຫຼົ່ານັ້ນສ່ວນໃຫຍ່ແລ້ວແມ່ນເພື່ອປົກປ້ອງ ແລະ ຕອບໂຕ້ການລະເມີດຮຸກຮານທີ່ເກີດຂຶ້ນແທ້ໆນັ້ນເອງ.

## ຄວາມຍຸຕິທຳຄືຮາກຖານຂອງສັນຕິພາບ

ໂດຍສະຫຼຸບແລ້ວ ໃນມິຕິຂອງຄວາມສຳພັນລະຫວ່າງສາສະໜາອິສລາມກັບຜູ້ອື່ນ ລ້ວນເຕັມໄປດ້ວຍຫຼັກແຫ່ງສັນຕິພາບ ຄຳສອນໃນອັລກຸຣອານຫຼວງຫລາຍໄດ້ສະໜັບສະໜູນ ແລະ ປູທາງໃຫ້ແກ່ແບບແຜນຂອງຄວາມສັນຕິພາບ ບໍ່ວ່າຈະເປັນໃນລະດັບທ້ອງຖິ່ນ ຫລື ຫຼື ປະຊາຄົມລະຫວ່າງປະເທດ ແລະອີກທັງຍັງໄດ້ສະໜັບສະໜູນໃຫ້ໃຊ້ວິທີທາງສັນຕິວິທີ ດ້ວຍການຮຽກຮ້ອງໃຫ້ຄືນສິດຕ່າງໆ ທີ່ເປັນຂອງເຈົ້າຂອງສິດທີ່ນັ້ນ, ຫ້າມລະເມີດຮຸກຮານຜູ້ໃດ ແລະ ຕ້ອງດຳລົງເຊິ່ງຄວາມຍຸດຕິທຳ ແລະ ການເຮັດຄວາມດີກັບທຸກສິ່ງບໍ່ວ່າຈະເປັນມະນຸດ ຫລື ສັບພະສັດ ແລະແມ້ກະທັ້ງກັບສຶກສັດຕູໃນສົງຄາມ ເມື່ອໃດທີ່ພວກເຂົາຕອບຮັບການປະນີປະນອມ ຄວາມຍຸດຕິທຳຄວນຢູ່ເຫນືອຄວາມຮູ້ສຶກສ່ວນຕົວ ຫລື ຄວາມຜູກພັນດ້ານເຄືອຍາດ ແລະມິດສະຫາຍ ອັລລໍຫ໌ໄດ້ກ່າວວ່າ:

﴿يَا أَيُّهَا الَّذِينَ آمَنُوا كُونُوا قَوَّامِينَ بِالْقِسْطِ شُهَدَاءَ لِلَّهِ وَلَوْ عَلَى أَنْفُسِكُمْ أَوِ الْوَالِدَيْنِ وَالْأَقْرَبِينَ إِنْ يَكُنْ غَنِيّاً أَوْ فَقِيراً فَاللَّهُ أَوْلَى﴾ (النساء : 135)

ຄວາມຫມາຍວ່າ **ຜູ້ສັດທາທັ້ງຫຼາຍ ຈົ່ງເປັນຜູ້ດຳລົງໄວ້ເຊິ່ງຄວາມຍຸຕິທຳໃນການເປັນພະຍານເພື່ອອັລລໍຫ໌ ແມ້ວ່າຈະເປັນຜົນຮ້າຍແກ່ຕົວຂອງພວກເຈົ້າເອງ ຫຼື ຜູ້ບັງເກີດເກົ້າທັ້ງສອງ ແລະ ພີ່ນ້ອງໃກ້ຊິດກໍ່ຕາມ ແມ່ວ່າລາວຈະມັ່ງມີ ຫຼື ຍາກຈົນກໍ່ຕາມ ອັລລໍຫ໌ນັ້ນສົມຄວນ(ແກ່ການເຊື່ອຟັງ)ຍິ່ງກວ່າທັ້ງສອງຄົນ** (4:135)

ການໃຫ້ຄວາມຍຸຕິທຳກັບຜູ້ເປັນສັດຕູນັ້ນມີລະບຸໃນອັລກຸຣອານວ່າ

﴿يَا أَيُّهَا الَّذِينَ آمَنُوا كُونُوا قَوَّامِينَ لِلَّهِ شُهَدَاءَ بِالْقِسْطِ وَلا يَجْرِمَنَّكُمْ شَنَآنُ قَوْمٍ عَلَى أَلاَّ تَعْدِلُوا اعْدِلُوا هُوَ أَقْرَبُ لِلتَّقْوَى﴾ (المائدة : 8)

ຄວາມຫມາຍວ່າ **ຜູ້ສັດທາທັ້ງຫຼາຍ ຈົ່ງເປັນຜູ້ດຳລົງໄວ້ເຊິ່ງຄວາມຍຸຕິທຳໃນການເປັນພະຍານເພື່ອອັລລໍຫ໌ ແລະ ຈົ່ງຢ່າໃຫ້ການກຽດຊັງພວກໜຶ່ງພວກໃດເຮັດໃຫ້ພວກເຈົ້າບໍ່ຍຸຕິທຳ ຈົ່ງຍຸຕິທຳເຖີດ ມັນເປັນສິ່ງທີ່ໃກ້ກັບຄວາມຍຳເກງຍິ່ງກວ່າ (5:8)**

ອັນ-ບັຍຕໍວີ, ນັກອະທິບາຍອັລກຸຣອານທ່ານໜຶ່ງ, ໄດ້ໃຫ້ຄວາມຫມາຍຂອງໂອງການຂ້າງເທິງວ່າ: "ຢ່າໄດ້ປ່ອຍໃຫ້ຄວາມໂກດທີ່ລຸມເຮົ້າຢູ່ໃນໃຈຂອງພວກເຈົ້າຕໍ່ພວກມູຊຣິກີນ (ພວກປະຕິເສດສັດທາ) ເປັນເຫດໃຫ້ລະຖິ້ມຄວາມຍຸດຕິທຳກັບພວກເຂົາ ດ້ວຍການລະເມີດ ແລະ ກະທຳການໃດໆ ທີ່ບໍ່ອະນຸຍາດ, ເຊັ່ນ ການກ່າວຫາໃສ່ຮ້າຍ ຫລື ຂ້າແມ່ຍິງ ແລະເດັກນ້ອຍ ຫລື ທຳລາຍສັນຍາເພື່ອໃຫ້ເກີດຄວາມສະໃຈໃຫ້ຫາຍແຄ້ນ ຖ້າຫາກນີ້ແມ່ນຄວາມຍຸດຕິທຳທີ່ຕ້ອງປະຕິບັດຕໍ່ຜູ້ປະຕິເສດສັດທາ ໃຫ້ທ່ານລອງຄິດໄຕ່ຕອງເບິ່ງວ່າ ຈະຕ້ອງຍຸດຕິທຳຫຼາຍກວ່ານີ້ອີກປານໃດ ກັບບັນດາຜູ້ສັດທານຳກັນ." [34]

[34] ອັລ-ໄບຕໍ່ວີ . ອັນວາຣູຕ ຕັນຊີລ (3:223)

ໂດຍສະຫຼຸບແລ້ວ ໂອງການຂ້າງເທິງໄດ້ເນັ້ນຢໍ້າວ່າ ຢ່າໃຫ້ຄວາມໂກຣດຂອງເຈົ້າຕໍ່ຄົນໃດຄົນໜຶ່ງເປັນເຫດໃຫ້ເຈົ້າລະທິ້ງຄວາມຍຸດຕິທຳ ເພາະຄວາມຍຸດຕິທຳເປັນສິ່ງທີ່ຄວນຖືກບັງຄັບໃຊ້ຕໍ່ທຸກຄົນທຸກຄູ່ຂັດແຍ່ງ ແລະໃນທຸກສະຖານການ

ມີລາຍງານຈາກ ອິບນີ ອະບີ ຫາຕິມ ຈາກ ຊັຍດ໌ ອິບນຸ ອັສລັມ ວ່າ: "ເມື່ອຄັ້ງທີ່ທ່ານສາດສະດາ (ຂໍໃຫ້ຄວາມສະຫງົບສຸກແລະຄວາມເຈີຣິນເມື່ອມຢູ່ໃນພຣະອົງ) ແລະບັນດາສາວົກໄດ້ເດີນທາງໄປຮອດ ຫຸດັຍບີຢາ (ບ້ານໜຶ່ງກ່ອນຈະເຖິງນະຄອນມັກກະຣ) ແລະຖືກພວກມັກກະຣຂັດຂວາງບໍ່ໃຫ້ເຂົ້າເມືອງ ແລະສ້າງຄວາມລຳບາກໃຫ້ທ່ານ ແລະບັນດາສາວົກເປັນຢ່າງຫຼາຍ. ຈົນກະທັ້ງມີພວກມຸຊຣິກີນ (ຜູ້ທີ່ບໍ່ແມ່ນມຸສລິມ) ຈາກດິນແດນຕາເວັນອອກເດີນທາງມາເພື່ອເຂົ້າໄປເຮັດອຸມເຣາະ. ບັນດາສາວົກໄດ້ກ່າວກັບທ່ານສາດສະດາວ່າ 'ພວກເຮົາຈະຂັດຂວາງຄົນພວກນີ້ ເຫມືອນທີ່ພວກເຂົາໄດ້ຂັດຂວາງພວກເຮົາ.' ເມື່ອນັ້ນເອງ ອັລລາຮ໌ ຈຶ່ງໄດ້ປະທານໂອງການນີ້ລົງມາ (ເພື່ອຫ້າມປະຕິບັດແບບນັ້ນ)." [35]

**ອັລ-ກຸໂຣຕູບີ** ນັກອັດຕະບາຍອັລກຸໂຣອານອີກຜູ້ໜຶ່ງໄດ້ກ່າວວ່າ: "ໂອງການນີ້ໄດ້ຊີ້ວ່າ ການບໍ່ນັບຖືອິສລາມຂອງຜູ້ປະຕິເສດຄວາມເຊື່ອ ບໍ່ໄດ້ເປັນອຸປະສັກໃຫ້ພວກເຮົາປະຕິບັດຄວາມຍຸດຕິທຳໃຫ້ແກ່ເຂົາ." [36]

---

[35] ອິບນຸ ກະຊີຣ *ຕັຟຊີຣ ອັລກຸຣອານິລ ອະຊີມ* (2:6-7)

[36] ອັລ-ກຸຣຕູບີຍ໌ ອັລ-ຈາມງະ ລີ ອະຫ໌ກາມິລ ກຸຣອານ *(6:110)*

## ສັນຕິວິທີ ຄືພື້ນຖານຂອງການເຊື່ອມສຳພັນ

ແລະສິ່ງທີ່ບົ່ງບອກຢ່າງຊັດເຈນວ່າອິສລາມເປັນສາສະໜາທີ່ໃຫ້ຄວາມສຳຄັນກັບສັນຕິພາບຫຼາຍກວ່າສົງຄາມ ຫຼືການໃຊ້ຄວາມຮຸນແຮງໃນຮູບແບບຕ່າງໆ ແມ່ນການທີ່ອິສລາມໄດ້ສັ່ງກຳຊັບໃຫ້ມຸສລິມຮັບຕອບຮັບການເອີ້ນເຊີນສູ່ສັນຕິພາບ ເຖິງແມ່ນວ່າຜູ້ທີ່ເອີ້ນເຊີນນັ້ນຈະເປັນຄູ່ອະຣິ ຫຼືຂ້າສຶກໃນສະມະພູມກໍຕາມ.

ອັລລໍຫ໌ໄດ້ລະບຸວ່າ

﴿وَإِنْ جَنَحُوا لِلسَّلْمِ فَاجْنَحْ لَهَا وَتَوَكَّلْ عَلَى اللَّهِ إِنَّهُ هُوَ السَّمِيعُ الْعَلِيمُ، وَإِنْ يُرِيدُوا أَنْ يَخْدَعُوكَ فَإِنَّ حَسْبَكَ اللَّهُ هُوَ الَّذِي أَيَّدَكَ بِنَصْرِهِ وَبِالْمُؤْمِنِينَ﴾

(الأنفال : 61-62)

ຄວາມຫມາຍວ່າ **ແລະຖ້າພວກເຂົາເອນອຽງເພື່ອໄປສູ່ການສະຫງົບສຶກແລ້ວ ເຈົ້າກໍ່ຈົ່ງຕອບສະນອງການນັ້ນເຖີດ ແລະຈົ່ງມອບໝາຍພາລະກິດຂອງເຈົ້າແດ່ອັລລໍຣ໌ເຖີດ ແທ້ຈິງ ພຣະອົງແມ່ນຜູ້ທີ່ຊົງໄດ້ຍິນແລະ ຊົງຮອບຮູ້ຢ່າງຖ້ອມແທ້ ແລະ ຖ້າພວກເຂົາປະສົງຈະຫລອກລວງເຈົ້າ, ເປັນພຽງພໍແລ້ວກັບອັລລໍຣ໌ (ຜູ້ທີ່ຈະຄອຍພິທັກປົກປ້ອງ) ພຣະ-ອົງແມ່ນຜູ້ທີ່ຊົງສະໜັບສະໜູນເຈົ້າ ດ້ວຍຄວາມຊ່ວຍເຫຼືອຂອງພຣະອົງ ແລະ ດ້ວຍກຳລັງຂອງບັນດາຜູ້ສັດທາ (8:61-62)**

ທ່ານເຊັກ ມຸຫັມມັດ ເຣາະຊີດ ຣິດໍ ໄດ້ອະທິບາຍຄວາມໝາຍຂອງໂອງການຂ້າງເທິງວ່າ: "ໃນບາງຄັ້ງ ການທີ່ຄູ່ສົງຄາມສະແດງທ່າທີຍອມຮັບການປະນີປະນອມ ອາດຈະເປັນແຕ່ກົນລວງເພື່ອຕົບຕາໃຫ້ເຮົາເລີກຣົບ ໃນຂະນະທີ່ພວກເຂົາກັບກຳລັງກຽມພ້ອມເພື່ອການຈູ່ໂຈມ ຫຼື ປະຕິບັດການອື່ນໆ ເພື່ອເປັນແຜນລວງໃນການສູ້ຣົບ ຖ້າເບິ່ງໃນແງ່ຂອງຜົນໄດ້ຜົນເສຍໃນກໍລະນີແບບນີ້ ເຮົາຈຶ່ງບໍ່ຄວນຮັບຂໍ້ສະເໜີປະນີປະນອມຈາກພວກເຂົາ ຕາບໃດທີ່ເຮົາຍັງບໍ່ສາມາດຊະນະເໜືອພວກເຂົາໄດ້ຢ່າງເບັດເສັດ ແຕ່ອິສລາມກັບບໍ່ເຫັນວ່າຄວາມເປັນໄປໄດ້ດັ່ງກ່າວຈະເປັນອຸປະສັກໃນການຕອບຮັບຂໍ້ຕົກລົງປະນີປະນອມກັບອີກຝ່າຍແຕ່ຢ່າງໃດ ແຕ່ກັບກ່າວວ່າ: **"ແລະ ຫາກພວກເຂົາປະສົງຈະຫລອກລວງເຈົ້າ ເປັນການພຽງພໍແລ້ວກັບອັລລໍຮ໌ (ຜູ້ທີ່ຈະຄອຍພິທັກປົກປ້ອງ)"** ຈຸດຍືນນີ້ ເປັນຫລັກຖານທີ່ຊັດເຈນທີ່ຕອກຢ້ຳວ່າ ອິສລາມເປັນສາສະໜາແຫ່ງສັນຕິພາບຢ່າງແທ້ຈິງ."[37]

ນອກຈາກນີ້ອັລລໍຫ໌ຫຍັງມີດຳລັດຄັດຄ້ານກຸ່ມມຸສລິມທີ່ປະຕິເສດສັນຕິພາບວ່າ

﴿يَا أَيُّهَا الَّذِينَ آمَنُوا إِذَا ضَرَبْتُمْ فِي سَبِيلِ اللَّهِ فَتَبَيَّنُوا وَلا تَقُولُوا لِمَنْ أَلْقَى إِلَيْكُمُ السَّلامَ لَسْتَ مُؤْمِناً تَبْتَغُونَ عَرَضَ الْحَيَاةِ الدُّنْيَا فَعِنْدَ اللَّهِ مَغَانِمُ كَثِيرَةٌ﴾ (النساء : 94)

[37] ມຸຫັມມັດ ເຣາະຊີດ ຣິດໍ. *ຕັຟຊີຣ ມະນາຣ* (10:140)

ຄວາມຫມາຍວ່າ **ບັນດາຜູ້ສັດທາທັ້ງຫຼາຍ ເມື່ອໃດທີ່ພວກເຈົ້າຕີທັບໄປເທິງໜ້າແຜ່ນດິນ (ເພື່ອສູ້ຮົບ) ໃນຫົນທາງຂອງອັລລໍຫ໌ ພວກເຈົ້າຈົ່ງ (ແຍກແຍະສັດຕູ) ໃຫ້ແນ່ໃຈຢ່າງຖ່ອງແທ້ ແລະ ຈົ່ງຢ່າເວົ້າແກ່ຜູ້ທີ່ກ່າວສະລາມແກ່ພວກເຈົ້າວ່າທ່ານບໍ່ແມ່ນຜູ້ສັດທາ (ເພື່ອເປັນຂໍ້ອ້າງທີ່ຈະຂ້າລາວ ແລະ ຍຶດສັບສິນບັດຂອງເພິ່ນ) ໂດຍສະແວງຫາສິ່ງອໍານວຍປະໂຫຍດຊົ່ວຄາວແຫ່ງຊີວິດຄວາມເປັນຢູ່ບົນໂລກນີ້ ແຕ່ ນະ ອັລລໍຫ໌ນັ້ນມີຜົນສັບອັນຫຼວງຫລາຍ** (4:94)

ທ່ານສາສະນະທູດ (ຂໍຄວາມສັນຕິຈົ່ງມີແກ່ທ່ານ) ຫຍັງໄດ້ກ່າວໄວ້ມີຄວາມໝາຍວ່າ **"ແທ້ຈິງຈະເກີດຄວາມຂັດແຍ້ງ ຫຼື ເລື່ອງລາວອື່ນຫຼັງຈາກຂ້ອຍ ຖ້າຫາກທ່ານສາມາດສ້າງສັນຕິພາບໃຫ້ເກີດຂຶ້ນໄດ້ ກໍ່ຈົ່ງເຮັດເສຍເຖີດ"**[38]

ຄໍາສອນຂອງທ່ານສາສນທູດໄດ້ປະກົດໃຫ້ເຫັນຈິງໃນພາກປະຕິບັດ ດັ່ງທີ່ມີລາຍງານຂອງອັລ-ໄບຫະກີ ຈາກທ່ານອິບນຸ ອັບບາສ ເຣາ ະດີຍັລລໍຮ໌ ອັນຮຸມາ ກ່ຽວກັບເຫດການທີ່ທ່ານຍົກທັບໄປເປີດນະຄອນມັກກະຮ໌ ທີ່ທ່ານໄດ້ກໍາຊັບໃຫ້ຫລີກລຽງຄວາມຮຸນແຮງ ແລະຄວາມທາລຸນ ແລະ ໃຫ້ພະຍາຍາມໃຊ້ສັນຕິວິທີນໍາໜ້າ ກ່ອນທີ່ທ່ານຈະສັ່ງໃຫ້ເຫຼົ່າສາວົກເຂົ້າພິຊິດນະຄອນມັກກະຮ໌ ທ່ານໄດ້ປະກາດວ່າ:

**"ຜູ້ໃດກໍຕາມທີ່ເຂົ້າໄປຫຼົບໃນເຮືອນຂອງອະບູ ຊຸຟຢານ (ຜູ້ນໍາຄົນໜຶ່ງຂອງຊາວມັກກະຮ໌ ທີ່ໃນເວລານັ້ນຫາກໍ່ໄດ້ເຂົ້າຮັບອິສລາມ) ລາວຜູ້ນັ້ນຈະໄດ້ຮັບຄວາມປອດໄພ".**

[38] ອະຫ໌ມັດ ອັລ-ມຸສນັດ (1:90) ພາກເພີ່ມເຕີມໂດຍອັບດູລລໍຫ໌ ບຸດຊາຍຂອງທ່ານ

ອະບູ ຊຸຟຢານ ໄດ້ຍິນດັ່ງນັ້ນຈຶ່ງຮີບກ່າວຕອບວ່າ: **"ເຮືອນຂອງຂ້ອຍອາດຈະນ້ອຍເກີນໄປທີ່ຈະຈຸຜູ້ຄົນໄດ້ທັງໝົດ"** ທ່ານສາສະນະທູດຈຶ່ງໄດ້ປະກາດອີກວ່າ: **"ຜູ້ໃດກໍຕາມທີ່ເຂົ້າໄປຫຼົບໃນກະບະຮ໌ (ອາຄານສີ່ຫລ່ຽມທີ່ຢູ່ໃນມັສຍິດຫະຣອມ) ລາວຜູ້ນັ້ນຈະໄດ້ຮັບຄວາມປອດໄພ"** ອະບູ ຊຸຟຢານ ໄດ້ຍິນແບບນັ້ນຈຶ່ງຕອບກັບອີກວ່າ: **"ກະບະຮ໌ອາດຈະນ້ອຍເກີນໄປທີ່ຈະຮອງຮັບຈຳນວນຜູ້ຄົນໄດ້ທັ້ງໝົດ"** ທ່ານສາສະ-ນະທູດຈຶ່ງປະກາດອີກຄັ້ງວ່າ: **"ຜູ້ໃດກໍຕາມທີ່ເຂົ້າໄປຫຼົບຢູ່ໃນມັສຍິດຫະຣອມ ຄົນນັ້ນຈະໄດ້ຮັບຄວາມປອດໄພ"** ອະບູ ຊຸຟຢານໄດ້ກ່າວຕໍ່ອີກຄັ້ງ: **"ມັສຍິດຫະຣອມກໍອາດຈະນ້ອຍເກີນໄປທີ່ຈະຮອງຮັບຈຳນວນຜູ້ຄົນໄດ້ທັງໝົດ"**

ທ່ານສາສະນະທູດຈຶ່ງປະກາດເປັນຄັ້ງສຸດທ້າຍວ່າ: **"ຜູ້ໃດກໍຕາມທີ່ເຂົ້າໄປຫຼົບຢູ່ໃນເຮືອນຂອງລາວ ແລະ ປິດປະຕູຢ່າງມິດຊິດ ຄົນນັ້ນຈະໄດ້ຮັບຄວາມປອດໄພ"** ເມື່ອນັ້ນ ອະບູ ຊຸຟຢານ ຈຶ່ງໄດ້ກ່າວດ້ວຍຄວາມປິຕິຍິນວ່າ: **"ນີ້ເປັນໂອກາດອັນໃຫຍ່ຫລວງຢິ່ງສຳລັບຜູ້ຄົນທັງຫລາຍ"** [39]

ນັບເປັນການເປີດເມືອງດ້ວຍການໃຊ້ຫລັກເມດຕາທັມອັນແທ້ຈິງ ຫລີກລ່ຽງຈາກການນອງເລືອດ ການເຂັ່ນຄ່າ ຫລື ການໃຊ້ຄວາມຮຸນແຮງ ທັງໆ ທີ່ມີໂອກາດແກ້ແຄ້ນໃຫ້ສາສົມກັບການຕໍ່ຕ້ານ ແລະ ການກະທຳອັນໂຫດຮ້າຍທີ່ຊາວມັກກະຮ໌ເຄີຍໄດ້ກະທຳໄວ້ຕໍ່ທ່ານສາສະນະທູດ ແລະ ເຫລົ່າສາວົກໃນອະດີດທີ່ຜ່ານມາໂດຍທີ່ **ອັລລໍຮ໌ໄດ້ອະນຸຍາດໃຫ້ທຳເຊັ່ນນັ້ນໄດ້** ດັ່ງທີ່ພຣະອົງໄດ້ຕຣັດວ່າ...

﴿وَإِنْ عَاقَبْتُمْ فَعَاقِبُوا بِمِثْلِ مَا عُوقِبْتُمْ بِهِ وَلَئِنْ صَبَرْتُمْ لَهُوَ خَيْرٌ لِلصَّابِرِينَ﴾ (النحل: 126)

ຄວາມຫມາຍວ່າ **ແລະຫາກພວກເຈົ້າຈະແກ້ແຄ້ນດ້ວຍການລົງໂທດ ກໍ່ຈົ່ງເຮັດຄືທີ່ພວກເຈົ້າຖືກກະທຳ ແລະ ຫາກພວກທ່ານອົດທົນ (ບໍ່ແກ້ແຄ້ນ) ນັ້ນຍ່ອມຈະເປັນການດີກວ່າສຳຫຼັບບັນດາຜູ້ທີ່ອົດທົນທັ້ງຫຼາຍ** (16:126)

ແຕ່ທ່ານສາສນທູດກະບໍ່ໄດ້ໃຊ້ໂອກາດນີ້ເພື່ອແກ້ແຄ້ນ ພ້ອມກັບໄດ້ມີຄຳສັ່ງແກ່ບັນດາສາວົກຢ່າງຊັດເຈນວ່າ **"ເຮົາຕ້ອງໃຊ້ຫລັກຂັນຕິທຳ ແລະ ຕ້ອງບໍ່ລ້າງແຄ້ນ"** [40] ທ່ານໄດ້ປະກາດແກ່ຊາວມັກກະຮ໌ວ່າ **"ມື້ນີ້ບໍ່ມີການປະນາມ ແລະ ການລົງໂທດພວກເຈົ້າ ອັລລໍຮ໌ຊົງອະໄພໃຫ້ແກ່ພວກເຈົ້າ"** [41]

ເລື່ອງລາວທີ່ເປັນພະຍານຫລັກຖານອີກປະການໜຶ່ງວ່າທ່ານສາສະນະທູດບໍ່ໄດ້ມີເຈດຕະນາເພື່ອໃຊ້ຄວາມຮຸນແຮງ ແລະ ກວາດລ້າງຜູ້ປະຕິເສດສັດທາ ຫາກແຕ່ໄດ້ໃຊ້ຄວາມເມດຕາເປັນຫລັກໃນການເຊີນຊວນສູ່ອິສລາມ ນັ້ນຄື ເລື່ອງລາວທີ່ປະກົດໃນລາຍງານຂອງອັລ-ບຸຄໍຣີ ແລະ ມຸສລິມວ່າ ມະລາອິກະຮ໌ (ເທວທູດ) ຜູ້ດູແລເທືອກເຂົາແຫ່ງເມືອງມັກກະຮ໌ ໄດ້ເຄີຍພົບທ່ານ ແລະ ສະເຫນີຕົວແກ່ທ່ານວ່າ: **"ແທ້ຈິງອັລລໍຮ໌ໄດ້ຍິນຄຳພູດຕ່າງໆ ທີ່ພັກພວກຂອງທ່ານເວົ້າວ່າຮ້າຍທ່ານ ແລະ ອັລລໍຮ໌ໄດ້ສົ່ງຂ້ອຍມາເພື່ອໃຫ້ຂ້ອຍເຮັດຕາມໃນສິ່ງທີ່ທ່ານຕ້ອງການ ດັ່ງນັ້ນ ຫາກທ່ານຕ້ອງການ ຂ້ອຍຈະນຳພູເຂົາທັງສອງນີ້ໄປທຳລາຍພວກເຂົາເສຍ"**

ທ່ານສາສນທູດ (ຂໍຄວາມຈຳເລີນ ແລະ ສັນຕິຈົ່ງມີແດ່ທ່ານ) ໄດ້ກ່າວຕອບມະລາອິກະຮ໌ຕົນນັ້ນວ່າ: **"ຢ່າເລີຍ ເພາະຂ້ອຍຫວັງວ່າ ອັລລໍຮ໌ຈະເຮັດໃຫ້ເກີດຂຶ້ນໃນໝູ່ພວກເຂົາ ເຊິ່ງລູກຫລານທີ່ນອບນ້ອມພັກດີຕໍ່ພຣະອົງ ແລະ ບໍ່ຕັ້ງພາຄີກັບພຣະອົງ"**.[42]

ເລື່ອງລາວນີ້ເກີດຂຶ້ນໃນຂະນະທີ່ທ່ານສາສະນະທູດຕ້ອງປະສົບກັບການທົດສອບທີ່ຫນັກຫນ່ວງຢ່າງຍິ່ງ ຈາກການທີ່ຊາວມຸຊຣິກີນຕໍ່ຕ້ານ ແລະ ຂັດຂວາງການເຊີນຊວນຂອງທ່ານສູ່ອິສລາມນັ້ນເອງ.

ບົນຖານແຫ່ງແບບຢ່າງຂອງທ່ານສາສະນະທູດດັ່ງທີ່ຍົກມານີ້ ໄດ້ມີການປະຕິບັດຕາມໂດຍປະຊາຊາດມຸສລິມຫລັງຈາກນັ້ນໃນຫຼາຍໆ ກໍລະນີເຊັ່ນທີ່ນັກສັງຄົມຈິດວິທະຍາຢ່າງ **ກຸສຕາຟ ເລອ ບອງ** ໄດ້ຍອມຮັບເຖິງ **ການປະນີປະນອມ ຄວາມມີຄຸນທັມ ຄວາມຍຸດຕິທຳ ແລະ ຈິດໃຈທີ່ໃຝ່ຫາສັນຕິພາບ** ຂອງຈອມທັບມຸສລິມ **ສໍລາຮຸດດີນ ອັລ-ອັຍຢູບີ** ແລະ **ຄວາມອາລີຂອງທ່ານຕໍ່ຄູ່ອະລິໃນສົງຄາມຄຣູເຊດ.**

---

[39] ອັລ-ໄບຣາກີ *ດະລາອິລຸນ ນຸບູວະຫ໌ (5:32)* ອິບນຸ ກະຊີຣ *ອັລ-ບິດາຍະຫ໌ ວະ ອັນ-ນິຮາຍະຫ໌ (3:291)*

[40] ອະຫມັດ (5:135) ອັດຕັຣມິຊີ (4:361-362). ອັລ-ຫາກິມ (2:359). ເປັນລາຍງານທີ່ຫະຊັນ ອ້າງຈາກອັກຣອມ ດີຍາດ ອັລ-ອຸມະຣີ ອັສ-ສີເຣາະຫ໌ ອັນ-ນະບະວິຍະຫ໌ ອັສ-ສໍຮີຫ໌ (2:481)

[41] ອະບູ ອຸໄບດ ອັລ-ອັມວານ (ໜ້າ 143) ອ້າງຈາກ : ອັກຣອມ ດີຍາ ອັລ-ອຸມະຣີ ເລັ່ມດຽວກັນ

[42] ອັລ-ບຸກໍຣີ ອ້າງຈາກ ຟັຕຮຸລ ບາຣີ (6:360) ມຸສລິມ (3:1420)

ຊຶ່ງໄດ້ບຸກໂຈມຕີເມືອງຂອງຊາວມຸສລິມ ແລະ ຂ່ຽນຂ່າ ປະຊາຊົນຢ່າງໂຫດຮ້າຍ ແຕ່ຈອມທັບຜູ້ນີ້ ຊຶ່ງຢູ່ໃນຖານະຜູ້ກຳຊັບໄຊຊະນະ ເມື່ອໄດ້ຍິນຂ່າວວ່າ ພະເຈົ້າຣິຊາດໃຈສິງ ຊຶ່ງເປັນຄູ່ປັບຂອງທ່ານລົ້ມປ່ວຍ ແລະ ຢາກຈະກິນໝາກໄມ້ບາງຊະນິດກັບນ້ຳແຂງ ທ່ານກັບສັ່ງໃຫ້ຈັດຫາອາຫານເຫຼົ່ານັ້ນສົ່ງໄປໃຫ້ພະເຈົ້າຣິຊາດ ພ້ອມກັບຢາ ແລະ ເຄື່ອງດື່ມ ແຕ່ຄັ້ງເມື່ອພະເຈົ້າຣິຊາດຫາຍປ່ວຍ ກໍ່ໄດ້ຍົກທັບມາເຮັດສົງຄາມກັບສໍລາຮຸດດິນ ແລະ ຊາວມຸສລິມອີກຢ່າງບໍ່ຍອມເລີກລາ[43]

ຈາກທີ່ກ່າວມາເຫັນໄດ້ຊັດວ່າ ອິສລາມຈຶ່ງເປັນສາດສະໜາທີ່ປະຕິເສດຄວາມຮຸນແຮງ ແລະ ສັ່ງຫ້າມການລະເມີດ ຮຸກຮານໃນທຸກຮູບແບບ ເປັນສາດສະໜາທີ່ແຜ່ສັນຕິພາບ ແລະ ຊຸກຍູ້ໃຫ້ເກີດຄວາມຍຸດຕິທຳ ການໃຫ້ອະໄພ ການເຈລະຈາຕໍ່ຮອງສູ່ຄວາມເອກະພາບສັນຕິ ແລະ ຄວາມຮົ່ມເຢັນຂອງມວນມະນຸດ ອິສລາມໄດ້ບັນຍັດຫຼັກການອັນປະເສີດສຸດສຳລັບຄວາມສຳພັນລະຫວ່າງປະເທດ ນັ້ນຄື ຄວາມຍຸດຕິທຳ ການຕິດຕໍ່ຄົບຄ້າສະມາຄົມລະຫວ່າງປະເທດໃນອິສລາມ ບໍ່ໄດ້ວາງຢູ່ໃນພື້ນຖານຜົນປະໂຫຍດຂອງຊາດນິຍົມ ຫຼື ຕັດສິນດ້ວຍກອງກຳລັງ ແລະ ແສນຍະນຸພາບທາງທະຫານທີ່ເໜືອກວ່າ ດັ່ງເຊັ່ນບັນທັດຖານທີ່ເກີດຂຶ້ນໃນຍຸກອະວິຊສາອັນປ່າເຖື່ອນ ຫຼື ຕາມຄວາມເປັນຈິງຂອງອາລິຍະທຳໃນສະໄໝປະຈຸບັນ

ປະຫວັດສາດສົງຄາມໂລກໄດ້ສອນໃຫ້ເຮົາຮູ້ວ່າ ຄວາມສຳພັນລະຫວ່າງປະເທດທີ່ຢູ່ໃນພື້ນຖານຂອງຜົນປະໂຫຍດຂອງຊາດນິຍົມ ຫຼື ການຕັດສິນດ້ວຍກອງກຳລັງ ແລະ ແສນຍະນຸພາບທາງທະຫານທີ່ເໜືອກວ່າ ແມ່ນເຫດຜົນທີ່ສຳຄັນໃນການປະທຸໄຟສົງຄາມທີ່ໄດ້ທຳລາຍສັນຕິພາບມາຫຼາຍຕໍ່ຫຼາຍຄັ້ງແລ້ວ ດັ່ງທີ່ໄດ້ເກີດຂຶ້ນມາ

ແລ້ວໃນສົງຄາມໂລກທັງສອງຄັ້ງໃນລະຫວ່າງສະຕະວັດທີ່ຜ່ານມາ ຊຶ່ງອິສລາມ ແລະ ຊາວມຸສລິມບໍ່ມີສ່ວນຂ້ອງກ່ຽວກັບເຫດແຫ່ງສົງຄາມເຫຼົ່ານັ້ນເລີຍແມ້ແຕ່ນ້ອຍ ທະວ່າກັບເປັນເຫຍື່ອ ແລະ ຜູ້ຮັບເຄາະຮ້າຍຈາກຜົນຮ້າຍຂອງສົງຄາມທັງສອງຄັ້ງ ແລະ ຫຍັງເປັນເຊັ່ນດຽວກັນອີກໃນປະຈຸບັນ ນັບຕັ້ງແຕ່ເລີ່ມສະຕະວັດໃໝ່ມາ ນັ້ນຄືເຫດການໃນປະເທດຕາເວັນອອກກາງ ບໍ່ວ່າຈະເປັນສົງຄາມຂອງອາເມຣິກາທີ່ອີຣັກ ຫຼື ການລຸກລານຂອງຢິວທີ່ປາເລດສະໄຕນ໌ (ຂໍໃຫ້ອັລ-ລໍຮ໌ຊ່ວຍເຫຼືອດ້ວຍເຖີດ).

ການອາໄສຜົນປະໂຫຍດຂອງປະເທດ ຫຼື ຄວາມໄດ້ປຽບດ້ານແສນຍະນຸພາບມາເປັນບັນທັດຖານໃນການປະຫັດປະຫານແບບນີ້ ນັບເປັນເຫດຜົນທີ່ບໍ່ແຕກຕ່າງກັບອຸດົມການຂອງຈອມໂຈນທີ່ຄອຍປົ້ນສະດົມ ຫຼື ກຸ່ມມິດສາຊິບທີ່ກໍ່ຄວາມເດືອດຮ້ອນວຸ່ນວາຍທັງຫຼາຍ ແລະບໍ່ແຕກຕ່າງໄປຈາກວິໄສຂອງສັດເດລະສານທີ່ອາໄສຢູ່ໃນປ່າເລີຍແມ້ແຕ່ນ້ອຍ ພຶດຕິກຳທີ່ໂຫດຮ້າຍຂອງພວກໄຊອໍນິສຕ໌ແບບນີ້ ທີ່ເປັນມູນເຫດຂອງການໂຕ້ຕອບ ທີ່ເຮົາໄດ້ເຫັນໃນບາງປະເທດມຸສລິມ ທີ່ຖືກກົດຂີ່ຂົ່ມເຫງມາໂດຍຕະຫຼອດ

**ເຣນຣີ ເດ ແຊມບອງ**, ບັນນາທິການວາລະສານ ສະບັບໜຶ່ງຂອງຝຣັ່ງເສດ, ໄດ້ຍອມຮັບວ່າ "ພວກເຮົາຕ່າງເປັນໜີ້ຕໍ່ຊາວມຸສລິມດ້ວຍຄວາມດີງາມທັງຫລາຍທີ່ປະກົດຢູ່ໃນອາຣະຍະທຳຂອງເຮົາ ທັງໃນດ້ານຄວາມຮູ້ ສິລະປະ ແລະ ການປະດິດ ອີກທັງຖືກຮຽກຮ້ອງໃຫ້ຍອມຮັບວ່າ ພວກເຂົາແມ່ນຕົວຢ່າງແຫ່ງຄວາມສົມບູນຂອງມະນຸດສະຍະຊາດ ໃນສະໄໝທີ່ເຮົາຍັງຢູ່ໃນຄວາມສະເປະສະປະ ແລະ ຄວາມປ່າເຖື່ອນ."[44]

ປະຈັກພະຍານສຳຄັນອີກປະການໜຶ່ງ ທີ່ສາມາດຢືນຢັນໄດ້ວ່າ ອິສລາມບໍ່ສະໜັບສະໜູນສົງຄາມ ແລະ ຄວາມຮຸນແຮງ ແຕ່ເປັນສາສະໜາທີ່ມາຂະຈັດສົງຄາມຫລາຍໆຄັ້ງທີ່ໄດ້ປະທຸຂຶ້ນໃນຍຸກສະໄໝແຫ່ງຄວາມປ່າເຖື່ອນ ອິສລາມໄດ້ປົກປ້ອງສິດຂອງມະນຸດ ໂດຍສະເພາະລະຫວ່າງເຜົ່າເອົາຊ໌ ແລະ ຂັຊຣອຈ ອິສລາມໄດ້ດຳເນີນການປະນີປະນອມ ແລະ ໄກ່ກ່ຽຍລະຫວ່າງທັງສອງເຜົ່າ ແລະ ໄດ້ນຳທັງສອງເຜົ່າເຂົ້າສູ່ຝັ່ງແຫ່ງຄວາມປອງດອງທີ່ເຂັ້ມແຂງ ຊຶ່ງໄດ້ຖືກລະບຸໄວ້ໃນອັລກຸຣອານວ່າ

﴿وَاذْكُرُوا نِعْمَتَ اللَّهِ عَلَيْكُمْ إِذْ كُنْتُمْ أَعْدَاءً فَأَلَّفَ بَيْنَ قُلُوبِكُمْ فَأَصْبَحْتُمْ بِنِعْمَتِهِ إِخْوَاناً وَكُنْتُمْ عَلَى شَفَا حُفْرَةٍ مِنَ النَّارِ فَأَنْقَذَكُمْ مِنْهَا كَذَلِكَ يُبَيِّنُ اللَّهُ لَكُمْ آيَاتِهِ لَعَلَّكُمْ تَهْتَدُونَ﴾ (آل عمران : 103)

ຄວາມຫມາຍວ່າ **ພວກເຈົ້າຈົ່ງລະລຶກເຖິງຄຸນຂອງອັລລໍຮ໌ທີ່ພຣະອົງໄດ້ປະທານໃຫ້ແກ່ພວກເຈົ້າ ໃນຂະນະທີ່ພວກເຈົ້າເປັນສັດຕູກັນ ແລ້ວພຣະອົງກໍ່ໄດ້ເຮັດໃຫ້ຫົວໃຈຂອງພວກເຈົ້າໂອນອ່ອນຕໍ່ກັນ ແລະພວກເຈົ້າໄດ້ກາຍເປັນພີ່ນ້ອງກັນ ດ້ວຍບຸນຄຸນແຫ່ງພຣະອົງ ແລະພວກເຈົ້າເຄີຍຢູ່ບົນຂອບເຫວແຫ່ງຂຸມນະລົກ ແລ້ວພຣະອົງກໍ່ໄດ້ເຮັດໃຫ້ພວກເຈົ້າລອດພົ້ນ ເຊັ່ນນັ້ນຄືວິທີທີ່ອັລລໍຮ໌ຊີ້ແຈງໃຫ້ແກ່ພວກເຈົ້າເຖິງໂອງການຕ່າງໆ ຂອງພຣະອົງ ເພື່ອວ່າພວກເຈົ້າຈະໄດ້ຮັບການຊີ້ນຳ.**

(3:103)

ອິບນຸ ກະສີຣ, ນັກອະທິບາຍອັລກຸຣອານທ່ານໜຶ່ງໄດ້ໃຫ້ຄຳອະທິບາຍວ່າ "ລັກສະນະໂອງການນີ້ໄດ້ເວົ້າເຖິງພວກເອົາຊ໌ ແລະ ຂັຊຣອຈ ເນື່ອງຈາກໄດ້ເກີດສົງຄາມຫລາຍໆເທື່ອ ລະຫວ່າງພວກເຂົາໃນຍຸກປ່າເຖື່ອນອັນເກົ່າກ່ອນ ເປັນຄວາມອາຂາດ ແລະ ຄຽດແຄ້ນຮຸນແຮງ ສົ່ງຜົນໃຫ້ເກີດການຫ່ຳຫັ່ນ ບົດຂະຍີ້ ແລະ ການປະຫັດປະຫານອັນຍາວນານລະຫວ່າງທັງສອງ ຄັ້ງເມື່ອອິສລາມມາເຖິງ ແລະ ພວກເຂົາໄດ້ຍອມຮັບນັບຖືອິສລາມ ທ້າຍທີ່ສຸດທັງສອງຝ່າຍກໍ່ໄດ້ກາຍເປັນພີ່ນ້ອງກັນ ທີ່ຮັກໃຄ່ກັນ ດ້ວຍຄວາມເກຣງໄກຂອງອັລລໍຮ໌ ໄດ້ເຊື່ອມສຳພັນກັນຢູ່ບົນຖານແຫ່ງອັລລໍຮ໌ ແລະ ຊ່ວຍເຫລືອຊຶ່ງກັນ ແລະ ກັນໃນຄວາມດີ ແລະ ຄວາມຢຳເກຣງ."[45]

**ຫຼັກແຫ່ງໄມຕີພາບກັບຊົນຕ່າງສາສະນິກ**

ຈາກບ່ອນນີ້ ອິສລາມໄດ້ກຳໜົດຂອບເຂດຄວາມສຳພັນຂອງປະຊາຊາດມຸສລິມກັບຜູ້ອື່ນດັ່ງປະກົດໃນດຳລັດຂອງອັລລໍຫ໌ວ່າ

﴿لا يَنْهَاكُمُ اللَّهُ عَنِ الَّذِينَ لَمْ يُقَاتِلُوكُمْ فِي الدِّينِ وَلَمْ يُخْرِجُوكُمْ مِنْ دِيَارِكُمْ أَنْ تَبَرُّوهُمْ وَتُقْسِطُوا إِلَيْهِمْ إِنَّ اللَّهَ يُحِبُّ الْمُقْسِطِينَ﴾ (الممتحنة: 8)

ຄວາມຫມາຍວ່າ **ອັລລໍຫ໌ບໍ່ໄດ້ຫ້າມພວກເຈົ້າເຮັດດີ ແລະ ຍຸຕິທຳກັບບັນດາຜູ້ທີ່ບໍ່ໄດ້ກໍ່ສົງຄາມກັບພວກເຈົ້າ ໃນເລື່ອງສາສະໜາ ແລະ ບໍ່ໄດ້ໄລ່ພວກເຈົ້າອອກຈາກຖິ່ນຖານຂອງພວກເຈົ້າ ແທ້ຈິງອັລລໍຫ໌ຊົງຮັກຜູ້ທີ່ຍຸຕິທຳ(60:8)**

ໂອງການນີ້ໄດ້ອະທິບາຍຢ່າງຊັດເຈນວ່າ ເປັນທີ່ອະນຸຍາດໃຫ້ມຸສລິມເຮັດຄວາມດີ ແລະ ເຊື່ອມສຳພັນມິດຕະພາບກັບບັນດາຜູ້ທີ່ບໍ່ໄດ້ກໍ່ສົງຄາມ ແລະ ບໍ່ໄດ້ກົດຂີ່ພວກເຂົາໃນເລື່ອງສາສະໜາ ແລະ ສາມາດເຊື່ອມສຳພັນກັບພວກເຂົາຢ່າງຍຸດຕິທຳ ດ້ວຍຄຸນທຳ ແລະ ການເຮັດຄວາມດີ[46]

ໃນຂະນະທີ່ຄວາມເຫັນອີກທັດສະນະໜຶ່ງກ່າວວ່າ ຄຳວ່າ "ອັລ-ກິສຕິ" (القسط) ໃນໂອງການນີ້ ຫມາຍເຖິງ ການໃຫ້ຊັບສິນບາງສ່ວນຂອງພວກເຈົ້າໃຫ້ແກ່ພວກເຂົາ ເພື່ອເປັນການເຊື່ອມສຳພັນ ຄວາມຫມາຍຂອງມັນທີ່ນີ້ ບໍ່ໄດ້ຫມາຍເຖິງຄວາມຍຸດຕິທຳພຽງຢ່າງດຽວເທົ່ານັ້ນ ເນື່ອງຈາກຄວາມຍຸດຕິທຳໃນອິສລາມເປັນສິ່ງທີ່ຖືກບັງຄັບ ແລະ ຈຳເປັນກັບທັ້ງຂ້າສຶກທີ່ເຮັດສົງຄາມ ແລະ ຜູ້ທີ່ບໍ່ໄດ້ຮົບ[47]

ແລະ ການກະທຳດີທີ່ປະເສີດທີ່ສຸດຕໍ່ຜູ້ທີ່ບໍ່ແມ່ນມຸສລິມ ຄື ການສ້າງຄວາມເຂົ້າໃຈໃຫ້ພວກເຂົາໄດ້ເຫັນປະຈັກຄວາມດີງາມຂອງອິສລາມ ແລະ ການເຊີນຊວນສູ່ອິສລາມ ດ້ວຍຄວາມຮັກ ແລະ ຄວາມປາດຖະນາໃຫ້ພວກເຂົາຣອດພົ້ນຈາກການຫລົງເມົາ ຢູ່ໃນເສັ້ນທາງຂອງການປະຕິເສດສັດທາ ທີ່ຈະນຳໄປສູ່ຄວາມທຸກລະທົມທັງໃນໂລກນີ້ ແລະ ໂລກໜ້າ.

---

[43] ກຸສຕາຟ ເລີ ບອງ *ທະດໍເຣາະຕຸລ ອະຫຣັບ* (La Civilisation des Arabes) *(ໜ້າ 329-330)*

[44] ອ້າງຈາກ ອັບດຸລເຣາະມານ ອັລ-ບາຊາ *ສຸວັຣ ມິນ ຫະຍາດ ອັດ-ຕາບິອີນ (ໜ້າ 420)*

[45] ອິບນຸ ກະຊີຣ *ຕັຟຊີຣ ອັລກຸຣອານີລ ອະຊີມ (1:386)*

[46] ອັລ-ບະເກາະວີ *ມະອາລິມຸດ ຕັນຊີລ (3:331)*

ຫລັງຈາກນັ້ນ ໂອງການຖັດມາກໍ່ໄດ້ເນັ້ນຢ້ຳອີກຄັ້ງໜຶ່ງວ່າ ສິ່ງທີ່ຫ້າມບໍ່ໃຫ້ຜູກມິດກັບບັນດາຜູ້ປະຕິເສດສັດທານັ້ນ ເນື່ອງຈາກການລະເມີດຮຸກຮານ ການກົດຂີ່ ແລະ ການທີ່ພວກເຂົາກໍ່ສົງຄາມກັບມຸສລິມ ບໍ່ແມ່ນເພາະເຫດພຽງແຕ່ພວກເຂົາເປັນຜູ້ປະຕິເສດສັດທາ ບໍ່ວ່າຈະໃນກໍລະນີໃດກໍ່ຕາມ.

﴿إِنَّمَا يَنْهَاكُمُ اللَّهُ عَنِ الَّذِينَ قَاتَلُوكُمْ فِي الدِّينِ وَأَخْرَجُوكُمْ مِنْ دِيَارِكُمْ وَظَاهَرُوا عَلَى إِخْرَاجِكُمْ أَنْ تَوَلَّوْهُمْ وَمَنْ يَتَوَلَّهُمْ فَأُولَئِكَ هُمُ الظَّالِمُونَ﴾

(الممتحنة: 9)

ຄວາມຫມາຍວ່າ **ແທ້ຈິງ ອັລລໍຫ໌ໄດ້ຫ້າມພວກເຈົ້າຈາກບັນດາຜູ້ທີ່ກໍ່ສົງຄາມກັບພວກເຈົ້າໃນເລື່ອງສາສະໜາ ແລະ ໄດ້ຂັບໄລ່ພວກເຈົ້າອອກຖິ່ນຖານຂອງພວກເຈົ້າ ທັ້ຍັງໄດ້ຮ່ວມມືກັນຂັບໄລ່ພວກເຈົ້າ (ຊຶ່ງຫ້າມ) ບໍ່ໃຫ້ພວກເຈົ້າເປັນມິດກັບພວກເຂົາ ແລະ ຜູ້ໃດທີ່ຖືສຳພັນກັບພວກເຂົາ ຜູ້ນັ້ນຍ່ອມເປັນຜູ້ທີ່ອະຍຸຕິທຳ** (60:9)

[47] ອິບນຸລ ອະເຣາະບີ ອ້າງຈາກ ອັລ-ກູຣຕຸບີ *ອັລ-ຈາມຽະ ລີ ອະຫ໌ກາມິລກຸຣອານ (18:59)*

ດັ່ງນັ້ນ ສາມາດສະຫຼຸບໄດ້ວ່າ ພື້ນຖານເດີມໃນອິດສະລາມເຫັນວ່າ ຄວາມແຕກຕ່າງໃນເລື່ອງສາສະໜາລະຫວ່າງບຸກຄົນສອງຄົນບໍ່ໄດ້ເປັນເຫດທີ່ນຳໄປສູ່ຄວາມຂັດແຍ້ງ ຕໍ່ສູ້ ຫຼື ຕັດຂາດ ແລະບໍ່ໃຫ້ຄວາມຊ່ວຍເຫຼືອເກື້ອກູນລະຫວ່າງກັນ ໂດຍສະເພາະຢ່າງຍິ່ງລະຫວ່າງລູກທີ່ເປັນມຸສະລິມ ກັບພໍ່ແມ່ທີ່ເປັນຜູ້ປະຕິເສດສັດທາ ເນື່ອງຈາກອັລ-ລໍຮ໌ໄດ້ສັ່ງໃຫ້ເຮັດດີກັບທັງສອງຄົນໃນໂລກນີ້ ພຣະອົງໄດ້ດຳລັດວ່າ..."

﴿وَصَاحِبْهُمَا فِي الدُّنْيَا مَعْرُوفاً﴾( لقمان: 15)

ຄວາມຫມາຍວ່າ **ແລະ ຈົ່ງຄອຍຢູ່ດູແລເບິ່ງແຍງເອົາໃຈໃສ່ທ່ານທັ້ງສອງ (ໝາຍເຖິງບິດາມານດາທີ່ບໍ່ໄດ້ເປັນມຸສລິມຍາມທີ່ທັ້ງສອງມີຊີວິດ) ບົນໂລກນີ້ໃຫ້ດີ (31:15)**

ອັລ-ບຸຄໍຣີ ແລະ ມຸສລິມ ໄດ້ລາຍງານຈາກອັສມາໆ (ຣໍຍິຢັລລໍຮ໌ ອັນຮາ) ຊາວິກາຫຍິງທ່ານໜຶ່ງວ່າ "ແມ່ຂອງຂ້ອຍໄດ້ມາຫາຂ້ອຍໃນສະໄໝຂອງທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ສັນຕິຈົ່ງມີແດ່ທ່ານ) ໃນຂະນະທີ່ນາງຍັງເປັນຜູ້ຕັ້ງພາຄີ (ບໍ່ແມ່ນຜູ້ສັດທາ) ຂ້ອຍໄດ້ຖາມທ່ານສາດສະດາວ່າ "ແມ່ຂອງຂ້ອຍໄດ້ມາຫາຂ້ອຍໂດຍທີ່ນາງບໍ່ແມ່ນຜູ້ສັດທາ ຂ້ອຍຈະຮັບນາງໄດ້ບໍ?" ທ່ານຕອບວ່າ "ແມ່ນ" ເຈົ້າຕ້ອງຮັບແມ່ຂອງເຈົ້າ" [48]

ນອກຈາກນີ້ ຍັງມີຂໍ້ບັງຄັບທາງສາສະໜາທີ່ກຳນົດໃຫ້ລູກຕ້ອງດູແລ ແລະ ໃຫ້ຄ່າໃຊ້ຈ່າຍແກ່ພໍ່ແມ່ທີ່ບໍ່ແມ່ນມຸສະລິມ[49] ບໍ່ພຽງແຕ່ເທົ່ານີ້ ອິສລາມຍັງເຫັນວ່າ ການສະແດງຄວາມກະຕັນຍູຕໍ່ພໍ່ແມ່

ເປັນສ່ວນໜຶ່ງຂອງ *ຍິຣາດ* (ການຕໍ່ສູ້ເພື່ອແສງຫາຄວາມພໍໃຈຂອງອັລລໍຮ໌).[50]

ທ່ານສາສະດາ (ຂໍຄວາມຈຳເລີນ ແລະ ສັນຕິຈົ່ງມີແດ່ທ່ານ) ເອງ ໄດ້ແສດງຄວາມກະຕັນຍູຕໍ່ມານດາຂອງທ່ານ ແມ້ກະທັ້ງຫຼັງຈາກທີ່ມານດາຂອງທ່ານໄດ້ເສຍຊີວິດແລ້ວ ໂດຍມີລາຍງານວ່າ ທ່ານເຄີຍໄປຢ້ຽມຫຼຸມຝັງສົບຂອງມານດາຂອງທ່ານ ຊຶ່ງບໍ່ແມ່ນມຸສະລິມ ນອກຈາກນັ້ນ ທ່ານຍັງໄດ້ດູແລ ແລະ ປະນິບັດນ້າບ່າວຂອງທ່ານ ຊື່ *ອະບູ ຕໍາລິບ* ຢ່າງດີ ທ່ານໄດ້ເຊີນຊວນນ້າບ່າວໃຫ້ນ້ອມຮັບອິສລາມ ແຕ່ສຸດທ້າຍ ນ້າບ່າວຂອງທ່ານກໍ່ໄດ້ເສຍຊີວິດໂດຍບໍ່ທັນໄດ້ຕອບຮັບຄຳເຊີນຊວນຂອງທ່ານ

ນອກຈາກນັ້ນ ທ່ານສາສະດາຍັງເຄີຍມີເດັກຮັບໃຊ້ຊາວຢິວຄົນໜຶ່ງ ແລະ ໄດ້ເຮັດດີກັບເພິ່ນ ຈົນກະທັ້ງເພິ່ນຍອມຮັບອິສລາມໃນບັ້ນປາຍຂອງຊີວິດ ໂດຍທີ່ພໍ່ຂອງລາວເອງໄດ້ສັ່ງໃຫ້ລາວຍອມຮັບອິສລາມ ເນື່ອງຈາກໄດ້ເຫັນຄຸນນະທຳອັນດີງາມຂອງທ່ານ

ເລື່ອງນີ້ປະກົດໃນລາຍງານຂອງທ່ານ ອະນັສ ຣໍຍິຢັລລໍຮ໌ ອັນຮຸ ຜູ້ເປັນອັຄຣະສາວົກຄົນໜຶ່ງ ວ່າ “ເດັກຊາວຢິວທີ່ເຄີຍຮັບໃຊ້ທ່ານສາສະດາໄດ້ລົ້ມປ່ວຍ ທ່ານຈຶ່ງໄດ້ໄປຢ້ຽມເຂົາໃນຂະນະທີ່ລາວໃກ້ສິ້ນລົມຫາຍໃຈ ທ່ານໄດ້ເຊີນໃຫ້ລາວຍອມຮັບອິສລາມ ເດັກຜູ້ນັ້ນໄດ້ຫັນໄປເບິ່ງພໍ່ຂອງລາວຊຶ່ງຢູ່ໃກ້ມໍໆໃບໜ້າລາວ ເມື່ອນັ້ນ ພໍ່ຂອງລາວຈຶ່ງເວົ້າວ່າ: “ເຮັດຕາມທີ່ ອະບູ ກໍາຊິມ (ໝາຍເຖິງທ່ານສາສະດາ) ບອກເຈົ້າເຖີດ” ເດັກຄົນນັ້ນຈຶ່ງຍອມຮັບອິສລາມ ແລ້ວກໍ່ໄດ້ສິ້ນລົມຫາຍໃຈ”[52]

ພາຍໃຕ້ຄັນລອງແຫ່ງຄຳສອນອິສລາມຂອງທ່ານສາສະນະທູດ ດັ່ງທີ່ໄດ້ກ່າວມານີ້ ຊາວມຸສະລິມທຸກຍຸກສະໄໝໄດ້ນຳເອົາແນວທາງແຫ່ງຄວາມເມດຕາດັ່ງກ່າວໃນການເຊື່ອມສຳພັນກັບສາສະໜິກອື່ນ ຈົນເປັນທີ່ຍອມຮັບເຖິງຄວາມເມດຕາ ແລະ ຄວາມດີງາມຂອງອິສລາມ ແມ້ແຕ່ໃນໝູ່ຜູ້ທີ່ບໍ່ແມ່ນມຸສະລິມເອງກໍຕາມ

ຕົວຢ່າງເຊັ່ນ ໃນປີທີ 13 ຮິດຈະເຣາະຮ໌ (ປີທີ່ໃຊ້ນັບຕາມປະຕິທິນອິສລາມ ຊຶ່ງເລີ່ມນັບຕັ້ງແຕ່ການອົບພະຍົບຂອງທ່ານສາສະດາ ຈາກ ນະຄອນມັກກະຫ໌ ສູ່ ນະຄອນມະດີນະຫ໌ ກົງກັບປີ 636 ຕາມປະຕິທິນຄຣິສສັກກະລາດ) ຊາວຄຣິດສະຕຽນໃນເມືອງຊີເລຍ ໄດ້ສົ່ງຫນັງສືເຖິງ **ອະບູ ອຸໄບຍດະຫ໌ ອິບນຸລ ອັນ-ຍັຣ໌ຣໍຫ໌** ແມ່ທັບມຸສະລິມທີ່ໄດ້ເປີດເມືອງຊີເລຍກ່າວວ່າ “ໂອ້ ຜູ້ເປັນມຸສລິມທັງຫລາຍ ພວກທ່ານເປັນທີ່ຮັກແກ່ພວກເຮົາຫລາຍກວ່າພວກໂຣມັນ ເຖິງແມ່ນວ່າພວກເຂົາຈະນັບຖືສາສະໜາດຽວກັບພວກເຮົາ ເພາະວ່າພວກທ່ານໃຫ້ຄວາມຍຸດຕິທຳ ມີຄວາມເມດຕາ ແລະ ຄວາມອາລີກັບພວກເຮົາ ບໍ່ລະເມີດ ແລະ ບໍ່ອະຍຸຕິທຳກັບພວກເຮົາ ແລະ ປົກຄອງພວກເຮົາໄດ້ດີກວ່າຄົນພວກນັ້ນ[53]

---

[48] ອັລ-ບຸກຄໍຣີ (ໝາຍເລກ 5:233). ມຸສລິມ (2:696)

[49] ກະຍາ ອັລ-ຫະຣອສ *ອະຫ໌ກາມຸລ ກຸຣອານ (4:461). ອິບນຸ ຫະຈັຣ ຟັຕຫຸລ ບາຣີ (5:234)*

[50] ອັລ-ບຸກຄໍຣີ (ໝາຍເລກ 3004). ມຸສລິມ (4:1975)

[51] ມຸສລິມ (ໝາຍເລກ 2255:2256) [52] ອັລ-ບຸກຄໍຣີ (ໝາຍເລກ 1268)

53 ອັລ-ບະລາຊີຣີ. *ຟຸຕູຫຸລ ບຸລດານ (ໜ້າ 139)* ອະບູ ຍຸຊຸຟ ອັລ-ເຄາະຣໍຈ (ໜ້າ 139)

**ຊາງກຣິດ ຮໍນິຄາຮ໌** ນັກບູຮະພາຄະດີສຸພາບສະຕີຊາວເຢຍລະມັນໄດ້ກ່າວໃນປື້ມຂອງເຂົາວ່າ “ໃນສະຕະວັດທີ 9 ບາດຫລວງແຫ່ງນະຄອນເຢຣູຊາເລັມໄດ້ມີໜັງສືເຖິງບາດຫລວງແຫ່ງກຸງຄອນສະແຕນຕິໂນເປີລ ໂດຍໄດ້ກ່າວເຖິງຊາວອາລັບມຸສລິມວ່າ ແທ້ຈິງ ພວກເຂົານັ້ນເຕັມໄປດ້ວຍຄວາມຍຸດຕິທຳ ພວກເຂົາບໍ່ເຄີຍລະເມີດ ແລະ ອະຍຸດຕິທຳກັບພວກເຮົາເລີຍ ແລະ ບໍ່ເຄີຍໃຊ້ວິທີການຮຸນແຮງໃດໆ ກັບເຮົາ”[54]

**ກຸສຕາຟ ເລ ບອງ** ໄດ້ສະຫຼຸບໄວ້ວ່າ “ຄວາມຈິງກໍຄື ປະຊາຊາດທັງຫລາຍບໍ່ເຄີຍຮູ້ຈັກກອງທັບໃດທີ່ເມດຕາອາລີ ແລະ ໃຈກວ້າງເທົ່າໄປກັບກອງທັບມຸສະລິມຊາວອາຣັບ ແລະ ບໍ່ເຄີຍຮູ້ຈັກສາສະໜາໃດທີ່ເຕັມໄປດ້ວຍຄວາມເມດຕາເຊັ່ນສາສະໜາຂອງພວກເຂົາ”[55]

ໃນຂະນະທີ່ **ທໍມັສ ອາຣ໌ໂນລດ໌** ໄດ້ກ່າວວ່າ “ແທ້ຈິງຊາວຄຣິສຕຽນອາລັບທີ່ໃຊ້ຊີວິດຢູ່ທ່າມກາງສັງຄົມມຸສລິມໃນປັດຈຸບັນຕ່າງປະຈັກເຫັນເຖິງຄວາມໂອນອ່ອນຜ່ອນປົນທີ່ວ່ານີ້”[56]

**ອິສລາມ** ເປັນສາສະໜາແຫ່ງຄວາມເມດຕາ ແລະ ເປັນບັນຍັດແຫ່ງສັນຕິພາບ ທີ່ມາລວບຮວມແຖວທີ່ແຕກແຍກກະຈັດກະຈາຍ ສ້າງຄວາມອ່ອນໂຍນໃຫ້ເກີດຂຶ້ນໃນຫົວໃຈທີ່ຄຽດແຄ້ນ ຜູກມັດຄວາມເປັນພີ່ນ້ອງລະຫວ່າງມະນຸດບົນພື້ນຖານແຫ່ງຄວາມເປັນພີ່ນ້ອງໃນອິສ-ລາມ ປູທາງແຫ່ງຄວາມສຳພັນທີ່ດີກັບຜູ້ອື່ນໃນທຸກສາສະໜາ

54 Zanghrid Honikah. ຊັມຊູລ ອະຫຣັບ ຕັສຕະຼູ ອະລັລ ກໍຣບີ (ຫນ້າ 364)

55 ກຸສຕາຟ ເລີ ບອງ *ອ້າງແລ້ວ (ໜ້າ 344)*

[56] ທໍມັສ ອາຣໂນລດ໌ *ອ້າງແລ້ວ (ໜ້າ 73)*

ພວກເຂົາທັງໝົດເປັນຜູ້ທີ່ຖືກຊັກຊວນສູ່ອິສລາມ ແລະ ສັນຕິພາບໃນເວລາດຽວກັນ ບໍ່ມີສິ່ງຄາມນອກຈາກເມື່ອມັນຮອດຂັ້ນຈໍາເປັນທີ່ສຸດເທົ່ານັ້ນ ເພື່ອຕ້ານການລະເມີດຮຸກຮານ ຄືນຄວາມຍຸດຕິທໍາ ປົກປ້ອງຜູ້ຖືກກົດຂີ່ ແລະ ປະກັນສິດໃນການເຜີຍແຜ່ສາສະໜາແຫ່ງຄວາມເມດຕາ ແລະ ສັນຕິພາບນີ້ ດັ່ງທີ່ມີປະກົດວ່າ ທ່ານສາສະດາ (ຂໍຄວາມຈໍາເລີນ ແລະ ສັນຕິຈົ່ງມີແດ່ທ່ານ) ໄດ້ມີສານໄປເຖິງກະສັດ ແລະ ຜູ້ຄອງເມືອງບາງພຣະອົງ ໂດຍມີເນື້ອຫາເປັນການຮຽກຮ້ອງຊວນສູ່ອິສ-ລາມ ແລະ ສັນຕິພາບ ຕົວຢ່າງເຊັ່ນ ສານທີ່ສົ່ງໄປໃຫ້ **ຫີຣກິລ** ຈອມຈັກກະພັດແຫ່ງໂຣມັນວ່າ:

**“ດ້ວຍພຣະນາມແຫ່ງອົງອັລລໍຫ໌ ຜູ້ຊົງເມດຕາກະລຸນາຍິ່ງ ຈາກ ມຸຮັມມັດ ຜູ້ເປັນບ່າວ ແລະ ສາສະນະທູດຂອງອັລລໍຫ໌ ເຖິງ ຫີຣກິລ ຈັກກະພັດແຫ່ງໂຣມ ຄວາມສັນຕິຈົ່ງມີແດ່ຜູ້ທີ່ນ້ອມຕາມທາງນໍາ ຈົ່ງຮັບອິສລາມເຖີດ ແລ້ວທ່ານຈະພົບກັບຄວາມສັນຕິປອດໄພ”**[57]

ອິສລາມຕ້ານຕ້ານພຶດຕິກໍາທີ່ສົ່ງເສີມໃຫ້ເກີດຄວາມອະຍຸຕິທໍາ ຄວາມຮຸນແຮງ ແລະ ການລະເມີດຮຸກຮານ ອັລລໍຫ໌ ໄດ້ກໍາຊັບໄວ້ວ່າ

وَلاَ تَعْتَدُوْا إِنَّ اللهَ لاَ يُحِبُّ الْمُعْتَدِيْنَ (البقرة : 190)

ຄວາມຫມາຍວ່າ **ສູເຈົ້າຢ່າໄດ້ລະເມີດຮຸກຮານ ແທ້ຈິງອັລລໍຫ໌ບໍ່ຊົງຮັກຜູ້ລະເມີດຮຸກຮານ** (2:190)

---

[57] ອັລ-ບຸກໍຣີ (ໝາຍເລກ 7)

ແທ້ຈິງ ນີ້ຄື **ອິສລາມ** ສາສະໜາແຫ່ງຄວາມເມດຕາ ແລະ ຄວາມຍຸດຕິທຳ ເປັນສານທີ່ຄອບຄຸມ ແລະ ສົມດຸນ ຊຶ່ງໂລກບໍ່ອາດຈະ ຫຼຸດພົ້ນຈາກບັນຫາຕ່າງໆ ອັນຫລາກຫຼາຍ ແລະ ຊົ່ວຮ້າຍທີ່ທັບຖົມຢູ່ ຕອນນີ້ໄດ້ **ນອກຈາກດ້ວຍວິຖີທາງນີ້ເທົ່ານັ້ນ.**

## ຈຸດປະສົງຂອງສົງຄາມໃນອິສລາມ

ຢ່າງໃດກໍຕາມ ອິສລາມ ບໍ່ໄດ້ສະໜັບສະໜູນສູ່ການເຮັດ ສົງຄາມ ແລະ ບໍ່ອະນຸຍາດໃຫ້ມີການປະກາດສົງຄາມ ບໍ່ວ່າໃນກໍລະນີ ໃດໆ ເວັ້ນແຕ່ດ້ວຍຄວາມຈຳເປັນຢ່າງທີ່ສຸດ ແລະ ມີຈຸດປະສົງເປັນຫົນ ທາງສູ່ອັລລໍຫ໌ ຊຶ່ງຕ້ອງຢູ່ພາຍໃຕ້ກົດເກນ ເງື່ອນໄຂ ແລະ ຈັນຍາບັນ ອັນສູງສົ່ງ ແລະ ບໍ່ມີໃຜສາມາດປະກາດສົງຄາມໄດ້ ເວັ້ນແຕ່ຜູ້ນຳສູງ ສຸດຂອງມຸສລິມ ບໍ່ແມ່ນຕາມຄວາມຕ້ອງການຂອງບຸກຄົນໃດໆ ຫລື ກຸ່ມໃດໜຶ່ງ

ທີ່ສຳຄັນກວ່ານັ້ນ ບໍ່ອະນຸຍາດໃຫ້ມີສົງຄາມ ເວັ້ນແຕ່ຕ້ອງ ຜ່ານກະບວນການຮຽກຮ້ອງທີ່ຖືກຕ້ອງ ສູ່ສັນຕິພາບ ຫລື ການຕອບ ຮັບອິສລາມຢ່າງຖືກຕ້ອງເປັນທັມເສຍກ່ອນ ແລະ ບໍ່ອະນຸຍາດໃຫ້ໂຈມ ຕີບຸກຄົນໃດ ຫລື ຝ່າຍໃດ ນອກເສຍຈາກວ່າບຸກຄົນ ຫລື ຝ່າຍນັ້ນ ຕ້ອງຮັບຜິດຊອບໃນຜົນແຫ່ງການກະທຳນັ້ນ ທັ້ງໃນດ້ານສາສະນາ ບັນຍັດ ແລະ ກົດໝາຍທັ້ງນີ້ເພື່ອວັດຖຸປະສົງຢ່າງໃດຢ່າງໜຶ່ງດັ່ງຕໍ່ໄປນີ້

(ໜຶ່ງ) ຕອບໂຕ້ຄວາມບໍ່ຍຸດຕິທຳ ແລະ ການຮຸກຮານ ປົກປ້ອງ ແລະ ຄຸ້ມຄອງຊີວິດ, ຄອບຄົວ, ຊັບສິນ, ສາສະໜາ ແລະ ແຜ່ນດິນເກີດ.

(ສອງ) ປະກັນເສລີພາບທາງດ້ານຄວາມເຊື່ອຖື ແລະ ການປະຕິບັດຕາມສາສະໜະກິດ ທີ່ຜູ້ຮຸກຮານພະຍາຍາມໃສ່ຮ້າຍ ຫລື ຂັດຂວາງ ເສລີພາບດ້ານຄວາມຄິດ ແລະ ການນັບຖືສາສະໜາ.

(ສາມ) ພິທັກການເຜີຍແຜ່ອິສລາມທີ່ຄ້ຳຊູ ຄວາມເມດຕາ ຄວາມສະງົບສັນຕິ ແກ່ມະນຸດຊາດ ໃຫ້ແຜ່ກະຈາຍຢ່າງທົ່ວເຖິງແກ່ມະນຸດທັງມວນ.

(ສີ່)ໃຫ້ບົດຮຽນແກ່ຜູ້ທີ່ລະເມີດສັນຍາ ຫຼື ຜູ້ທີ່ຮຸກຮານບັນດາຜູ້ສັດທາ ຫລື ຜູ້ທີ່ເຮັດຕົວເປັນປະຕິປັກກັບຄຳສັ່ງຂອງອັລລໍຫ໌ ແລະ ປະຕິເສດຄວາມຍຸດຕິທຳ ແລະ ການປະນີປະນອມ.

(ຫ້າ) ໃຫ້ຄວາມຊ່ວຍເຫລືອແກ່ຜູ້ທີ່ຖືກກົດຂີ່ ບໍ່ວ່າລາວຈະຢູ່ບ່ອນສະຖານທີ່ໃດ ປົດປ່ອຍ ແລະ ປົກປ້ອງລາວຈາກການຮຸກຮານຂອງຜູ້ທີ່ກົດຂີ່.

**ອັຊ-ຊັຣບີນີຍ໌** ນັກປາດດ້ານນິຕິສາດອິສລາມໃນສະໄໝສັດຕະວັດທີ່ 10 **ຮິຈເຣາະສັກຣາດ** ໄດ້ອະທິບາຍວ່າ:

"ການກຳນົດໃຫ້ມີບັນຍັດຍິຮາດນັ້ນ ຖືກກຳນົດໃຫ້ມີໄວ້ເປັນເຄື່ອງມືເທົ່ານັ້ນ ບໍ່ແມ່ນຈຸດປະສົງ ຫລື ເປົ້າໝາຍ ເພາະຈຸດປະສົງຂອງ

**ການເຮັດສົງຄາມແທ້ໆຄື ການໃຫ້ທາງນຳ (ສູ່ການນັບຖືອິສລາມ) ແລະ ການໃຫ້ໄດ້ຊະຮາດະຫ໌ (ການກ່າວປະຕິຍານເຂົ້າຮັບອິສລາມ)ສົງຄາມບໍ່ໄດ້ມີຈຸດປະສົງເພື່ອການຂ້າຜູ້ປະຕິເສດສັດທາ ດັ່ງນັ້ນ ຖ້າຫາກວ່າເປັນໄປໄດ້ທີ່ຈະໃຫ້ທາງນຳດ້ວຍການໃຊ້ເຫດຜົນ ແລະ ຊີ້ແຈງອະທິບາຍ ໂດຍບໍ່ຈຳເປັນຕ້ອງມີສົງຄາມ ຍ່ອມເປັນສິ່ງທີ່ດີກວ່າການເຮັດສົງຄາມເປັນທີ່ສຸດ”** [58]

ທ່ານສາດສະນະທູດ (ຂໍຄວາມຈຳເລີນ ແລະ ຄວາມສັນຕິຈົ່ງມີແດ່ທ່ານ) ເປັນຕົວຢ່າງທີ່ດີໃນການຫລີກລ້ຽງການເຮັດສົງຄາມ ໂດຍທ່ານໄດ້ຂໍພອນໃຫ້ແກ່ບັນດາຜູ້ປະຕິເສດສັດທາ ທີ່ຄອຍຂັດຂວາງ ແລະ ໃຫ້ຮ້າຍທ່ານດ້ວຍການເວົ້າວ່າ “ໂອ້ ອັລລໍຫ໌ ຂໍພຣະອົງຊົງປະທານອະໄພແກ່ກຸ່ມຊົນພວກຂອງຂ້ອຍດ້ວຍເຖີດ ເພາະແທ້ຈິງ ພວກເຂົານັ້ນບໍ່ຮູ້ແທ້ໆ”[59]

ເມື່ອເປັນເຊັ່ນນີ້ ຈຶ່ງເຫັນໄດ້ຊັດເຈນເຖິງຄວາມແຕກຕ່າງລະຫວ່າງການກໍ່ການຮ້າຍ ຊຶ່ງເປັນສິ່ງທີ່ຖືກຫ້າມ ແລະ ນຳໄປສູ່ຫາຍະນະ ແລະ ຄວາມພິນາດ ກັບການຍິຮາດທີ່ຖືກຕ້ອງຕາມຫລັກສາດສະໜາ ຊຶ່ງຈະນຳໄປສູ່ ການປົກຄອງ ແລະ ການສະຖາປະນາຄວາມຍຸດຕິທຳ ແລະ ຄວາມປອດໄພ ລວມທັງການກຳຈັດຮາກເຫງົ້າຂອງການກໍ່ການຮ້າຍ ແລະ ການທຳລາຍລ້າງ

---

*58* ອັລ-ຊັຣບີນີຍ໌. ມຸກນີຍ໌ ອັລ-ມຸຫຕາຈ (4:210)

*59* ມຸສລິມ (ໝາຍເລກ 3:1417)

ອະນຶ່ງ ຄຳວ່າ "ຍິຮາດ" ທີ່ນີ້ ຫມາຍເຖິງ ຍິຮາດທີ່ເຈາະຈົງສະເພາະການຕໍ່ສູ້ໃນສົງຄາມ ໃນຂະນະທີ່ຂໍ້ເທັດຈິງຂອງການຍິຮາດໃນເສັ້ນທາງຂອງອັລລໍຫ໌ໂດຍລວມນັ້ນ ຄື ການທຸ່ມເທແຮງພະຍາຍາມເພື່ອໃຫ້ໄດ້ມາເຊິ່ງສິ່ງທີ່ອັລລໍຫ໌ໂປດປານພໍໃຈ ນັ່ນຄື ການສັດທາ ແລະການປະຕິບັດຄຸນງາມຄວາມດີ ລວມທັງ ການຂະຈັດປັດເປົ່າສິ່ງທີ່ອັລ-ລໍຫ໌ໂກດ[60]

ດັ່ງນັ້ນ ຍິຮາດໃນອິສລາມຈຶ່ງຄອບຄຸມ ການປະຕິບັດພາລະກິດຕ່າງ ໆ ທີ່ມີຈຸດປະສົງເພື່ອເຜີຍແຜ່ອິສລາມ ອັນເປັນສາດສະໜາແຫ່ງພຣະຜູ້ເປັນເຈົ້າ ເປັນສາດສະໜາແຫ່ງຄວາມເມດຕາ ແລະສ້າງຄວາມໝາຍອັນສູງສົ່ງນີ້ໃຫ້ເກີດຂຶ້ນໃນຊີວິດຂອງມວນມະນຸດເພື່ອຄວາມສຳເລັດອັນເປັນເປົ້າໝາຍ ນັ່ນຄື ຄວາມຜາສຸກທັ້ງໃນໂລກນີ້ ແລະ ໃນອາຄິເຣາະຫ໌

ດັ່ງນັ້ນ, ໃນອິສລາມຈຶ່ງມີ ຍິຮາດ ຫລາຍດ້ານ, ອາທິເຊັ່ນ:

- ຍິຮາດໃນການຕໍ່ສູ້ກັບຈິດໃຈຂອງຕົນເອງ,
- ຍິຮາດໃນດ້ານການສຶກສາ,
- ຍິຮາດໃນດ້ານການເຜີຍແຜ່ອິສລາມ,
- ຍິຮາດໃນດ້ານການອົບຮົມລ້ຽງດູ,
- ຍິຮາດໃນດ້ານການຂຽນ ແລະ ການເຜີຍແຜ່ຄວາມຮູ້,
- ຍິຮາດໃນດ້ານການເມືອງ,
- ແລະດ້ານອື່ນໆ ທີ່ມີຄວາມຈຳເປັນຕໍ່ການດຳລົງຊີວິດ.[61]

ທັງຫມົດທັງປວງນັ້ນ ຈະຕ້ອງບໍ່ອອກຈາກບັນທັດຖານຂອງຄວາມເປັນສາສະຫນາແຫ່ງສັນຕິພາບ ເພາະອິດສະລາມຄືຖຸງນຳແຫ່ງຄວາມດີ ທາງນຳຄວາມປະເສີດ ແລະ ສັນຕິພາບ.

## ການຂ້າຜູ້ອື່ນໂດຍຄວາມຕັ້ງໃຈ

ອິສລາມເປັນສາສະນາທີ່ເອົາໂທດຫນັກໃນເລື່ອງຂອງການຫລັ່ງເລືອດ ແລະ ຂ້າຊີວິດຜູ້ອື່ນໂດຍບໍ່ຍຸຕິທຳ ອັລລໍຫ໌ໄດ້ມີດຳລັດວ່າ

﴿مِنْ أَجْلِ ذَلِكَ كَتَبْنَا عَلَى بَنِي إِسْرائيلَ أَنَّهُ مَنْ قَتَلَ نَفْساً بِغَيْرِ نَفْسٍ أَوْ فَسَادٍ فِي الْأَرْضِ فَكَأَنَّمَا قَتَلَ النَّاسَ جَمِيعاً وَمَنْ أَحْيَاهَا فَكَأَنَّمَا أَحْيَا النَّاسَ جَمِيعاً﴾ (سورة المائدة:32)

ຄວາມໝາຍວ່າ **ດ້ວຍສາເຫດ (ແຫ່ງການຂ້າກັນລະຫວ່າງມະນຸດທີ່ນຳມາແຕ່ຄວາມຫາຍະນະ) ດັ່ງກ່າວ ເຮົາ (ໝາຍເຖິງອັລລໍຮ໌) ຈຶ່ງໄດ້ກຳນົດແກ່ລູກຫຼານອິດສະຣາເອລວ່າ ຜູ້ໃດທີ່ຂ້າຊີວິດໜຶ່ງໂດຍບໍ່ຊອບທຳ ດ້ວຍເຫດຂອງການຄາດຕະກຳຊີວິດອື່ນ (ຄືຄົນຜູ້ນັ້ນບໍ່ແມ່ນຄາດຕະກອນ) ແລະ ບໍ່ແມ່ນດ້ວຍເຫດຂອງການກໍ່ຄວາມເສຍຫາຍໃດໆ ເທິງໜ້າແຜ່ນດິນ ນັ້ນສະເໝືອນວ່າເຂົາໄດ້ຂ້າຜູ້ຄົນທັງໝົດແລ້ວ ແລະ ຜູ້ໃດທີ່ໃຫ້ຊີວິດ (ແກ່ຜູ້ໃດຜູ້ໜຶ່ງ) ນັ້ນສະເໝືອນວ່າເຂົາໄດ້ໃຫ້ຊີວິດແກ່ຜູ້ຄົນທັງໝົດແລ້ວ** (5:32)

ທ່ານອິບນຸ ອັບບາສ ຣໍດິຍັລລໍຣ໌ ອັນຮຸມາ ອັກຄະສາວົກທ່ານໜຶ່ງຂອງທ່ານສາດສະນະທູດໄດ້ອະທິບາຍວ່າ ຜູ້ໃດທີ່ຂ້າຊີວິດໜຶ່ງທີ່ອັລລໍຣ໌ຫ້າມບໍ່ໃຫ້ຂ້າ ກໍເທົ່າກັບເຂົາໄດ້ຂ້າຜູ້ຄົນທັງໝົດ ສ່ວນຄວາມໝາຍຂອງການໃຫ້ຊີວິດນັ້ນ ຄືການບໍ່ຂ້າຊີວິດທີ່ອັລລໍຣ໌ຫ້າມບໍ່ໃຫ້ຂ້າ ບໍ່ວ່າຈະເປັນມຸດສະລິມ ຫຼື ບໍ່ແມ່ນມຸສລິມ ແລະ ນັ້ນຄືການໃຫ້ຊີວິດແກ່ມະນຸດທັງມວນ [62]

ແລະ ຈົ່ງຮູ້ໄວ້ວ່າ ການຫຼັ່ງເລືອດຜູ້ບໍລິສຸດເປັນສິ່ງທີ່ຕ້ອງຫ້າມຢ່າງຍິ່ງໃນບັນຍັດຂອງອິດສະລາມ ຈຳເປັນຕ້ອງມີຂະບວນການພິຈາລະນາຢ່າງຖີ່ຖ້ວນ ແລະ ຕ້ອງຜ່ານການພິພາກສາ ແລະ ວິນິດໄສຢ່າງລະອຽດໃຫ້ດີທີ່ສຸດ ໂດຍສະຫຼຸບແລ້ວ ບໍ່ອະນຸຍາດໃຫ້ຂ້າຜູ້ທີ່ບໍ່ແມ່ນມຸສລິມ ນອກຈາກວ່າເຂົາເປັນຄາດຕະກອນ ຫຼື ນັກຮົບໃນສົງຄາມເທົ່ານັ້ນ

ອັລລໍຫ໌ຍັງໄດ້ຕຣັດອີກວ່າ

﴿وَمَنْ يَقْتُلْ مُؤْمِناً مُتَعَمِّداً فَجَزَاؤُهُ جَهَنَّمُ خَالِداً فِيهَا وَغَضِبَ اللَّهُ عَلَيْهِ وَلَعَنَهُ وَأَعَدَّ لَهُ عَذَاباً عَظِيماً﴾ (سورة النساء: 93)

---

[60] ອິບນຸ ໄຕມີຍະຫ໌ . *มัจย์มูอ อัล-ฟะตาอา* (1:191-192)

[61] ເບິ່ງໃນ ອິບນຸ ຫະຈັຣ *ฟัตฮุล บารี* (6:3)

[62] ອິບນຸ ກະຊີຣ໌ ອ້າງຈາກ ອັນ-ມິສບາຫຸນ ມູນີຣ (ໜ້າ 372)

ຄວາມໝາຍວ່າ **ແລະຜູ້ໃດທີ່ຂ້າຜູ້ສັດທາໂດຍເຈດຕະນາ (ແລະໂດຍບໍ່ຊອບທຳ) ແນ່ນອນ ຜົນຕອບແທນຂອງເຂົາຄືການທໍລະມານໃນຂຸມນະລົກຕະຫຼອດນິລັນ ແລະ ອັລລໍຮ໌ຊົງພິໂລດຕໍ່ເຂົາ ພຣະອົງສາບແຊ່ງເຂົາ ແລະພຣະອົງກຽມໄວ້ສຳລັບເຂົາຊຶ່ງການລົງໂທດທີ່ໃຫຍ່ຫຼວງ** (4:93)

ທ່ານອິບນຸ ອັບບາສ ໄດ້ມີຄວາມເຫັນໜັກແໜ້ນໃນເລື່ອງນີ້ວ່າ **ບໍ່ມີການອະໄພໂທດຈາກອັລລໍຮ໌ແກ່ຜູ້ທີ່ຂ້າຜູ້ສັດທາໂດຍເຈດຕະນາ** ເພາະເຂົາຕ້ອງໄດ້ຮັບການລົງໂທດໃນຂຸມນະລົກຕະຫຼອດການ ເຊິ່ງສວນກັບຄວາມເຫັນຂອງນັກວິຊາການຄົນອື່ນໆ ທີ່ສ່ວນໃຫຍ່ເຫັນວ່າປະຕູແຫ່ງການອະໄພໂທດຈາກອັລລໍຮ໌ນັ້ນຍັງເປີດກວ້າງສຳລັບເຂົາສະເໝີ [63]

ບໍ່ວ່າກໍລະນີໃດກໍຕາມ ອິດສະລາມໄດ້ຫ້າມການຂ້າຜູ້ອື່ນໂດຍບໍ່ຊອບທຳ ເຊັ່ນດຽວກັບທີ່ຫ້າມບໍ່ໃຫ້ຂ້າມຸດສະລິມ ອິດສະລາມຍັງໄດ້ຫ້າມຂ້າຜູ້ປະຕິເສດສັດທາທີ່ຢູ່ພາຍໃຕ້ສັນຍາ ຫຼື ພາຍໃຕ້ການປົກຄອງຂອງລັດອິດສະລາມອີກດ້ວຍ ແລະຜູ້ໃດກະທຳເຊັ່ນນັ້ນ ຖືວ່າເຂົາໄດ້ກໍ່ອາດຊະຍາກຳອັນຮ້າຍແຮງ ແລະ ໃຫຍ່ຫຼວງຍິ່ງ ກະທັ້ງອັລລໍຮ໌ໄດ້ປິດກັ້ນເຂົາຈາກການເຂົ້າສະຫວັນ

ດ້ວຍເຫດນີ້ ເພື່ອເປັນການພິທັກຄວາມໝັ້ນຄົງ ແລະ ສະຖຽນລະພາບຂອງສັງຄົມ ແລະ ປ້ອງກັນການຕໍ່ສູ້ຫໍ້າຫັ່ນ ແລະ ຄວາມຂັດແຍ່ງລະຫວ່າງເຊື້ອຊາດ ທ່ານສາດສະດາທູດ (ຂໍຄວາມຈຳເລີນ ແລະ ສັນຕິມີແດ່ທ່ານ) ຈຶ່ງໄດ້ມີວະຈະນະວ່າ **"ຜູ້ໃດຂ້າມຸອາຫັດ ຫຼື ຜູ້ປະຕິເສດສັດທາທີ່ຢູ່ໃນສັນຍາ (ໃນລາຍງານໜຶ່ງມີວ່າ ຜູ້ໃດຂ້າຄົນໜຶ່ງ**

ຄົນໃດໃນໝູ່ຊາວຊິມມີ ຫຼື ຜູ້ປະຕິເສດສັດທາທີ່ຢູ່ພາຍໃຕ້ການປົກຄອງຂອງລັດອິດສະລາມ) ແນ່ນອນ ເຂົາຈະບໍ່ໄດ້ສຳຜັດກິ່ນຂອງສະຫວັນ"[64]
"ຜູ້ໃດທີ່ຂ້າມຸອາຫັດ ຫຼື ຜູ້ປະຕິເສດສັດທາທີ່ຢູ່ໃນສັນຍາ ໂດຍບໍ່ຊອບທຳ ແນ່ນອນ ອັລລໍຮ໌ຈະຊິງຫ້າມບໍ່ໃຫ້ເຂົາໄດ້ເຂົ້າສະຫວັນ" [65]

"ມຸອາຮັດ" ຫມາຍເຖິງ ຜູ້ທີ່ມີສັນຍາສັນຕິພາບລະຫວ່າງເຮົາກັບເຂົາ ສ່ວນໃຫຍ່ທີ່ກ່າວເຖິງໃນວະຈະນະຂອງທ່ານສາດສະດາທູດມັກຈະຫມາຍເຖິງຜູ້ປະຕິເສດສັດທາທີ່ຢູ່ພາຍໃຕ້ການປົກຄອງຂອງລັດອິດສະລາມ ແລະອາດຈະລວມເຖິງຜູ້ປະຕິເສດສັດທາຄົນອື່ນໆ ທີ່ມີສິນທິສັນຍາ ຫຼື ຂໍ້ຕົກລົງບໍ່ເຮັດສົງຄາມໃນຊ່ວງໄລຍະເວລາໃດເວລາໜຶ່ງ [66]

---

[63] ອິບນຸ ກະຊີຣ໌ ອ້າງຈາກ ອັນ-ມິສບາຫຸນ ມູນີຣ (ໜ້າ 315)

[64] ອັລ-ບຸກຄໍຣີ (ໝາຍເລກ 3166)

[65] ອະບູ ດາວູດ (ໝາຍເລກ 2760), ອັນ-ນະສາອີ (8:24)

[66] ອິບນຸ ມັນຊູຣ. ລິສານຸນ ອະຫຣັບ (3:313)

# ອັລກຸຣອານ

## ແຫລ່ງຍັ້ງເກີດຂອງສັ້ນຕິພາບ

ບໍ່ເປັນການແປກໃຈເລີຍຖ້າຫາກເຮົາຮູ້ວ່າທຳມະນູນຂອງອິດສະລາມຄື ອັລກຸຣອານ ໄດ້ຖືກປະທານລົງມາໃນຄ່ຳຄືນ “ອັນ-ກ໊ອດຣ໌” ທີ່ມີຄຸນລັກສະນະໄດ້ຖືກລະບຸໄວ້ໃນອັລກຸຣອານວ່າ

﴿سَلامٌ هِيَ حَتَّى مَطْلَعِ الْفَجْرِ﴾ (القدر: 5)

ຄວາມວ່າ **ຄືນນັ້ນເຕັມໄປດ້ວຍຄວາມສັນຕິ ຈົນກະທັ່ງສອດແຈ້ງ**

(97:4)

ນີ້ຄືມະຫາຄຳພີແຫ່ງພຣະຜູ້ເປັນເຈົ້າ ຄຳພີແຫ່ງສາດສະໜາອິດສະລາມ ອັນເປັນແຫຼ່ງກຳເນີດສັນຕິພາບຫຼວງຫຼາຍນັ້ນຄື

- ສັນຕິພາບທີ່ປອດຈາກຄວາມເທັດ ແລະ ວິຊາມານທຸກປະການ
- ສັນຕິພາບທີ່ປອດຈາກອະບາຍະມຸກ ແລະ ຄວາມຜິດບາບທຸກປະການ
- ສັນຕິພາບທີ່ປອດຈາກຄວາມອະຍຸດຕິທຳ ແລະ ການລະເມີດຣຸກຣານທຸກປະການ
- ສັນຕິພາບທີ່ປອດຈາກການກົດຂີ່ ແລະ ການຮ່ວມມືສົມຄົບຄິດມຸ່ງຮ້າຍທຸກປະການ
- ສັນຕິພາບທີ່ປອດຈາກຄວາມຊົ່ວ ແລະ ຄວາມຊົ່ວຮ້າຍທຸກປະການ
- ສັນຕິພາບທີ່ປອດຈາກການຕັ້ງພາຄີ ແລະ ການອຸດຕະລິທຸກປະການ
- ສັນຕິພາບທີ່ປອດຈາກການປະຕິເສດ ແລະ ການສັບປີ້ນທຸກປະການ
- ສັນຕິພາບທີ່ປອດຈາກໂລກຮ້າຍ ແລະ ທຸກໄພທຸກປະການ
- ສັນຕິພາບທີ່ປອດຈາກການກະຊິບກະຊາບຂອງມານຮ້າຍ ແລະ ການລໍ້ລວງຂອງດັດຍາລ (ຕົວໂກງທີ່ຈະປາກົດຂຶ້ນກ່ອນວັນສິ້ນໂລກ)
- ສັນຕິພາບທີ່ປອດຈາກການທໍລະມານໃນໄຟນະລົກ ແລະ ທີ່ພັກອັນເລວຮ້າຍໃນປໍລະໂລກ

ບໍ່ເປັນທີ່ສົງໄສອີກວ່າ ສັນຕິພາບນັ້ນມີເສັ້ນທາງຫຼາກຫຼາຍທີ່ກຳເນີດຂຶ້ນຈາກການຊີ້ນຳຂອງອັລກຸຣອານ ໃນກອບທີ່ດຳເນີນໂດຍທ່ານສາສະນະທູດ (ຂໍຄວາມສັນຕິຈາກອັລລໍຮ໌ຈົ່ງມີແດ່ທ່ານ) ແລະປວງສາວົກທີ່ໄດ້ຮັບຄວາມໂປດປານ ລວມທັງບັນດາຜູ້ຕິດຕາມພວກ

ເຂົາຈົນຮອດວັນແຫ່ງການຕອບແທນ ນັ້ນຄື ເສັ້ນທາງທີ່ເປັນດ້ານຂອງການປະຕິບັດຕົວຈິງຂອງມະນຸດໃນການໃຊ້ທາງນຳຂອງອັລກຸຣອານແຫ່ງພຣະຜູ້ເປັນເຈົ້າ

ພຣະອົງໄດ້ຕຣັດໄວ້ວ່າ

﴿قَدْ جَاءَكُمْ مِنَ اللَّهِ نُورٌ وَكِتَابٌ مُبِينٌ، يَهْدِي بِهِ اللَّهُ مَنِ اتَّبَعَ رِضْوَانَهُ سُبُلَ السَّلَامِ وَيُخْرِجُهُمْ مِنَ الظُّلُمَاتِ إِلَى النُّورِ بِإِذْنِهِ وَيَهْدِيهِمْ إِلَى صِرَاطٍ مُسْتَقِيمٍ﴾ (المائدة : 15-16)

ຄວາມໝາຍວ່າ **ແທ້ຈິງໄດ້ມາເຖິງພວກເຈົ້າຈາກອັລລໍຣ໌ ຊຶ່ງແສງສະຫວ່າງ ແລະ ຄຳພີທີ່ຊັດແຈ້ງ ທີ່ອັລລໍຣ໌ຊົງໃຊ້ມັນຊີ້ທາງແກ່ບັນດາຜູ້ທີ່ປະຕິບັດຕາມຄວາມພໍໃຈຂອງພຣະອົງ ສູ່ເສັ້ນທາງແຫ່ງສັນຕິພາບ ແລະ ພຣະອົງຊົງນຳພວກເຂົາອອກຈາກຄວາມມືດມົນສູ່ແສງສະຫວ່າງດ້ວຍການອະນຸມັດຂອງພຣະອົງ ແລະ ພຣະອົງຊົງຊີ້ນຳພວກເຂົາສູ່ເສັ້ນທາງທີ່ທ່ຽງກົງ**

ນີ້ຄືສັນຕິພາບທີ່ສາດສະໜານີ້ໄດ້ກຳນົດໄວ້ໃນທຸກໆ ລະບອບການດຳເນີນຊີວິດຂອງມະນຸດ ...

☪ ສັນຕິພາບຂອງປັດເຈກຊົນ ແລະ ກຸ່ມພວກ

- ☪ ສັນຕິພາບຂອງປະເທດຊາດ ແລະ ໂລກທັງມວນ
- ☪ ສັນຕິພາບຂອງສະຕິປັນຍາ ແລະ ຈິດວິນຍານ
- ☪ ສັນຕິພາບຂອງຕົວຕົນ ແລະ ອະໄວຍະວະໃນຮ່າງກາຍ
- ☪ ສັນຕິພາບຂອງບ້ານ ແລະ ຄອບຄົວ
- ☪ ສັນຕິພາບຂອງສັງຄົມ ແລະ ປະຊາຊາດ
- ☪ ສັນຕິພາບໃນການມີຊີວິດ ແລະ ຫຼັງຄວາມຕາຍ
- ☪ ສັນຕິພາບໃນໂລກນີ້ ແລະ ໂລກໜ້າ

ເປັນສັນຕິພາບທີ່ແທ້ຈິງທີ່ມະນຸດຊາດບໍ່ເຄີຍພົບ ແລະ ບໍ່ມີວັນພົບນອກຈາກໃນສາດສະໜາອິດສະລາມນີ້ ສັນຕິພາບທີ່ບໍ່ມີຜູ້ໃດສາມາດຊາບຊຶ້ງເຖິງຂໍ້ເທັດຈິງຂອງມັນໄດ້ ນອກຈາກຜູ້ຄົນທີ່ເຄີຍຕ້ອງລີ້ມລົດສົງຄາມແຫ່ງຄວາມວຸ້ນວາຍ ແລະ ຫາຍນະທີ່ເກີດຈາກຄວາມເຊື່ອ ແລະ ກົດບັນຍັດໃນຍຸກອັນປ່າເຖື່ອນທີ່ຝັງເລິກຢູ່ໃນຊີວິດ

ແທ້ຈິງ ຍ່ອມບໍ່ເປັນວິໄສຂອງສຳນຶກທີ່ດີ ຖ້າຫາກຜູ້ໃດຈະນຳຄວາມຮຸນແຮງ ແລະ ການກໍ່ການຮ້າຍມາປະຕິດປະຕໍ່ ຫຼື ເຊື່ອມໂຍງກັບສາດສະໜາອິດສະລາມທີ່ປະກາດຢ່າງຊັດເຈນໃນຄຳພີອັລກຸຣອານວ່າ ຫ້າມຄາດຕະກຳຊີວິດມະນຸດນອກເສຍຈາກດ້ວຍເຫດທີ່ຖືກຕ້ອງຊັດເຈນຕາມຫຼັກບັນຍັດທາງສາດສະໜາ ແລະ ຜ່ານຂະບວນການຕັດສິນພິພາກສາ ອັລລໍຮ໌ໄດ້ຕຣັດວ່າ

﴿وَلا تَقْتُلُوا النَّفْسَ الَّتِي حَرَّمَ اللَّهُ إِلاَّ بِالْحَقِّ﴾ (الأنعام : 151)

ຄວາມວ່າ **ແລະພວກເຈົ້າຢ່າຂ້າຊີວິດໃດທີ່ອັລລໍຫ໌ໄດ້ຫ້າມໄວ້ ເວັ້ນແຕ່ດ້ວຍຄວາມຖືກຕ້ອງ (ດ້ວຍເຫດທີ່ອະນຸຍາດໃຫ້ກະທຳໄດ້)** (6:151)

ດ້ວຍເຫດນີ້ ບັນດາອຸລະມາ (ນັກວິຊາການອິສລາມ) ຈຶ່ງມີຄວາມເຫັນວ່າ ເປັນສິ່ງຕ້ອງຫ້າມທີ່ຈະຂ້າຄົນໃດກໍຕາມ ພຽງແຕ່ເພາະລາວບໍ່ແມ່ນຜູ້ສັດທາ ເພາະບໍ່ມີການບັງຄັບໃນການນັບຖືສາດສະໜາອິດສະລາມ

ອັລລໍຮ໌ໄດ້ຕຣັດວ່າ

﴿**لا إِكْرَاهَ فِي الدِّينِ**﴾ (سورة البقرة: 256)

ຄວາມວ່າ **ບໍ່ມີການບັງຄັບໃນການນັບຖືສາສະໜາ (ອິສລາມ)**(2:256)

**ບົດລົງໂທດສຳຫຼັບຜູ້ທຳລາຍສັນຕິພາບ**

ເພື່ອເປັນການຕອກຍ້ຳເຖິງການພິທັກສັນຕິພາບ ອິດສະລາມໄດ້ກຳນົດບົດລົງໂທດສຳລັບຜູ້ທີ່ກະທຳການໃດໆ ອັນຈະນຳໄປສູ່ການບັ່ນທອນສັນຕິພາບໃນສັງຄົມມະນຸດ ອາທິເຊັ່ນ ບົດລົງໂທດສຳລັບຜູ້ກໍ່ການທະເລາະວິວາດ ການລັກຂະໂມຍ ການຂ້າຄົນອື່ນ ແລະ ການລ່ວງລະເມີດທາງເພດ ເປັນຕົ້ນ

ອິດສະລາມຍັງກຳນົດໂທດອັນໜັກໜ່ວງກັບອາດຊະຍາກອນຜູ້ກໍ່ພະຍັນຕະລາຍຄວາມວຸ້ນວາຍ ແລະ ຄວາມບໍ່ສະຫງົບສຸກຕໍ່ຊີວິດຊັບສິນ ແລະ ກຽດຂອງມະນຸດ ອັລລໍຮ໌ໄດ້ຕຣັດວ່າ

﴿إِنَّمَا جَزَاءُ الَّذِينَ يُحَارِبُونَ اللَّهَ وَرَسُولَهُ وَيَسْعَوْنَ فِي الْأَرْضِ فَسَاداً أَنْ يُقَتَّلُوا أَوْ يُصَلَّبُوا أَوْ تُقَطَّعَ أَيْدِيهِمْ وَأَرْجُلُهُمْ مِنْ خِلافٍ أَوْ يُنْفَوْا مِنَ الأَرْضِ﴾ (المائدة : 33)

ຄວາມວ່າ **ແທ້ຈິງແລ້ວ ຜົນຕອບແທນຂອງບັນດາຜູ້ທີ່ກໍ່ສົງຄາມກັບອັລລໍຮ໌ ແລະ ສາດສະນະທູດຂອງພຣະອົງ ແລະ ພະຍາຍາມສ້າງຄວາມເສຍຫາຍເທິງໜ້າແຜ່ນດິນ ຄື (ການລົງໂທດດ້ວຍ) ການປະຫານຊີວິດ ຫຼື ຕຶງດ້ວຍໄມ້ກາງແຂນ ຫຼື ຕັດມືຕັດຕີນດ້ວຍການສະຫຼັບຂ້າງ ຫຼື ເນລະເທດອອກຈາກແຜ່ນດິນ** (5:33)

ສຸດທ້າຍນີ້ ຈຶ່ງຂໍເຊີນຊວນທຸກທ່ານ ບໍ່ວ່າຈະເປັນປັດເຈກຊົນ ອົງການລະດັບຊາດ ຫຼື ລະດັບທ້ອງຖິ່ນ ໂດຍສະເພາະຢ່າງຍິ່ງບັນດານັກວິຊາການທັງຫຼາຍ ຂໍໃຫ້ສຶກສາລາຍລະອຽດຂອງອິດສະລາມຢ່າງຖີ່ຖ້ວນໂດຍອາໄສອັລກຸຣອານ ແລະ ຄຳສັ່ງສອນຂອງທ່ານສາດສະດາ (ຂໍຄວາມຈຳເລີນ ແລະ ຄວາມສັນຕິຈົ່ງມີແດ່ທ່ານ) ໂດຍຜ່ານຕຳລາການອະທິບາຍຂອງນັກວິຊາການອິດສະລາມເຊິ່ງເປັນທີ່ຍອມຮັບ ບໍ່ແມ່ນສຶກສາຈາກແຫຼ່ງຂໍ້ມູນທີ່ບິດເບືອນດ້ວຍການແຊກຊຶມຂອງພວກຕາເວັນຕົກບາງພວກ ລວມທັງຜູ້ທີ່ບໍ່ຮູ້ຈິງກ່ຽວກັບອິດສະລາມ ເພາະແທ້ຈິງອິດສະລາມຄືສາດສະໜາທີ່ສາມາດສ້າງສັນຕິພາບ ແລະ ຄວາມປອດໄພໃຫ້ກັບມະນຸດທັງມວນ ແລະ ເຄີຍປັກທຸງແຫ່ງສັນຕິພາບໄດ້ສຳເລັດມາແລ້ວໃນປະຫວັດສາດຂອງມະນຸດຊາດ

ຊ່າງໜ້າເສຍໃຈເປັນຢ່າງຍິ່ງກັບບັນດາຜູ້ທີ່ຕັດສິນປະຕິເສດອິດສະລາມ ຫຼື ແມ້ກະທັ້ງສະແດງຄວາມກຽດຊັງ ໂດຍທີ່ບໍ່ໄດ້ສຶກສາ

ແລະ ເຂົ້າເຖິງແກ່ນແທ້ຂອງຄຳສອນອິດສະລາມເສຍກ່ອນ! ຂໍອັລລໍຮ໌ ຊົງຊີ້ນຳພວກເຂົາດ້ວຍເຖີດ

ໃນຂະນະດຽວກັນ ພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ຈະເຊີນຊວນໃຫ້ມີການສົນທະນາກັນລະຫວ່າງສາດສະໜາ ແລະ ການໂອ້ລົມທາງວິຊາການເພື່ອເປົ້າປະສົງອັນງົດງາມດ້ວຍວິທີການທີ່ດີທີ່ສຸດ

**ເຮົາຂໍເຊີນຊວນໃຫ້ທຸກຄົນນ້ອມຮັບອິດສະລາມ ແລະ ຄວາມໂປດປານຂອງອັລລໍຮ໌ອັນເປັນຫົນທາງແຫ່ງສັນຕິພາບທີ່ແທ້ຈິງໂດຍພ້ອມພຽງກັນ**

ອິດສະລາມຄືສາດສະໜາດຽວທີ່ໄດ້ຮັບການພິທັກຈາກພຣະຜູ້ເປັນເຈົ້າໃຫ້ຄົງຢູ່ໂດຍປອດຈາກການບິດເບືອນ ແລະ ການປ່ຽນແປງ ອັລກຸຣອານອັນເປັນຄຳພີທີ່ຖືກປະທານໂດຍອັລລໍຮ໌ ແລະ ໄດ້ຮັບການພິທັກຮັກສາຈາກພຣະອົງບໍ່ໃຫ້ມີການແກ້ໄຂປອມແປງໃດໆ ທັງສິ້ນ ອັລກຸຣອານທີ່ມີຢູ່ທຸກວັນນີ້ຄື ອັລກຸຣອານສະບັບດຽວກັນກັບທີ່ຖືກປະທານລົງມາໃຫ້ທ່ານສາດສະທູດມຸຮຳມັດ (ຂໍຄວາມຈຳເລີນ ແລະ ສັນຕິມີແດ່ທ່ານ) ຕັ້ງແຕ່ 1,400 ກວ່າປີມາແລ້ວ ເປັນມະຫາຄຳພີທີ່ບໍລິສຸດ ບໍ່ມີການຄະເຄົ້າປະປົນດ້ວຍອາລົມໃຝ່ຕ່ຳຂອງມະນຸດ ບໍ່ມີຄວາມເທັດທັງເບື້ອງໜ້າ ແລະ ເບື້ອງຫຼັງ ທະວ່າເປັນການປະທານຈາກອົງອະພິບານຜູ້ຊົງປຣີຊາ ແລະ ຊົງຮອບຮູ້ຍິ່ງ

ຂໍໄດ້ສະດັບຟັງ ແລະ ຕອບຮັບຄຳເຊີນຊວນຂອງອັລລໍຮ໌ສູ່ສັນຕິພາບທີ່ແທ້ຈິງ ແລະ ຄອບຄຸມ ເຊິ່ງພຣະອົງໄດ້ຕຣັດໄວ້ວ່າ

﴿يَا أَيُّهَا الَّذِينَ آمَنُوا ادْخُلُوا فِي السِّلْمِ كَافَّةً وَلا تَتَّبِعُوا خُطُوَاتِ الشَّيْطَانِ إِنَّهُ لَكُمْ عَدُوٌّ مُبِينٌ﴾ (البقرة: 208)

ຄວາມວ່າ **ໂອ້ ບັນດາຜູ້ສັດທາທັງຫຼາຍ ຈົ່ງເຂົ້າຢູ່ໃນຄວາມສັນຕິໂດຍທົ່ວທັງໝົດ ແລະ ຈົ່ງຢ່າຕາມຍ່າງກ້າວຂອງໄຊຕອນ ແທ້ຈິງມັນຄືສັດຕູທີ່ຊັດແຈ້ງຂອງພວກເຈົ້າ** (2:208)

ນີ້ຄືຄໍາເຊີນຊວນສູ່ສັນຕິພາບອັນທ່ຽງແທ້ ບໍ່ແມ່ນດັ່ງຄວາມເປັນຈິງໃນປັດຈຸບັນທີ່ເຈັບປວດເຊິ່ງກໍາຫຼັງເກີດຂຶ້ນໃນທຸກມຸມຂອງໂລກ ອັນເກີດຈາກແຜນການຮ້າຍຂອງເຫຼົ່າຜູ້ປະຕິເສດທີ່ຕ້ອງການໃຫ້ສັງຄົມໂລກ ໂດຍສະເພາະປະເທດອິດສະລາມ ຫຼື ສັງຄົມອິດສະລາມຕ້ອງຢູ່ໃນພາວະກໍ້າກຶ່ງລະຫວ່າງ “ບໍ່ແມ່ນສັນຕິພາບ” ແລະ “ບໍ່ແມ່ນສົງຄາມ”

**ໂອ້ ອັລລໍຮ໌ ຂ້າພະອົງໄດ້ປະກາດແລ້ວ ຂໍພຣະອົງຊົງເປັນສັກຂີດ້ວຍທອນ! ໂອ້ ອັລລໍຮ໌ ໄດ້ໂປດຊີ້ນໍາແກ່ພວກຂ້າພຣະອົງ ແລະ ແກ່ໝູ່ພວກຂອງພວກຂ້າພຣະອົງທັງຫຼາຍ ເພາະໂດຍແທ້ແລ້ວພວກເຂົານັ້ນບໍ່ຮູ້ແທ້ໆ!!**

# ບົດສົ່ງທ້າຍ

ໃນຕອນທ້າຍນີ້ ຜູ້ຂຽນໃຄ່ສະຫຼຸບວ່າສັນຕິພາບໃນອິດສະລາມນັ້ນ ຖືກປະທານລົງມາຈາກເອກອົງອັລລໍຣ໌ຜູ້ຊົງອໍານາດ ມະຫາບໍລິສຸດ ມະຫາສານຕິ ຜູ້ທີ່ດໍາລົງໄວ້ຊຶ່ງຄວາມປອດໄພ ຜູ້ຊົງຊີ້ນໍາບຸກຄົນທີ່ຂວັນຂວາຍຄວາມໂປດປານອັນເປັນຫົນທາງແຫ່ງສັນຕິພາບ ພຣະອົງໄດ້ແຈ້ງຂ່າວດີສໍາລັບບ່າວທີ່ນອບນ້ອມ ແລະ ສະວາມິພັກແດ່ຄວາມກຽງໄກຂອງພຣະອົງ ບັນດາສັດທາຊົນທີ່ປະກອບແຕ່ຄຸນງາມຄວາມດີ ມຸ່ງຮັກສາສັນຕິພາບ ແລະ ເຜີຍແຜ່ຄວາມສະຫງົບສຸກ ພວກເຂົາໄດ້ຮັບການຕອບແທນຈາກອັລລໍຣ໌ດ້ວຍສວນສະຫວັນດິນແດນແຫ່ງຄວາມສັນຕິສຸກ ໃນວັນທີ່ພວກເຂົາໄດ້ພົບກັບພຣະອົງຢ່າງສັນຕິ ພວກເຂົາຈະໄດ້ຮັບການເຊີນຊວນສູ່ສະຫວັນ ແລະ ໃຊ້ຊີວິດສະຫງົບສຸກໃນວິມານນັ້ນຢ່າງນິລັນດອນ ດ້ວຍຄວາມໂປດປານຂອງພຣະອົງ

ການທັກທາຍຂອງພວກເຂົາໃນສະຫວັນນັ້ນຄືການກ່າວສະລາມ ອັນເປັນຄໍາກ່າວແຫ່ງຄວາມສັນຕິ ພວກເຂົາ ແລະ ເຫຼົ່າພັນລະຍາຈະພິງຫຼັງເທິງຕຽງພາຍໃຕ້ຮົ່ມເງົາອັນແສນສະບາຍ ພວກເຂົາຈະໄດ້ຮັບການບໍລິການດ້ວຍອາຫານອັນຫຼາກຫຼາຍ ແລະ ທຸກຢ່າງຕາມທີ່ພວກເຂົາປາຖະໜາ

**"ສະລາມ"** ອັນເປັນຄຳລັດທັກທາຍຈາກພຣະເຈົ້າຜູ້ຊົງເມດຕາ ແລະ ພວກເຂົາຈະວິງວອນວ່າ "ມະຫາບໍລິສຸດເຖີດ ພຣະອົງຜູ້ເປັນພຣະເຈົ້າຂອງພວກເຮົາ" ການທັກທາຍຂອງພວກເຂົາຄືການກ່າວສະລາມ ແລະ ສຸດທ້າຍພວກເຂົາຈະວິງວອນຕໍ່ອັລລໍຮ໌ວ່າ "ມວນການສະດຸດີເປັນອະພິສິດແຫ່ງອັລລໍຮ໌ຜູ້ອະພິບານແຫ່ງສາກົນຈັກກະວານ"

﴿قُلِ الْحَمْدُ لِلَّهِ وَسَلَامٌ عَلَى عِبَادِهِ الَّذِينَ اصْطَفَى آللَّهُ خَيْرٌ أَمَّا يُشْرِكُونَ﴾ (النمل : 59)

ຄວາມວ່າ **ຈົ່ງກ່າວເຖີດ ບັນດາການສັນລະເສີນເປັນສິດທິຂອງອັລລໍຮ໌ ແລະ ຄວາມສານຕິຈົ່ງມີແດ່ປວງບ່າວຂອງພຣະອົງ ຜູ້ຊຶ່ງພຣະອົງຊົງຄັດເລືອກແລ້ວ (ສຳນຶກເຖີດວ່າ) ອັລລໍຮ໌ນັ້ນດີກວ່າ ຫຼືວ່າສິ່ງທີ່ພວກເຂົາຕັ້ງເປັນພາຄີ?** (27:59)

أقول قولي هذا وأستغفر الله لي ولكم، وأفوض أمري إلى الله إن الله بصير بالعباد، وصلى الله على نبينا محمد وعلى أله وصحبه وسلم، سبحان ربك رب العزة عما يصفون وسلام على المرسلين والحمد لله رب العالمين